# 占芭 ຈໍາປາ



## ວັດທະນະທຳຈີນທີ່ກ້າວສູ່ສາກົນລະໂລກ

## ຢູນນານປ່ຽມລົ້ນໄປດ້ວຍຫຼາຍສີສັນ

## ເປັນແດນສະຫວັນທັດສະນາຈອນ

ລາຄາ: 13000 ກີບ ¥10

ISSN 1673-3266

6/2006

总第10期

# MEKONG HOTEL

## 湄公酒店

服务中国人，万象有湄公；入住湄公，如在家中

# ໂຮງແຮມ ແມ່ຂອງ




湄公酒店，是中老合资并成立于 1994 年。酒店拥有四栋建筑楼，是首都万象市最大的建筑楼群之一。楼内设有：标房、商务公寓和写字间等。配套服务项目：北京饭庄、夜总会、卡拉 OK 包房、商务中心、会议室、洗熨房、停车场等。全部客房配有：空调、中餐、中文电视、电话、冰箱、卫生间等服务设施。

湄公酒店位于万象市中心，距商业区仅 500 米，离机场 2 公里。前临老挝国家重要的交通枢纽 13 号公路，后依东南亚名河—湄公河 300 米，与泰国隔河相望，地理位置优越，交通便利。客房宽敞明亮，舒适安全，设备齐全，并配有中英文服务和 24 小时保安服务，是商务、旅游、会议、办公及中长期居住和设立办事处的最佳场所。



## Mekong Hotel.We’ve got it all!

Mekong Hotel offers excellent facilities in a superb location,with the mighty Mekong river flowing just be-hind and at a reasonable price.

Our facilities includes hotel rooms,furnished apartment,office space,the Beijing Restaurant,Friendship Night Club,Karaoke and a fully equipped business center.Free transfer service from and to airport both ways.

Whether you need somewhere to sleep,work or relax,the Mekong Hotel is a ideal place.







Address:Luangprabang Rd.Tel:(856 － 21)212937-9　Fax: (856 － 21)212822
E － mail:sales@mekong-ht.com,Website:www.mekong-ht.com










ບໍລິການນໍາທ່ຽວພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ຍົນພາຍໃນແລະຕ່າງປະເທດ

ບໍລິການຂາຍປີ້ລົດໄຟ ລົດບັດໄປປະເທດໄທ,ຫວຽດນາມ

ບໍລິການເຊົ່າລົດເກັ໋ງ ລົດຈິບຖ0. ລົດຕູ້12,15ບ່ອນນັ່ງ ລົດບັດ25,35,45 ບ່ອນນັ່ງ

ບໍລິການແລ່ນວີຊາໄປຕ່າງປະເທດ





ສົນໃຈເຊີນຕິດຕໍ່: ບໍລິສັດທ່ອງທ່ຽວຄໍາຫລ້າຈໍາກັດ

042/3 ຖະໜົນຝ້າງຸ່ມ ບ້ານມີໄຊ ເມືອງຈັນທະບູລີ

ແຂວງນະຄອນຫລວງວຽງຈັນ ສ.ປ.ປ.ລາວ

Tel/Fax: (856-21) 218677, 218107

Mobile: (856-20) 5606000, 5620161, 5519334

E-mail: khamlatours39@yahoo.com

www.khamla.com

| Inbound Tour | Outbound Tour |
|---|---|
| We provide: | We provide: |
| Tour in Vientiane | Tour to China |
| Tour in VangViene | Tour to Malaysia |
| Tour in Luangprabang | Tour to VietNam |
| Tour in Pakze | Tour to Cambodia |
| Tour in Northern Laos | Tour to Thailand |
| Tour in Southern Laos | Tour to asia |

# ສາລະບານ

6/2006 总第10期




## 【特 别 报 道】ຂ່າວພິເສດ

04 ວັດທະນະທຳຈີນທີ່ກ້າວສູ່ສາກົນລະໂລກ

## 【中 国 之 窗】ປ່ອງຢ້ຽມເມືອງຈີນ



08 ທ່ານຫູຈິນທາວປະທານປະເທດຈີນຢ້ຽມຢາມສະຫະລັດອາເມລິກາປະສົບຜົນຢ່າງໃຫຍ່ຫລວງ
12 ປະເທດຈີນກັບປະເທດອາຊີຈະຮ່ວມມືສະໜັບສະໜູນເຊິ່ງກັນແລະກັນຢ່າງແໜ້ນແຟ້ນກວ່າເກົ່າ
14 ຈັດ "ວັນເຄື່ອນໄຫວການກຸສົນຂອງເດັກນ້ອຍຈີນ"
16 ສປຈີນອອກແຮງເພື່ອບັນລຸການພັດທະນາພະລັງງານແລະອະນຸຮັກສິ່ງແວດລ້ອມໄດ້ຮັບຜົນທັງສອງດ້ານ
18 ສປຈີນສ້າງພື້ນຖານເຝິກແອບກິລາສັງລວມສຳລັບຄົນພິການ




霜天竞自由　　白保兴 摄

主　　办：云南省对外文化交流协会
编 辑 出 版：《占芭》杂志社
总　顾　问：丹　增 晏友琼 梁公卿 刘　平 苏正国
总　编　辑：郑　明
副 总 编 辑：戴世平
执行副总编辑：杨　云
编 辑 总 监：董保延
责 任 编 辑：苏雯雯
美 术 总 监：祝　群
发 行 主 任：禹正玉
老 文 译 审：黄　冰
翻　　译：黄　冰　白厚启
老 文 录 入：白厚启

发 行 范 围：国内外公开发行
出 版 日 期：每月五日
邮 发 代 号：64-36
国际标准刊号：ISSN 1673-3266
国内统一刊号：CN53-1200 / D

ຈັດທຳໂດຍ: ສະມາຄົມແລກປ່ຽນວັດທະນະທຳກັບຕ່າງປະເທດແຂວງຢູນນານແຫ່ງ ສ ປ ຈີນ
ຮຽບຮຽງພິມຈຳໜ່າຍ: ສຳນັກພິມວາລະສານ《ຈຳປາ》
ປະທານທີ່ປຶກສາ: ຕານເຈັນ ຢຽນຢຽວສົງ ແລງກົງຊິງ ຫຼິວພິງ ຊູເຈີນກົ່ວ
ຫົວໜ້າບັນນາທິການ: ເຈີນໝິງ
ຮອງຫົວໜ້າບັນນາທິການ: ຕ້າຍສືພິງ
ຮອງຫົວໜ້າບັນນາທິການບໍລິຫານ: ຢາງຢູນ
ຜູ້ຄຸ້ມງານ ບັນນາທິການ: ຕົ່ງປາວຢຽນ
ບັນນາທິການປະຈຳ: ຊູເວີນເວີນ
ຜູ້ຄຸ້ມງານຝ່າຍສິລະປະ: ຈູ້ສິນ
ຫົວໜ້າພິມຈຳໜ່າຍ ຢູຍເຈິງຢູຍ
ບັນນາທິການ ພາສາລາວ: ຮວງປິນ
ຜູ້ແປພາສາ: ຮວງປິນ ປາຍໂຫສີ
ຜູ້ພິມພາສາລາວ: ປາຍໂຫສີ

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673-3266
ລະຫັດວາລະສານປະເທດຈີນ: CN53-1200/D

http://la.yunnan.cn
E-mail: ynzhanba@163.com
ສະຖານທີ່: ເບີເຮືອນ 76 ຖະໜົນຮວາຊານໝານລູ່ນະຄອນຄຸນໝິງແຂວງຢູນນານ
ລະຫັດໄປສະນີ: 650021　ເບີໂທ: 0086-0871-3621079　ໂທລະເລກ: 0086-0871-3621069

## [环 球 扫 描] ສະແກນຮອບໂລກ




19 ອອກແຮງສ້າງລະບົບພັດທະນາອາຊີສີຂຽວ

22 ພະຍາຍາມນຳໃຊ້ການເຄື່ອນໄຫວກິລາສົ່ງເສີມສັນຕິພາບແລະການພັດທະນາ

24 ທະນາຄານໂລກຮຽກຮ້ອງໃຫ້ນຳໃຊ້ພະລັງງານທີ່ຟື້ນຄືນໄດ້ໃຫ້ຫລາຍ


## [中 老 交 往] ການໄປມາຫາສູ່ກັນລະຫວ່າງຈີນ-ລາວ


25 ໂຮງຮຽນຫລໍ່ຫລອມໂລຫະວິຊາສະເພາະຊັ້ນສູງຄຸນໝິງຮ່ວມມືສ້າງໂຮງຮຽນກັບລາວ

26 ການຕິດຕໍ່ໄປສະນີໂດຍກົງລະຫວ່າງຈີນກັບລາວໄດ້ປະກົດເປັນຈິງ


## [旅 游 纵 横] ການທ່ອງທ່ຽວທັດສະນາຈອນ




27 ພູຜາແມ່ນ້ຳລຳເຊຸກູ່ຍຫຼີນເປັນເອກໃຕ້ລຸ່ມຟ້າ

30 ທ່ຽວຈີນຕ້ຽນ(ຜາສາດຄຳ)ທີ່ມີລົດຊາດບູຮານອະມະຕະ


## [老 挝 印 象] ພາບປະທັບໃນເມືອງລາວ


32 ເມືອງລາວ: "ສະບາຍດີ"


## [文 化 博 览] ລຽບຊົມວັດທະນະທຳ


34 ສິລະປະຫັດຖະກຳພັນປີພຸ່ງແສງປະກາຍສະຫງ່າງາມ

--ທ່ຽວຊົມຜະລິດພັນຫັດຖະກຳເຄື່ອງເງິນບ້ານຊິນຮວາ


## [今 日 云 南] ຢູນນານໃນວັນນີ້




36 ຢູນນານປ່ຽນລົ້ນໄປດ້ວຍຫຼາຍສີສັນ ເປັນແດນສະຫວັນທັດສະນາຈອນ

40 ຕາກ້ອງສ່ອງພິທິມະໂຫລານສະຫງ່າ ສຳຜັດຮີດຄອງພື້ນແຜ່ນຢູນນານ

44 ທາງສາຍດ່ວນນີເວດວິທະຍາດົງຝົນແຖບຮ້ອນໄດ້ສ້າງຂຶ້ນຢູ່ຢູນນານ

46 ແຂວງຢູນນານຍ້ອງຍໍບຸກຄະລາກອນສິລະປະວັນນະຄະດີ


## [东 盟 快 讯] ຈັບກະແສຂ່າວອາຊຽນ


48 ການຮ່ວມສະແດງວັດທະນະທຳຈີນ--ອາຊຽນໄດ້ຈັດຂຶ້ນທີ່ອົງກໍວັດໃນກຳປູເຈຍ

50 ລັດຖະມົນຕີວ່າການຕ່າງປະເທດອາຊຽນຮ່ວມປຶກສາຫາລືເພື່ອຮັບມືກັບສິ່ງທ້າທາຍໃນອະນາຄົດ

52 ຈີນໄດ້ສະໜອງການບໍລິການເປັນຢ່າງດີໃຫ້ແກ່ນັກສຶກສາປະເທດອາຊຽນ.


## [民 族 风 情] ຮີດຄອງພື້ນແຜ່ນຂອງຊົນເຜົ່າ




56 ໝຽນກາວ(ເຂົ້າໜົມບຸນປີໃໝ່)----ອາຫານຊົນເຜົ່າຢູນນານ

58 ຂັບເຕັ້ນຊົນເຜົ່າຍີ່ປ່ຽມລົ້ນໄປດ້ວຍອາລົມຮັກໄຄ່ໄມຕີ

60 ຕາລີມີຕະຫລາດນັດເດືອນສາມ


## [为 您 服 务] ບໍລິການທ່ານ


62 ກິນພຶດຜັກໝາກໄມ້ດິບຄວນລະມັດລະວັງ 3 ປະການ


## [学 汉 语] ຮຽນພາສາຈີນ


64 ກິນເຂົ້າເຊົ້າ



走向世界的中华文化

一场场富有中国特色的文化活动，一件件饱含东方神韵的艺术作品……近年来，不断迈开大步“走出去”的中华文化，如同一道道盛宴，让各国人民充分领略到了中国文化魅力，让世界对当代中国有了更新、更深的了解和认识。

# ວັດທະນະທຳຈີນທີ່ກ້າວສູ່ສາກົນລະໂລກ







ໃນບໍ່ເທົ່າໃດປີມານີ້, ວັດທະນະທຳຈີນເຊິ່ງມີການເຄື່ອນໄຫວວັດທະນະທຳທີ່ມີສີສັນພິເສດຂອງຈີນແລະສິລະປະກຳທີ່ປ່ຽມລົ້ນໄປດ້ວຍລົດຊາດທຳນອງອາລົມຈິດຂອງພາກຕາເວັນອອກ, ໄດ້ຢ່າງບາດກ້າວ "ອອກຈາກປະເທດ" ຢ່າງຕໍ່ເນື່ອງລຽນຕິດ, ເພື່ອສະແດງບົດບາດ ປຽບເໝືອນອາຫານຫລາຍເຍື່ອງໃນພາເຂົ້າງານລ້ຽງໃຫ້ປະຊາຊົນບັນດາປະເທດຊົມລົດຊາບຊຶມສະເໜດຶງດູດຈູງໃຈຂອງຈີນ, ໃຫ້ຊາວໂລກຮັບຮູ້ເຂົ້າໃຈປະເທດຈີນໃນຍຸກສະໄໝນີ້ເປັນຄັ້ງໃໝ່ແລະເລິກເຊິ່ງກວ່າເກົ່າຕື່ມອີກ.

## ການເຄື່ອນໄຫວແລກປ່ຽນວັດທະນະທຳຂະໜາດໃຫຍ່ກັບຕ່າງປະເທດໄດ້ປະກົດຮ້ອຍສີພັນສັນຢ່າງຕິດຕໍ່ໜໍ່ເນື່ອງ

ເດືອນຕຸລາປີ 2005, "ວັດທະນະທຳຈີນ" ໄດ້ຈັດຂຶ້ນຢູ່ສະຫະລັດອາເມລິກາປະສົບຜົນສຳເລັດ. ໃນໄລຍະເວລາວັນວັດທະນະທຳໜຶ່ງເດືອນນັ້ນ ສິລະປະຍອດແຍ້ອັນເປັນມູນເຊື້ອດັ້ງເດີມຈີນເຊັ່ນ: ງິ້ວປັກກິ່ງ, ດົນຕີພື້ນເມືອງ, ລະຄອນຕຸ໊ກກະຕາ, ໜັງບັກຕື້ ແລະກາຍະສິນ, ຮູບການສິລະປະຍຸກສະໄລເຊັ່ນ: ເປຍໂນ, ດົນຕີປະສານສຽງ, ລະບຳສະໄໝ, ຮູບເງົາ, ດົນຕີຕີເສບແລະການສະແດງດອກໄຟໄຮເທັກຕະຫຼອດຮອດການເຄື່ອນໄຫວວາງສະແດງທາງວັດທະນະທຳຄື: ການວາງສະແດງຮູບປັ້ນແລະແກະສະຫຼັກ,









ພາບຖ່າຍ, ເສື້ອຜ້າອາພອນ, ສີລະປະຕົກແຕ່ງແລະຕະຫຼາດວັດທະນະທຳປັກກິ່ງເກົ່າແກ່ ກໍ່ໄດ້ຮັບຄວາມນິຍົມຊົມເຊີຍຈາກຊຸມຊົນໃນແຫ່ງຕ່າງ ໆຢ່າງສຸດຊຶ້ງ.

ການເຄື່ອນໄຫວປີວັດທະນະທຳຈີນ--ຝະລັ່ງຊຶ່ງໄດ້ສຳເລັດລົງຢ່າງງົດງາມໃນເດືອນກັນຍາປີ 2005 ນັ້ນ ກໍ່ເສຍເວລາເກືອບສອງປີ, ໄດ້ຈັດລາຍການ 700ກວ່າລາຍການ, ມັນເກືອບກວມທົ່ວແດນຝະລັ່ງ. ເດືອນຕຸລາປີ 2005, ພາຍໃຕ້ການສະໜັບສະໜູນຂອງລັດຖະບານຈີນ--ໂຮນລັງສອງປະເທດ, ອົງການວັດທະນະທຳໂຮນລັງ 30 ແຫ່ງໄດ້ນຳໜ້າຮ່ວມກັນຈັດງານວັດທະນະທຳຈີນເປັນເວລາ 1 ເດືອນຢູ່ທີ່ໂຮງຄອນເສີດອຳສະເຕີດຳ (Amsterdam)ທີ່ມີຊື່ສຽງເລື່ອງລືໃນໂລກ, ໜັງສືພິມແລະວາລະສານໂຮນລັງ 94 ແຫ່ງໄດ້ລົງພິມຂ່າວກ່ຽວກັບການເຄື່ອນໄຫວດັ່ງກ່າວ 270 ກວ່າໜ້າຂ່າວ....

ໃນວາລະດີຖີຂຶ້ນປີໃໝ່, ການເຄື່ອນໄຫວແລກປ່ຽນວັດທະນະທຳຂະໜາດໃຫຍ່ເປັນຕົ້ນຄື: "2006 ຈີນຢູ່ລອນດອນ", ງັນຮູບເງົາຈີນທີ່ປາຣີສະໄໝທີ 2, "ການເຄື່ອນໄຫວສະແດງວັດທະ

ນະທຳຈີນ "ທີ່ອີຕາລີແລະການແລກປ່ຽນວັດທະນະທຳຈີນ--ເຢຍລະມັນທີ່ແປກແລວ, ຈັ່ງແມ່ນມາກມາຍຫຼາຍຫຼາກຈົນເບິ່ງບໍ່ໄຄວ່.

ນອກຈາກຈັດການວາງສະແດງການເຄື່ອນໄຫວຄັ້ງໃຫຍ່ແລ້ວຍັງມີການເຄື່ອນໄຫວຂະໜາດກາງແລະຂະໜາດນ້ອຍຈົນນັບບໍ່ຖ້ວນ, ເຮັດໃຫ້ຄົນທັງຫຼາຍປະຊິດສຳຜັດວັດທະນະທຳດັ້ງເດີມແລະສິລະປະຍຸກສະໄໝຈີນ, ນັບແຕ່ອົງການຈັດຕັ້ງທາງການຮອດຝ່າຍມະຫາຊົນ.

## ສູນວັດທະນະທຳນອກປະເທດກາຍເປັນພື້ນຖານເຜີຍແຜ່ວັດທະນະທຳຈີນ

ປີ 2005, ສປຈີນໄດ້ເຊັນບົດບັນທຶກຄວາມເຂົ້າໃຈຕັ້ງສູນວັດທະນະທຳເຊິ່ງກັນແລະກັນກັບເມັກຊິກແລະແອັດສະປາຍ, ແລະເລີ່ມເຈລະຈາເລື່ອງຕັ້ງສູນວັດທະນະທຳເຊິ່ງກັນແລະກັນກັບປະເທດໄທແລະຍີ່ປຸ່ນ. ວິທະຍາຄານຂົງຈື້ທີ່ສປຈີນຕັ້ງຂຶ້ນຢູ່ແຫ່ງຕ່າງ ໆໃນໂລກເພື່ອສິດສອນພາສາຈີນເກືອບເຖິງ 100 ຫຼັງ.



ຊ່ວງປີ 2005, ສູນວັດທະນະທຳທີ່ພົວພັນກັບຕ່າງປະເທດ 6 ແຫ່ງຂອງຈີນກໍ່ໄດ້ຈັດການເຄື່ອນໄຫວປະເພດຕ່າງ ໆ 800 ກວ່າລາຍ, ຂົງເຂດທາງເນື້ອໃນມີການພົວພັນເຖິງການເມືອງ, ເສດຖະກິດການຄ້າ, ວິທະຍາສາດການສຶກສາ, ສິລະປະວັນນະຄະດີ, ມວຍວູສູ, ແພດແຜນໂບຮານຈີນແລະຮີດຄອງປະເພນີພື້ນເມືອງເປັນຕົ້ນ, ຊຶ່ງໄດ້ຮັກສາພະລັງສະທ້ອນພາບແລະໂຄສະນາເຜີຍແຜ່ວັດທະນະທຳຈີນຢູ່ແຫ່ງຕ່າງ ໆຢ່າງສືບເນື່ອງບໍ່ຢຸດຢັ້ງ. ການຕັ້ງສູນວັດທະນະທຳຈີນ, ອຳນວຍໃຫ້ຈີນສ້າງພື້ນຖານເຜີຍແຜ່ວັດທະນະທຳເປັນປະຈຳຢູ່ແຫ່ງຕ່າງ ໆ ໃນໂລກ.

## ການແຂ່ງຂັນວັດທະນະທຳນານາຊາດຄັ້ງໃຫຍ່ໄດ້ປະກົດ"ພາບພົດຈີນ"ລຽນຕິດ

ໃນການແຂ່ງຂັນວັດທະນະທຳນາ ໆຊາດປະເພດຕ່າງ ໆ ທີ່ຈັດຂຶ້ນໃນຊຸມປີມໍ່ ໆມານີ້ ເກືອບຈະໄດ້ເຫັນ "ພາບພົດ "ນັກເລືອກເຟັ້ນຂອງຈີນຢູ່ທົ່ວທຸກແຫ່ງຫົນ, ທັກສະສີມືອັນພິດສະດານຂອງນັກເລືອກເຟັ້ນຈີນໄດ້ຮັບຄວາມນິຍົມຊົມຊອບຈາກຊຸມຊົນບັນດາປະເທດຢ່າງສຸດຊຶ້ງ.

"ສິລະປະມູຄະມູວິວອູເອີຊິນຈຽງຂອງຈີນ "ທີ່ສປຈີນຮ້ອງຂໍແລະ "ຂັບລຳທ້ອງຖິ່ນທຳນອງເຈົ້າເຫຼົ່າ "ທີ່ຮ່ວມກັນກັບປະເທດມົງໂກນຮ້ອງຂໍນັ້ນໄດ້ຖືກບັນຈຸຮັບຮອງເປັນ "ຕົວແທນວັນນະກຳມໍລະດົກອະວັດຖຸແລະທາງປາກເປົ່າມະນຸດ ", ໃນຕົວແທນວັນນະກຳ 90 ລາຍຂອງທົ່ວໂລກນັ້ນ, ຈີນມີທຳນອງຂັບຄຸນສີ, ສິລະປະພິນດີດບູຮານ, ສິລະປະມູຄະມູວິວອູເອີຊິນຈຽງແລະຂັບລຳທ້ອງຖິ່ນທຳນອງເຈົ້າເຫຼົ່າເປັນຕົ້ນ 4 ລາຍ, ຍອດຈຳນວນຕົວແທນວັນນະກຳ ນອນຢູ່ອັນດັບ 1 ໃນໂລກ. ຈີນຍັງເຂົ້າຮ່ວມເຮັດສົນທິສັນຍາສາກົນທີ່ສຳຄັນ ສອງສະບັບໃນອົງການຢູແນັສໂກສະຫະປະຊາຊາດເຊັ່ນ: 《ສົນທິສັນຍາອະນຸຮັກມໍລະດົກວັດທະນະທຳອະວັດຖຸ》ແລະ《ສົນທິສັນຍາອະນຸຮັກວັດທະນະທຳທີ່ສະແດງຫຼາຍຮູບແບບ》. ສົນທິສັນຍາໄດ້ສັງລວມເນື້ອໃນສົນໃຈຂອງຝ່າຍຈີນ, ຍິ່ງມີຜົນອຳນວຍແກ່ການປົກປັກຮັກສາວັດທະນະທຳມູນເຊື້ອ, ພັດທະນາກິດຈະການວັດທະນະທຳແລະຊັບສິນວັດທະນະທຳ ຕະຫຼອດຮອດເຂົ້າຮ່ວມການຮ່ວມມືວັດທະນະທຳສາກົນ.

# ທ່ານຫູຈິນທາວປະທານປະເທດຈີນຢ້ຽມຢາມສະຫະລັດອາເມລິກາປະສົບຜົນຢ່າງໃຫຍ່ຫລວງ





## 中国国家主席胡锦涛访问美国取得重大成果

中国国家主席胡锦涛应美国总统布什的邀请，对美国进行了国事访问。美国方面高度重视这次访问，给予热情友好的接待。这次访问是在中国和平发展备受世界关注、中美关系发展面临新的机遇的背景下进行的，是一次具有里程碑意义的访问。在中美双方共同努力下，访问取得了重要成果。

ທ່ານຫູຈິນທາວ ປະທານປະເທດຈີນໄດ້ເດີນທາງໄປຢ້ຽມຢາມສະຫະລັດອາເມລິກາທາງລັດຖະກິດຕາມຄຳເຊີນຂອງທ່ານບຸສ ປະທານາທິບໍດີສະຫະລັດອາເມລິກາ. ຝ່າຍອາເມລິກາເອົາໃຈໃສ່ຕໍ່ການຢ້ຽມຢາມຄັ້ງນີ້ເປັນຢ່າງສູງ, ໄດ້ຕ້ອນຮັບດ້ວຍໄມຕີຈິດມິດຕະພາບຢ່າງອົບອຸ່ນ. ການຢ້ຽມຢາມຄັ້ງນີ້ແມ່ນດຳເນີນໄປພາຍໃຕ້ພູມຫຼັງປະເຊີນກັບກາລະໂອກາດໃໝ່ທີ່ປະເທດຈີນກຳລັງພັດທະນາໂດຍສັນຕິຊຶ່ງຊາວໂລກສົນໃຈເປັນຢ່າງຍິ່ງການພັດທະນາສາຍພົວພັນລະຫວ່າງຈີນ--ອາເມລິກາ, ມັນເປັນການຢ້ຽມຢາມທີ່ມີຄວາມໝາຍເປັນຂີດໝາຍຄັ້ງໜຶ່ງ, ໂດຍພາຍໃຕ້ຄວາມພະຍາຍາມຂອງສອງກ້ຳສອງຝ່າຍລະຫວ່າງຈີນ--ອາເມລິກາ, ການຢ້ຽມຢາມໄດ້ປະສົບຜົນຢ່າງໜັກແໜ້ນ.

## ຊຸກຍູ້ສົ່ງເສີມການພົວພັນຮ່ວມມືສ້າງສັນລະຫວ່າງຈີນ--ອາເມລິກາຢ່າງຮອບດ້ານ

ຈີນ--ອາເມລິການັບວ່າເປັນປະເທດທີ່ມີຜົນສະທ້ອນສຳຄັນຍິ່ງໃນໂລກ, ຊາວໂລກສົນໃຈນຳສາຍພົວພັນຂອງສອງປະເທດ. ໄລຍະການຢ້ຽມຢາມຄັ້ງນີ້, ປະທານປະເທດຈີນຫູຈິນທາວໄດ້ກ່າວເນັ້ນຫຼາຍຄັ້ງວ່າ: ພາຍໃຕ້ສະຖານະການໂລກໃນສະເພາະໜ້ານີ້, ສາຍພົວພັນຈີນ--ອາເມລິກາໄດ້ລ່ວງກາຍຂອບເຂດສາຍພົວພັນຂອງສອງຝ່າຍ, ນັບມື້ນັບມີຜົນສະທ້ອນທົ່ວໂລກແລະຄວາມໝາຍຍຸດທະສາດ. ໃນການປົກປັກຮັກສາສັນຕິພາບຂອງໂລກແລະສົ່ງເສີມທາງດ້ານການພັດທະນາຮ່ວມກັນນັ້ນຈີນ--ອາເມລິກາມີຜົນປະໂຫຍດຍຸດທະສາດຮ່ວມກັນທີ່ສຳຄັນແລະກວ້າງຂວາງ. ຈີນ--ອາເມລິກາບໍ່ພຽງແຕ່ເປັນຝ່າຍທີ່ມີຜົນປະໂຫຍດຕິດພັນກັນແລະຍັງຕ້ອງເປັນຜູ້ຮ່ວມມືສ້າງສັນດ້ວຍກັນອີກ.

ທ່ານບຸສ ປະທານາທິບໍດີສະຫະລັດອາເມລິກາສະແດງວ່າ: ສະຫະລັດອາເມລິກາຊົມເຊີຍປະເທດຈີນທີ່ເປັນປະເທດສັນຕິພາບແລະວັດທະນາຖາວອນ. ຂົງເຂດການຮ່ວມມືຈີນ--ອາເມລິການັບມື້ນັບຂະຫຍາຍກວ້າງ, ໄດ້ເສີມຂະຫຍາຍຜົນສະທ້ອນອັນນັບມື້ນັບສຳຄັນຍິ່ງຕໍ່ສັນຕິພາບຂອງໂລກ, ປະເທດຈີນເປັນຄູ່ຂອດສຳຄັນໃນການປົກປັກຮັກສາສັນຕິພາບຂອງໂລກ. ຜູ້ນຳທັງສອງປະເທດຈີນ--ອາເມລິກາເຫັນເປັນເອກະສັນກັນວ່າ: ຈະເບິ່ງແລະປັບປຸງແກ້ໄຂສາຍພົວພັນລະຫວ່າງສອງປະເທດດ້ວຍແງ່ວິໄສທັດແລະຈາກຍຸດທະສາດໃນລະດັບສູງ, ຊຸກຍູ້ສົ່ງເສີມສາຍພົວພັນຮ່ວມມືສ້າງສັນລະຫວ່າງຈີນ--ອາເມລິກາໃນສະຕະວັດທີ 21 ຢ່າງຮອບດ້ານ ເພື່ອສ້າງຄວາມຜາສຸກແກ່ປະຊາຊົນສອງ



ຊາດແລະປະຊາຊົນບັນດາປະເທດໃນໂລກໃຫ້ດີຂຶ້ນກວ່າເກົ່າ.

## ພ້ອມກັນປົກປັກຮັກສາສັນຕິພາບແລະສະຖຽນລະພາບ ໃນທະເລໄຕ້ຫວັນ

ບັນຫາໄຕ້ຫວັນເປັນບັນຫາທີ່ສະທ້ອນພາບໄວແລະສຳຄັນຍິ່ງໃນລະຫວ່າງການພົວພັນຈີນກັບອາເມລິກາໂດຍຕະຫຼອດ. ປະທານຫູຈິນທາວກ່າວເນັ້ນວ່າ:ປະເທດຈີນຢຶດໝັ້ນພື້ນຖານຫຼັກການປະເທດຈີນດຽວ,ປົກປັກຮັກສາສັນຕິພາບແລະສະຖຽນລະພາບໃນທະເລໄຕ້ຫວັນ,ສົ່ງເສີມການພັດທະນາແລະປັບປຸງສາຍພົວພັນສອງຟາກຝັ່ງໃຫ້ດີຂຶ້ນ,ປະເທດຈີນຈະຕັ້ງໜ້າພະຍາຍາມຈົນສຸດຂີດດ້ວຍຄວາມຈິງໃຈຢ່າງສູງເພື່ອຍາດແຍ່ງອະນາຄົດທີ່ຫອມໂຮມເປັນເອກະພາບໂດຍສັນຕິ,ແຕ່ຈະບໍ່ຍອມໃຫ້"ໄຕ້ຫວັນເປັນເອກະລາດ"ຢ່າງເດັດຂາດ.

ປະທານາທິບໍດີບຸສສະແດງວ່າ: ຈຸດຢືນໃນບັນຫາໄຕ້ຫວັນຂອງລັດຖະບານອາເມລິກາບໍ່ມີການປ່ຽນແປງ. ສະຫະລັດອາເມລິກາຢຶດໝັ້ນນະໂຍບາຍປະເທດຈີນດຽວ,ເຂົ້າໃຈດີຕໍ່ຄວາມເອົາໃຈໃສ່ໃນບັນຫາໄຕ້ຫວັນຂອງຝ່າຍຈີນ,ບໍ່ປາຖະໜາຫຼິງເຫັນພຶດຕິກຳຂອງເຈົ້າໜ້າທີ່ໄຕ້ຫວັນປ່ຽນແປງສະພາບປະຈຸບັນໃນທະເລໄຕ້ຫວັນແຕ່ຝ່າຍດຽວຊຶ່ງຈະເປັນຜົນກະທົບຕໍ່ສາຍພົວພັນລະຫວ່າງຈີນກັບອາເມລິກາ.

ຈີນ--ອາເມລິກາສອງຝ່າຍໄດ້ຢືນຢັນຈຸດຢືນຫຼັກການຂອງບັນຫາໄຕ້ຫວັນຕື່ມອີກກ້າວໜຶ່ງ,ອຳນວຍຊ່ວຍໃຫ້ປົກປັກຮັກສາສັນຕິພາບແລະສະຖຽນລະພາບໃນທະເລໄຕ້ຫວັນແລະອຳນວຍຊ່ວຍໃຫ້ສົ່ງເສີມການພັດທະນາຄວາມຈະເລີນຮຸ່ງເຮືອງແລະຄວາມສະຫງົບອຸ່ນອຽນຂອງພາກພື້ນອາຊີ--ປາຊີຟິກ.

## ເພີ່ມທະວີການຮ່ວມມືເສດຖະກິດການຄ້າ ສົ່ງເສີມຜົນປະໂຫຍດຮ່ວມກັນ

ການຮ່ວມມືເສດຖະກິດການຄ້າເປັນເສົາຄ້ຳສຳຄັນຂອງການພັດທະນາສາຍພົວພັນລະຫວ່າງຈີນກັບອາເມລິກາ,ມັນໄດ້ເສີມຂະຫຍາຍບົດບາດອັນສຳຄັນຕໍ່ການຊຸກຍູ້ການພັດທະນາສາຍພົວພັນຈີນກັບອາເມລິກາ. ປະທານຫູຈິນທາວຊີ້ອອກວ່າ: ໄປຄຽງຄູ່ກັບການພັດທະນາເສດຖະກິດຂອງຈີນຢ່າງວ່ອງໄວແລະຊີວິດການເປັນຢູ່ຂອງປະຊາຊົນນັບມື້ນັບດີຂຶ້ນ,ອະນາຄົດການຮ່ວມມື

ເສດຖະກິດການຄ້າລະຫວ່າງຈີນກັບອາເມລິກາກໍ່ຈະກວ້າງຂວາງກວ່າເກົ່າອີກ. ຝ່າຍຈີນຍິນດີອີງຕາມຫຼັກການສະເໝີພາບຕ່າງຝ່າຍຕ່າງມີຜົນປະໂຫຍດແລະພັດທະນາພ້ອມກັນ, ໂດຍຜ່ານການສົນທະນາແກ້ໄຂຂໍ້ປະເດັນແຕກຕ່າງກັນ, ເພື່ອປົກປັກຮັກສາສະພາວະການສ່ວນໃຫຍ່ທາງການຮ່ວມມືເສດຖະກິດການຄ້າຂອງສອງປະເທດ.

ລັດຖະບານ, ວົງການອຸດສາຫະກຳການຄ້າແລະສື່ມວນຊົນໄດ້ສະທ້ອນພາບຢ່າງຕັ້ງໜ້າຕໍ່ເຈດຈຳນົງຂອງປະທານຫູຈິນທາວ. ປະທານາທິບໍດີບຸສສະແດງວ່າ: ຂະຫຍາຍການຄ້າລະຫວ່າງຈີນ--ອາເມລິກາທີ່ມີຍຸດຕິທຳແລະເສລີສອດຄ່ອງກັບຜົນປະໂຫຍດຮ່ວມກັນຂອງຈີນກັບອາເມລິກາ.

ຜູ້ນຳຂອງສອງປະເທດຍັງເຫັນພ້ອມເພີ່ມທະວີການປຶກສາຫາລືທາງຍຸດທະສາດໃນຂົງເຂດພະລັງງານ, ພ້ອມກັນລົງເລິກຮ່ວມມືທາງດ້ານຄົ້ນຄວ້າຂຸດຄົ້ນພະລັງງານສະອາດພະລັງງານແບບໃໝ່, ພ້ອມກັນພະຍາຍາມເພື່ອຊຸກຍູ້ສົ່ງເສີມການສະໜອງພະລັງງານຂອງໂລກມີຄວາມຍືນຍົງແລະຮັກສາລາຄາພະລັງງານມີຄວາມໝັ້ນທ່ຽງໂດຍສຳພັດ.

## ຊີ້ແຈງຢ່າງຈະແຈ້ງກ່ຽວກັບມະໂນຄະຕິພັດທະນາ ແລະເສັ້ນທາງພັດທະນາຂອງປະເທດຈີນ

ປະເທດຈີນຈະເດີນຕາມເສັ້ນທາງພັດທະນາໂດຍສັນຕິຢ່າງເດັດດ່ຽວໝຽວແໜ້ນ, ເພາະມັນເປັນການເລືອກເຟັ້ນທີ່ຈຳເປັນຕາມສະພາບບ້ານເມືອງແລະມູນເຊື້ອວັດທະນະທຳປະຫວັດສາດຂອງປະເທດຈີນແລະກໍ່ເປັນການເລືອກເຟັ້ນທີ່ຈຳເປັນຕາມກະ





ແສແນວໂນ້ມພັດທະນາຂອງຍຸກສະໄໝ. ປະທານຫູຈິນທາວຊີ້ອອກວ່າ: ປະເທດຈີນຈະສືບຕໍ່ຍົກສູງຄັນທຸງສັນຕິພາບ ການພັດທະນາແລະການຮ່ວມມື, ຍຶດໝັ້ນປະຕິບັດນະໂຍບາຍຕ່າງປະເທດໂດຍສັນຕິມີອິດສະຫຼະພາບ, ຍຶດໝັ້ນເດີນຕາມເສັ້ນທາງພັດທະນາ, ຍຶດໝັ້ນປະຕິບັດຍຸດທະສາດເປີດກວ້າງຕໍ່ພາຍນອກຕ່າງຝ່າຍຕ່າງມີຜົນປະໂຫຍດນຳກັນ, ທັງຜ່ານການຍາດແຍ່ງເອົາສະພາບແວດລ້ອມສາກົນທີ່ມີສັນຕິພາບມາພັດທະນາຕົນເອງ, ທັງຜ່ານການພັດທະນາຕົນເອງມາສົ່ງເສີມສັນຕິພາບຂອງໂລກ. ປະເທດຈີນທີ່ພັດທະນາມີສັນຕິພາບເປັນກຳລັງໜັກແໜ້ນສຳລັບຊຸກຍູ້ສົ່ງເສີມສັນຕິພາບ, ສະຖຽນລະພາບແລະຄວາມວັດທະນາຖາວອນຂອງພາກພື້ນອາຊີ--ປາຊີຟິກແລະຂອງໂລກ, ແລະກໍ່ຈະນຳມາຊຶ່ງຂົງເຂດອັນກວ້າງຂວາງກວ່າເກົ່າໃນການຮ່ວມມືລະຫວ່າງຈີນກັບອາເມລິກາ, ນຳມາຊຶ່ງກາລະໂອກາດອັນເປັນປະຫວັດການໃນການພັດທະນາສາຍພົວພັນລະຫວ່າງຈີນກັບອາເມລິກາ.

ການຢ້ຽມຢາມສະຫະລັດອາເມລິກາຄັ້ງນີ້ຂອງທ່ານຫູຈິນທາວປະທານປະເທດຈີນໄດ້ບັນລຸຈຸດປະສົງເພີ່ມທະວີການສົນທະນາເຊິ່ງກັນແລະກັນ, ຂະຫຍາຍຄວາມຮັບຮູ້ນຳກັນ, ເພີ່ມຄວາມໄວ້ເນື້ອເຊື່ອໃຈຕໍ່ກັນ, ລົງເລິກການຮ່ວມມືຕື່ມອີກແລະຊຸກຍູ້ສາຍພົວພັນຮ່ວມມືສ້າງສັນລະຫວ່າງຈີນກັບອາເມລິກາຢ່າງຮອບດ້ານໃນສະຕະວັດທີ 21, ມັນຈະມີຜົນສະທ້ອນທີ່ສຳຄັນຢ່າງເລິກເຊິ່ງຕໍ່ການຊຸກຍູ້ສາຍພົວພັນຈີນ--ອາເມລິກາພັດທະນາໄປຢ່າງສົມບູນແລະໜັກແໜ້ນ, ແລະຕໍ່ຈີນກັບອາເມລິກາພ້ອມກັນສົ່ງເສີມສັນຕິພາບ ສະຖຽນລະພາບແລະຄວາມວັດທະນາຖາວອນຂອງພາກພື້ນອາຊີ--ປາຊີຟິກແລະຂອງໂລກ.




# ປະເທດຈີນກັບປະເທດອາຊີຈະຮ່ວມມືສະໜັບສະໜູນເຊິ່ງກັນແລະກັນຢ່າງແໜ້ນແຟ້ນກວ່າເກົ່າ



## 中国与亚洲国家将更加紧密相互支持合作

中国国家副主席曾庆红在博鳌亚洲论坛 2006 年年会开幕式上发表主题演讲时说，中国是最大的发展中国家，亚洲是最大的发展中地区，在维护地区和平、促进共同发展的过程中，中国和亚洲其他国家将更加紧密地相互支持、相互合作

ທ່ານເຈັນສິນຫົງຮອງປະທານປະເທດຈີນໄດ້ກ່າວຄຳປາໄສທີ່ມີຄວາມໝາຍສຳຄັນໃນພິທີເປີດສາກປະຊຸມປະຈຳປີ 2006ຢູ່ທີ່ເວທີປາຖະກະຖາອາຊີໂປອາວວ່າ: ຈີນເປັນປະເທດກຳລັງພັດທະນາທີ່ໃຫຍ່ກວ່າໝູ່ໃນອາຊີແລະອາຊີເປັນພາກພື້ນກຳລັງພັດທະນາທີ່ໃຫຍ່ກວ່າໝູ່,ປະເທດຈີນແລະປະເທດອື່ນ ໆໃນອາຊີຈະສະໜັບສະໜູນແລະຮ່ວມໄມ້ຮ່ວມມືເຊິ່ງກັນແລະກັນຢ່າງແໜ້ນແຟ້ນກວ່າເກົ່າໃນທ່າມກາງປົກປັກຮັກສາສັນຕິພາບຂອງພາກພື້ນແລະຊຸກຍູ້ສົ່ງເສີມການພັດທະນາພ້ອມກັນ.

ທ່ານເຈັນສິນຫົງກ່າວວ່າ: ປະເທດຈີນເປັນສະມາຊິກໃນໜຶ່ງຂອງອາຊີ,ຄວາມຈະເລີນຮຸ່ງເຮືອງແລະຄວາມສະໝົມກົມກຽວຂອງອາຊີມັນສະໜິດຕິດພັນກັບການພັດທະນາໂດຍສັນຕິຂອງປະເທດຈີນ.ສປຈີນຈະຍຶດຖືທິດທາງການຕ່າງປະເທດອ້ອມຂ້າງທີ່ຖືເພື່ອນບ້ານໃກ້ຄຽງເປັນເພື່ອນໄມຕີແລະຖືເພື່ອນບ້ານໃກ້ຄຽງເປັນໝູ່ເພື່ອນກໍ່ຄືນະໂຍບາຍການຕ່າງປະເທດອ້ອມຂ້າງທີ່ເປັນຖານບ້ານໃກ້ເຮືອນຄຽງປອງດອງກັນ,ເປັນຖານເພື່ອນບ້ານໃກ້ຄຽງທີ່ສະຫງົບສຸກແລະເປັນຖານເພື່ອນບ້ານໃກ້ຄຽງທີ່ສ້າງຮັ່ງລູນມີພ້ອມກັນ,ສືບຕໍ່ຕັ້ງໜ້າເຂົ້າຮ່ວມການຮ່ວມມືພາກພື້ນໃນອາຊີ,ພະຍາຍາມຄົ້ນຊອກທາວຫາຊ່ອງທາງມີປະສິດທິຜົນເພື່ອບັນລຸຕ່າງຝ່າຍຕ່າງມີຜົນປະໂຫຍດນຳກັນຂອງບັນດາປະເທດອາຊີ,ສົ່ງເສີມຈັງຫວະກ້າວການຮ່ວມມືພາກພື້ນພັດທະນາໄປຢ່າງສົມບູນ.ປະເທດຈີນຈະຍຶດຖືທັດສະນະຄວາມປອດໄພໃໝ່ທີ່ໄວ້ເນື້ອເຊື່ອໃຈກັນ,ຕ່າງຝ່າຍຕ່າງມີຜົນປະໂຫຍດ,ສະເໝີພາບແລະປະສານງານກັນ,ກະຕຸກຊຸກຍູ້ປະເທດອາຊີເພີ່ມທະວີການສົນທະນາທາງການເມືອງ,ເພີ່ມຄວາມໄວ້ເນື້ອເຊື່ອໃຈກັນຕື່ມອີກ,ກຳຈັດຂໍ້ຂັດແຍ້ງ,ຫລຸດຜ່ອນຂໍ້ປະເດັນແຕກຕ່າງກັນ,ຂະຫຍາຍຄວາມຮັບຮູ້ນຳກັນ,ປົກປັກຮັກສາສັນຕິພາບ,ຄວາມປອດໄພແລະສະຖຽນລະພາບຂອງພາກພື້ນບົນພື້ນຖານກົດບັດສະຫະປະຊາຊາດແລະຫຼັກການ 5 ປະການຢູ່ຮ່ວມກັນໂດຍສັນຕິ.

ທ່ານເຈັນສິນຫົງສະແດງວ່າ: ສະແຫວງຫາຜົນປະໂຫຍດຮ່ວມກັນຂອງອາຊີ,ຈັບໂອກາດການພັດທະນາ ຕ້ອງການໃຫ້ລັດຖະບານແລະປະຊາຊົນຂອງບັນດາປະເທດອາຊີຕັ້ງໜ້າພະຍາຍາມຢ່າງບໍ່ລົດລະພ້ອມທັງໃຊ້ຈັງຫວະກ້າວອັນຕັ້ງໜ້າດັ່ງຕໍ່ໄປນີ້: ສືບຕໍ່ຜັນຂະຫຍາຍການຮ່ວມມືຕ່າງຝ່າຍຕ່າງມີຜົນປະໂຫຍດໃຫ້ລົງເລິກຕື່ມອີກ,ສົ່ງເສີມການພັດທະນາພ້ອມກັນແລະການພັດທະນາຢ່າງຍືນຍົງ;ຍຶດໝັ້ນການຢູ່ຮ່ວມກັນຢ່າງສະໝົມກົມກຽວ,ເຄົາລົບແລະປົກປ້ອງພາກພື້ນຫຼາຍຮູບແບບ;ຍຶດໝັ້ນການເປີດກວ້າງແລະອະນຸໂລມ,ຫັນໜ້າສູ່ທົ່ວໂລກ.





# ຈັດ "ວັນເຄື່ອນໄຫວການກຸສົນຂອງເດັກນ້ອຍຈີນ"



### "中国儿童慈善活动日"启动

由中国少年儿童基金会举办的第五届"中国儿童慈善活动日"启动，本届活动主题为"呼唤——把爱心奉献给孩子"。活动日期间举办了一系列大型公益活动。






ຈັດ "ວັນເຄື່ອນໄຫວການກຸສົນຂອງເດັກນ້ອຍຈີນ "ສະໄໝທີ 5 ຊຶ່ງຈັດທຳໂດຍມູນນິທິເດັກນ້ອຍ--ອະນຸຊົນຈີນ, ຫົວຂໍ້ການເຄື່ອນໄຫວສະໄໝນີ້ຄື: "ຮຽກຮ້ອງ--ຈົ່ງອຸທິດນ້ຳໃຈຮັກແພງແກ່ເດັກນ້ອຍ ". ໃນໄລຍະວັນເຄື່ອນໄຫວໄດ້ຈັດການເຄື່ອນໄຫວສາທາລະນະປະໂຫຍດຕ່າງ ໆ ຂະໜາດໃຫຍ່.

ການເຄື່ອນໄຫວເຈົ້າກຳໄດ້ຈັດ "ງານລາຕີການກຸສົນຂອງເດັກນ້ອຍຈີນສະໄໝທີ 5 ", ໄດ້ສະເໜີຜະລິດພັນຮູບເງົາ--ໂທລະພາບຕ່າງ ໆສຳລັບເດັກນ້ອຍອອກມາ, ຈັດການເຄື່ອນໄຫວສະເຫຼີມສະຫຼອງມູນນິທິເດັກນ້ອຍຈີນສ້າງຕັ້ງຂຶ້ນຄົບຮອບ 25 ປີແລະ "ການທ່ຽວເກັບກຳຂໍ້ມູນກຸສົນຜົນບຸນຂອງນັກແຕ້ມຈິດຕະກອນທີ່ມີຊື່ສຽງໂດ່ງດັງແລະການປະມູນຂາຍຜະລິດພັນທີ່ເປັນຂອງຖວາຍຕະຫຼອດຮອດການພິມຈຳໜ່າຍປຶ້ມຮູບຂະໜາດໃຫຍ່ ", ເປີດການທ່ຽວສະໝານໄມຕີສະໜິດສະໜົມ, ຮ່ວມມືກັບອົງການກຸສົນຮັບຟັງຂອງອັງກິດ, ເຂົ້າຮ່ວມການເຄື່ອນໄຫວກຸສົນລະກຳຮັບຟັງທີ່ມີ 60 ກວ່າປະເທດໃນທົ່ວໂລກເຂົ້າຮ່ວມຊຶ່ງຈັດຂຶ້ນຢູ່ທີ່ນິວຢອກອາເມລິກາ.

ການເຄື່ອນໄຫວຕ່າງ ໆໃນສະໄໝນີ້ຈະບັນລຸເປົ້າໝາຍອຸປະຖຳ "7 ອັນ 1 ພັນ "ຄື: ທຶນບໍລິຈາກເງິນຕາມຄື່ນຄວາມຖີ່ວິດີໂອສຳລັບຄຸນສົມບັດສຶກສາເດັກນ້ອຍພັນຄົນ; "ສູນຄຸນສົມບັດສຶກສາເດັກນ້ອຍຄຸ້ມເຂດ "ພັນແຫ່ງ; "ສະຖານີສະໝຸດນິດຈິດສຸຂະເສີມ " ພັນແຫ່ງ; ເດັກນ້ອຍສາຍຕາບໍ່ດີທີ່ທຸກຍາກພັນຄົນ; "ນັກຮຽນມັດທະຍົມຕອນປາຍຖາວໃຫຍ່ "ພັນຄົນ; ເດັກຖາວໃຫຍ່ເພດຍິງຮັບການຝຶກອົບຮົມວິຊາການເພື່ອດຳລົງຊີບ ພັນຄົນແລະຫ້ອງຮຽນດົນຕີສຳລັບເດັກນ້ອຍຈີນພັນແຫ່ງ.

ປີ 2006 ເປັນປີມູນນິທິເດັກນ້ອຍ--ອະນຸຊົນຈີນສ້າງຕັ້ງຄົບຮອບ 25 ປີ. ນັບແຕ່ມູນນິທິດັ່ງກ່າວຕັ້ງຂຶ້ນເປັນຕົ້ນມາ, ກໍ່ຢຶດຖືວັດຖຸປະສົງບໍລິການຢ່າງສຸດໃຈເພື່ອພາລະກິດສະຫວັດດີການແລະສຶກສາເດັກນ້ອຍຈີນ, ຢຶດຖືຫຼັກການ "ບຸລິມະສິດແກ່ເດັກນ້ອຍ ", ໄດ້ສະເໜີຍີ່ຫໍ້ສາທາລະນະປະໂຫຍດສອງລາຍທີ່ຊາລືສຳເລັດຜົນຄື: "ແຜນການໜໍ່ແໜງລະດູບານ "ແລະ "ແຜນການສຸຂະເສີມ ", ພ້ອມທັງວາງແຜນຈັດການເຄື່ອນໄຫວສາທາລະນະປະໂຫຍດຕ່າງ ໆສຳລັບເດັກນ້ອຍເປັນຕົ້ນຄື: "ວັນເຄື່ອນໄຫວການກຸສົນຂອງເດັກນ້ອຍຈີນ ", ໄດ້ຮັບເງິນກຸສົນທີ່ບໍລິຈາກເປັນຈຳນວນ 6 ຮ້ອຍລ້ານຢວນຊຶ່ງເຮັດໃຫ້ເດັກນ້ອຍຈີນນັບເປັນລ້ານເປັນໂກດໄດ້ຮັບຜົນເປັນປະໂຫຍດ.



# ສປຈີນອອກແຮງເພື່ອບັນລຸການພ
# ແລະອະນຸຮັກສິ່ງແວດລ້ອມໄດ້ຮັບຜ




## 中国努力实现能源发展与环境保护双赢

环境保护是经济社会可持续发展的重要组成部分。作为发展中国家，中国未来的能源需求仍将会有较大幅度的增长。中国将采取措施，努力实现能源发展与环境保护双赢。

# ັດທະນາພະລັງງານ
# ົນທັງສອງດ້ານ

ອະນຸຮັກສິ່ງແວດລ້ອມເປັນສ່ວນປະກອບທີ່ສຳຄັນຂອງການພັດທະນາເສດຖະກິດ--ສັງຄົມຢ່າງຍືນຍົງ. ໃນນາມເປັນປະເທດກຳລັງພັດທະນາ, ຄວາມຕ້ອງການພະລັງງານໃນອະນາຄົດຂ້າງໜ້າຂອງປະເທດຈີນຍັງຈະຄ່ອຍຂ້າງເພີ່ມຂຶ້ນຢ່າງຫຼວງຫຼາຍ. ສປຈີນຈະໃຊ້ມາດຕາການ ອອກແຮງເພື່ອບັນລຸການພັດທະນາ ແລະອະນຸຮັກສິ່ງແວດລ້ອມໄດ້ຮັບຜົນທັງສອງດ້ານ.

ທ່ານຫວັງຢີສິນຮອງຫົວໜ້າກົມໃຫຍ່ອະນຸຮັກສິ່ງແວດລ້ອມແຫ່ງຊາດຈີນກ່າວວ່າ: ເມື່ອສັງເກດຕາມຍຸດທະສາດພັດທະນາພະລັງງານແລ້ວ, ຕ້ອງອອກແຮງດັດປັບໂຄງປະກອບພະລັງງານ, ປ່ຽນແປງວິທີນຳໃຊ້ພະລັງງານ, ຍົກສູງປະສິດທິຜົນນຳໃຊ້ພະລັງງານ. ດັດປັບໂຄງປະກອບພະລັງງານກ່ອນອື່ນຕ້ອງອອກແຮງພັດທະນາພະລັງງານຟື້ນຄືນໄດ້ແລະພະລັງງານສະອາດ, ຂະຫຍາຍອັດຕາສ່ວນສິ່ງທີ່ຜະລິດເປັນພະລັງງານໄດ້.



ພັດທະນາໄຟຟ້ານ້ຳຕົກຢ່າງສົມສ່ວນບົນພື້ນຖານປົກປັກຮັກສາສະພາບແວດລ້ອມນິເວດວິທະຍາແລະສິດທິຍົກຍ້າຍພົນລະເມືອງ; ເລັ່ງລັດພັດທະນາການຜະລິດໄຟຟ້າແຮງລົມ, ໄຟຟ້າພະລັງງານວັດຖຸອົງຄະທາດແລະໝູນໃຊ້ໄຟຟ້າພະລັງງານແສງອາທິດ. ແລະຂະຫຍາຍອັດຕາສ່ວນສິ້ນເປືອງຂອງຖ່ານຫີນໄຟຟ້າແລະພະລັງງານໄຟຟ້າໃຫ້ກວ້າງຢູ່ໃນຈຳນວນຖ່ານຫີນແລະພະລັງງານ. ຢູ່ເຂດແຄວ້ນທີ່ມີເງື່ອນໄຂກໍ່ເພີ່ມອັດຕາສ່ວນຜະລິດໄຟຟ້າດ້ວຍອາຍແກັດທຳມະຊາດ; ຕັ້ງໜ້າພັດທະນາໄຟຟ້າປະລະມານູໂດຍພາຍໃຕ້ເງື່ອນຕົ້ນທີ່ຮັບປະກັນຄວາມປອດໄພຮ້ອຍສ່ວນຮ້ອຍ. ພິຈາລະນາສັງລວມເຖິງລະບົບຈະລາຈອນໂຕເມືອງໃຫຍ່, ອອກແຮງພັດທະນາເສັ້ນທາງຮາງລົດຈະລາຈອນ, ຄວບຄຸມເຂດໂຄງການໂຕເມືອງໃຫຍ່ແລະຂະໜາດເຂດກໍ່ສ້າງຢ່າງເຂັ້ມງວດ.

ຊຸມປີມໍ່ ໆ ມານີ້, ໄປພ້ອມ ໆ ກັບເສດຖະກິດປະເທດຈີນເຕີບໂຕໄວຢ່າງຕໍ່ເນື່ອງ, ລະດັບຊີວິດການເປັນຢູ່ຂອງປະຊາຊົນທະວີສູງຂຶ້ນຢ່າງບໍ່ຢຸດຢັ້ງ, ບັນຫາພະລັງງານກັບສິ່ງແວດລ້ອມກາຍເປັນບັນຫາຈຸດຮ້ອນທີ່ລັດຖະບານຈີນແລະບັນດາວົງການສັງຄົມສົນໃຈນຳໂດຍທົ່ວໄປ. ຍົກສູງປະສິດທິພາບນຳໃຊ້ພະລັງງານ, ຄວບຄຸມການປ່ອຍຖ່າຍວັດຖຸມົນລະພິດ, ປົວແປງຄຸນະພາບສະພາບແວດລ້ອມໃຫ້ດີຂຶ້ນຈຶ່ງເປັນເນື້ອໃນສຳຄັນໃນການສ້າງສັນສັງຄົມແບບປະຢັດຊັບພະຍາກອນແລະແບບສະພາບແວດລ້ອມສັນນິດ.

ລັດຖະບານຈີນເອົາໃຈໃສ່ເປັນຢ່າງສູງຕໍ່ບັນຫາສິ່ງແວດລ້ອມທີ່ມາຈາກພະລັງງານ, ໄດ້ວາງກົດໝາຍ ລະບຽບກົດໝາຍ ນະໂຍບາຍແລະມາດຖານຕ່າງ ໆ ເພື່ອຫລຸດຜ່ອນຜົນກະທົບອັນບໍ່ດີຕໍ່ສະພາບແວດລ້ອມເຊິ່ງເກີດຈາກການຜະລິດພະລັງງານແລະການເຄື່ອນໄຫວບໍລິໂພກຊົມໃຊ້. ພາຍໃຕ້ສະຖານະພາບເສດຖະກິດແຫ່ງຊາດເຕີບໂຕຢ່າງວ່ອງໄວ, ລະດັບຊົມໃຊ້ຂອງໝູ່ປະຊາຊົນໄດ້ທະວີສູງຂຶ້ນຢ່າງເດັ່ນຊັດ, ຄຸນະພາບບັນຍາກາດຂອງຫຼາຍໂຕເມືອງກໍ່ໄດ້ຮັບການປັບປຸງແກ້ໄຂໃຫ້ດີຂຶ້ນ.



# ສປຈີນສ້າງພື້ນຖານເຝິກແອບກິລາສັງລວມສຳລັບຄົນພິການ



## 中国为残疾人建专用体育综合训练基地

中国为残疾人建首个专用体育综合训练基地，今后残疾人体育爱好者不必再为没有合适的训练场所而苦恼了。

ຈີນສ້າງພື້ນຖານເຝິກແອບກິລາສັງລວມທຳອິດສຳລັບຄົນພິການ,ແຟນກິລາຄົນພິການບໍ່ຕ້ອງອຸກໃຈເປັນຫ່ວງນຳວ່າບໍ່ມີສະຖານທີ່ເຝິກແອບຢ່າງເໝາະສົມນັ້ນອີກ.

ທ່ານຈ້າວສູຈິງ ຮອງເລຂາທິການປະຈຳຄະນະກຳມະການຄົນພິການໂອລິມປິກແຫ່ງປະເທດຈີນກ່າວວ່າ: ການເຄື່ອນໄຫວແລະເຝິກແອບກິລາຂອງຄົນພິການມັນມີລັກສະນະພິເສດ,ເຄື່ອງອຸປະກອນກິລາໃນສັງຄົມທີ່ມີປະຈຸບັນຍັງບໍ່ສາມາດຮັບຮອງໄດ້ໝົດ,ຖ້າຈະນຳໃຊ້ເຄື່ອງອຸປະກອນກິລາຮ່ວມກັນລະຫວ່າງຄົນພິການກັບຄົນສົມບູນ,ມັນບໍ່ພຽງແຕ່ບໍ່ສາມາດຮັບປະກັນການເຄື່ອນໄຫວກິລາຂອງຄົນພິການຫລືການເຝິກແອບຂອງນັກກິລາຄົນພິການຢ່າງເປັນປົກກະຕິເທົ່ານັ້ນ ຍັງເປັນຜົນກະທົບຕໍ່ການຫັດກາຍຂອງຄົນສົມບູນຫລືການເຝິກແອບຂອງນັກກິລາຜູ້ສົມບູນອີກ.ດ້ວຍເຫດນີ້,ປີທີ່ຜ່ານມາ ສະຫະພັນຄົນພິການຈີນແລະຄະນະກຳມະການຄົນພິການໂອລິມປິກແຫ່ງປະເທດຈີນໄດ້ເລີ່ມດຳເນີນໂຄງການສ້າງພື້ນຖານເຝິກແອບກິລາສັງລວມສຳລັບຄົນພິການຈີນ.

ທ່ານຈ້າວສູຈິງແນະນຳໃຫ້ຮູ້ວ່າ: ພື້ນຖານເຝິກແອບກິລາສັງລວມຂອງຄົນພິການດັ່ງກ່າວຕັ້ງຢູ່ເມືອງຕາແສງເບື້ອງຫຼັງຂອງເມືອງສຸນຢີປັກກິ່ງ,ມີຫໍໂຮງແລະສະໜາມເຝິກແອບ 6 ແຫ່ງ,ຕຶກອາຄານກິນຢູ່ຂອງນັກກິລາ 1 ຫຼັງແລະຕຶກອາຄານຫ້ອງການ 1 ຫຼັງ,ກິດຈະກຳກໍ່ສ້າງທັງໝົດຄາດວ່າຈະແລ້ວໃນປີ 2007. ພື້ນຖານເຝິກແອບດັ່ງກ່າວຈະສະໜອງແກ່ຄະນະຜູ້ແທນກິລາຄົນພິການແຫ່ງຊາດນຳໃຊ້ຊ່ວງເວລາກຽມແຂ່ງຂັນໃນງານກິລາຄົນພິການໂອລິມປິກປີ 2008.ເມື່ອງານກິລາຄົນພິການໂອລິມປິກສິ້ນສຸດລົງກໍ່ຈະເປີດໃຫ້ແກ່ແຟນກິລາຄົນພິການທົ່ວ ໆໄປໄດ້ມາເຝິກແອບຕາມເວລາ.

# ອອກແຮງສ້າງລະບົບ ພັດທະນາອາຊີສີຂຽວ

## 着力构建绿色亚洲发展体系

在日本福冈市举行的“第二届亚洲人居环境国际峰会”，以“紧凑型城镇、节约型社会”为主题，针对在资源和能源紧缺的全球大背景下，积极探讨亚洲地区可持续发展模式，加强亚洲各国的环保和节能协作，着力构建绿色亚洲发展体系。



"ກອງປະຊຸມສຸດຍອດສາກົນກ່ຽວກັບສະພາບແວດລ້ອມຄົນອາໄສຢູ່ຂອງອາຊີສະໄໝທີ 2 "ໄດ້ຈັດຂຶ້ນທີ່ນະຄອນຟູກູໂອກາ (Fukuoka)ຍີ່ປຸ່ນ, ໂດຍເອົາ "ໂຕເມືອງແບບກະທັດຮັດແລະສັງຄົມແບບປະຢັດ "ເປັນຫົວຂໍ້, ຈຸດປະສົງແນໃສ່ພາຍໃຕ້ພູມຫຼັງທົ່ວໂລກຂາດແຄນຊັບພະຍາກອນແລະພະລັງງານ, ຕັ້ງໜ້າຄົ້ນຄວ້າຫາວຫາຮູບແບບພັດທະນາຍືນຍົງໃນເຂດມະນຸດດຳລົງຢູ່ຂອງທະວີບອາຊີ, ເພີ່ມທະວີການປະສານງານອະນຸຮັກສິ່ງແວດລ້ອມແລະປະຢັດພະລັງງານລະຫວ່າງບັນດາປະເທດອາຊີ, ອອກແຮງສ້າງລະບົບພັດທະນາອາຊີສີຂຽວ.

ຕາມຜູ້ຮັບຜິດຊອບທີ່ກ່ຽວຂ້ອງຊັບສິນດິນຢູ່ຈີນແລະຄະນະກຳມະການສະພາບແວດລ້ອມຄົນອາໄສຢູ່ໃນສະຖາບັນຄົ້ນຄວ້າເຄຫະສະຖານແນະນຳວ່າ: ອາຊີເປັນພາກພື້ນທີ່ມີປະຊາກອນຫຼາຍທີ່ສຸດແລະເນື້ອທີ່ກວ້າງທີ່ສຸດໃນໂລກແລະກໍ່ເປັນພາກພື້ນພັດທະນາເສດຖະກິດໄວທີ່ສຸດແລະຄຶກຄັກກວ່າໝູ່ໃນທົ່ວໂລກສະເພາະໜ້ານີ້, ນັບມື້ນັບກາຍເປັນຈຸດສຸມທີ່ສົນໃຈຂອງຊາວໂລກ. ແຕ່ວ່າການພັດທະນາຢ່າງວ່ອງໄວຂອງຫຼາຍປະເທດໃນອາຊີແມ່ນສ້າງຢູ່ບົນພື້ນຖານທີ່ສິ້ນເປືອງຊັບພະຍາກອນເກີນສ່ວນ, ສິ່ງແວດລ້ອມຂອງຫຼາຍເຂດແຄ້ວນມີອາການຮ້າຍແຮງແລະຊີວະພາບຜິດຄວາມດຸນດ່ຽງ. ພາຍໃຕ້ສະພາບຊັບພະຍາກອນແລະພະລັງງານທຳມະຊາດໃນທົ່ວໂລກກຳລັງບົກແຫ້ງຫລຸດໜ້ອຍຖອຍລົງຢ່າງຕໍ່ເນື່ອງນັ້ນ ຈະສືບຕໍ່ວິທີສິ້ນເປືອງຊັບພະຍາກອນແລະພະລັງງານຢ່າງຖີບສູງຂຶ້ນກໍ່ຈະຖືກຜູກມັດຮັດແຄບຢ່າງໜັກໜ່ວງ.

ໃນຂະນະດຽວກັນ, ອາຊີຍັງປະເຊີນໜ້າກັບສິ່ງທ້າທາຍຕ່າງຕ່າງນາ ໆຈາກການຜັນຂະຫຍາຍເປັນໂຕເມືອງຢ່າງໄວວາ. ມີຂໍ້ມູນຢືນຢັນໃຫ້ຮູ້ວ່າ: ຄາດວ່າຮອດປີ 2015, ພາຍໃນໂຕເມືອງທີ່ມີປະຊາກອນລ້ານຄົນ 358 ແຫ່ງໃນທົ່ວໂລກນັ້ນ ຈະມີ 153 ແຫ່ງເປັນໂຕເມືອງຢູ່ທະວີບອາຊີ, ແລະພາຍໃນ "ໂຕເມືອງສຸເປີ" ທີ່ມີປະຊາກອນກາຍ 10 ລ້ານຂຶ້ນໄປໃນ 27 ແຫ່ງທົ່ວໂລກ ຈະມີ 15 ແຫ່ງເປັນໂຕເມືອງຢູ່ໃນອາຊີ. ສະນັ້ນ, ເລັ່ງລັດດັດປັບໂຄງປະກອບເສດຖະກິດແລະປ່ຽນແປງວິທີເຕີບໂຕ, ສ້າງລະບົບພັດ










ທະນາອາຊີສີຂຽວຈຶ່ງເປັນການຮີບຮ້ອນໃນສະເພາະໜ້າ. ກອງປະຊຸມສຸດຍອດຄັ້ງນີ້ໄດ້ລົງເລິກທຳການຄົ້ນຄວ້າຫາວທາແລະແລກປ່ຽນກ່ຽວກັບເນື້ອຫາສາລະອັນມັ່ງມູນແລະໂຄງການເຕັກໂນໂລຊີຂອງ "ອາຊີສີຂຽວ" ດ້ວຍວິທີຫຼາຍຮູບການເປັນຕົ້ນຄືະປະຊຸມລາຍງານວິຊາການດ້ວຍຫົວຂໍ້ພິເສດ, ຊາໂລງວັດທະນະທຳ ແລະການສຳຫຼວດສະເພາະກິດ, ພ້ອມທັງປະກາດ《ຄຳຖະແຫຼງການຟູກູໂອກາສຳລັບຄົນອາໄສຢູ່ຂອງອາຊີ》. ໄປພ້ອມ ໆ ກັບການຕອບສະໜອງຄວາມຕ້ອງການອັນສົມເຫດສົມຜົນໃນການພັດທະນາເສດຖະກິດແລະສັງຄົມແລ້ວ, ຄຳຖະແຫຼງການສະເໜີໃຫ້ບັນດາປະເທດອາຊີຈົ່ງພະຍາຍາມຍົກສູງສະຕິອະນຸຮັກສິ່ງແວດລ້ອມປະຢັດພະລັງງານແລະການຮ່ວມມື, ອອກແຮງພັດທະນາໂຕເມືອງຊີວະພາບທີ່ລວມສູນຮັດກຸມ, ໝູນໃຊ້ແລະຂຸດຄົ້ນພະລັງງານສີຂຽວ, ສ້າງວັດທະນະທຳດຳລົງຢູ່ອັນອຸດົມສົມບູນລະຫວ່າງຄົນກັບທຳມະຊາດຢູ່ດອມກັນສະໜິມກົມກຽວ, ເພີ່ມທະວີໃຫ້ມະຫາຊົນເຂົ້າຮ່ວມພ້ອມກັນສ້າງສາທະວີບອາຊີສີຂຽວ.

ກອງປະຊຸມສຸດຍອດຄັ້ງນີ້ໂດຍສະມາຄົມສະພາບແວດລ້ອມຄົນອາໄສຢູ່ອາຊີເປັນເຈົ້າພາບລິເລີ່ມຈັດທຳ, ຊຶ່ງມີຫ້ອງການກົມຄົນອາໄສຢູ່ສະຫະປະຊາຊາດປະຈຳພາກພື້ນອາຊີ--ປາຊີຟິກແລະຄະນະປົກຄອງນະຄອນຟູກູໂອກາຍີ່ປຸ່ນປະສົມກັນເປັນເຈົ້າພາບຈັດຂຶ້ນ. ມີນັກປາດລືຊື່ສາກົນ ຜູ້ແທນວິສາຫະກິດພັດທະນາຊັບສິນດິນຢູ່ແລະບຸກຄົນທີ່ໂດດເດັ່ນອອກແບບຜັງເມືອງເກືອບ 200 ກວ່າທີ່ມາຈາກເຂດແຄວ້ນແລະປະເທດຈີນ, ສິງກະໂປ, ຍີ່ປຸ່ນ, ສ. ເກົາຫລີ, ໄທ, ອິນເດຍແລະຮົງກົງ ຈະຕັ້ງໜ້າຄົ້ນຄວ້າຫາວຫາຮູບແບບພັດທະນາສີຂຽວຂອງເຂດມະນຸດດຳລົງຢູ່ໃນອາຊີແລະການນຳໃຊ້ຊັບພະຍາກອນກໍ່ຄືພະລັງງານຢ່າງມີປະສິດທິຜົນ, ເພີ່ມທະວີການແລກປ່ຽນປະສົບການແຫ່ງຍຸດທະສາດພັດທະນາຍືນຍົງສຳລັບເຂດມະນຸດດຳລົງຢູ່ຂອງບັນດາປະເທດອາຊີ, ຊຸກຍູ້ການພັດທະນາອາຊີຜັນຂະຫຍາຍເປັນໂຕເມືອງຢ່າງຕໍ່ເນື່ອງເປັນຢ່າງດີ. "ສະພາບແວດລ້ອມຄົນອາໄສຢູ່ຂອງອາຊີສະໄໝທີ 2 ກໍ່ຄືງານແຂ່ງຂັນອອກແບບສາກົນສຳລັບກໍ່ສ້າງໂຕເມືອງ" ທີ່ຜູ້ຄົນສົນໃຈນັ້ນກໍ່ໄດ້ເປີດປ້າຍທ່າມກາງກອງປະຊຸມ.




瑞士网球选手费德勒（右）在会上发言。 新华社记者 赵 鹏摄

# ພະຍາຍາມນຳໃຊ້ການເຄື່ອນໄຫວກິລາ ສົ່ງເສີມສັນຕິພາບແລະການພັດທະນາ

## 努力利用体育活动促进和平与发展

联合国纽约总部隆重举行仪式，庆祝“国际体育年”活动取得成功。联合国秘书长安南、第 60 届联大主席埃里亚松、各国外交官和体育明星等近 400 人出席仪式。

ສຳນັກງານໃຫຍ່ສະຫະປະຊາຊາດປະຈຳນິວຢອກໄດ້ຈັດພິທີຢ່າງໃຫຍ່ ໂຕເພື່ອສະເຫຼີມສະຫຼອງການເຄື່ອນໄຫວ "ປີກິລາສາກົນ" ປະສົບຜົນສຳເລັດ. ທ່ານ ໂກຟີ•ອານັນເລຂາທິການໃຫຍ່ສະຫະປະຊາຊາດ, ທ່ານໄອລີອາສັນປະທານກອງປະຊຸມສະມັດຊາໃຫຍ່ສະຫະປະຊາຊາດສະໄໝທີ 60, ທູຕານຸທູດບັນດາປະເທດແລະດາລານັກກິລາເກືອບ 400 ກວ່າຄົນໄດ້ຮ່ວມພິທີດັ່ງກ່າວ.

ໃນພິທີທ່ານ ໂອຊີທີ່ປຶກສາພິເສດ "ກິລາສົ່ງເສີມການພັດທະນາ




ແລະສັນຕິພາບ" ຂອງສະຫະປະຊາຊາດໄດ້ຍື່ນ《ບົດລາຍງານປີກິລາສະຫະປະຊາຊາດ 2005》ໃຫ້ແກ່ອານນັນ. ຈາກນັ້ນທ່ານອານນັນໄດ້ກ່າວຄຳປາໄສວິ່ງວອນລັດຖະບານບັນດາປະເທດແລະບັນດາອົງການພາຄີຂອງສະຫະປະຊາຊາດຈົ່ງອອກແຮງສະໜັບສະໜູນອູ້ມຊູການນຳໃຊ້ກິລາສົ່ງເສີມສັນຕິພາບຂອງໂລກ, ຊຸກຍູ້ເປົ້າໝາຍພັດທະນາສະຫັດສະວັດໃຫ້ປາກົດຜົນເປັນຈິງ.

ທ່ານອານນັນກ່າວວ່າ: ການເຄື່ອນໄຫວ "ປີກິລາສາກົນ" 2005 ໄດ້ປະສົບຜົນສຳເລັດຢ່າງສະຫງ່າງາມ, ການເຄື່ອນໄຫວທີ່ສົ່ງຂໍ້ມູນຂ່າວສານນຳໃຊ້ກິລາຊຸກຍູ້ການພັດທະນາແລະສັນຕິພາບຂອງໂລກ ໂດຍໄດ້ຮັບການສະໜັບສະໜູນຢ່າງແຂງແຮງຈາກວົງການກິລາແລະພາກວິສາຫະກິດເອກະຊົນຕະຫຼອດເຖິງວົງການນັກໜັງສືພິມ. ທ່ານຊີ້ອອກວ່າ: ບໍ່ວ່າຕ້ານໂອກາດຫຼືວ່າມອບສິດໃຫ້ສະຕີຍິ່ງຫຼາຍກວ່າເກົ່າແລະສ້າງສັນສັງຄົມພາຍຫຼັງຖືກກະທົບຄືນໃໝ່, ກິລາກໍ່ເປັນພາຫະນະທີ່ສາມາດອຳນວຍໃຫ້ນຳໃຊ້. ຕໍ່ໄປພາຍໜ້າ, ປະຊາຄົມໂລກຄວນຮັກສາທ່ວງທ່າການເຄື່ອນໄຫວປີກິລາ, ພະຍາຍາມເຮັດໃຫ້ກິລາກາຍເປັນພາກສ່ວນທີ່ຂາດບໍ່ໄດ້ຂອງຄວາມບາກບັ່ນພະຍາຍາມເພື່ອບັນລຸເປົ້າໝາຍພັດທະນາສະຫັດສະວັດ.

ທ່ານຫວັງກວາງຢາຜູ້ແທນສ.ປ ຈີນປະຈຳສະຫະປະຊາຊາດຕາງໜ້າພາກພື້ນອາຊີ--ປາຊີຟິກແລະປະເທດເຈົ້າພາບຈັດທຳງານກິລາໂອລິມປິກປີ 2008 ກ່າວວ່າ: ກິລາມັນເສີມຂະຫຍາຍຄວາມສາມັກຄີແລະການຮ່ວມມື, ສົ່ງເສີມຄວາມອົດທົນແລະຄວາມສະເໝີພາບ, ເພີ່ມທະວີສິນທະນາກັນແລະຄວາມສະໜິມກົມກຽວ. ພາຍໃຕ້ຄວາມບາກບັ່ນພະຍາຍາມພ້ອມກັນຂອງສະຫະປະຊາຊາດແລະບັນດາປະເທດສະມາຊິກອັນກວ້າງຂວາງ, ມະໂນຄະຕິແຫ່ງກິລາສົ່ງເສີມການພັດທະນາແລະສັນຕິພາບໄດ້ລົງເລິກສູ່ບັນດາຂົງເຂດສະຫະປະຊາຊາດ. ປະເທດຈີນໃນນາມປະເທດເຈົ້າພາບຈັດທຳງານກິລາໂອລິມປິກ 2008 ແລະງານກິລາໂອລິມປິກຄົນພິການ ຕະຫຼອດຮອດງານກິລາໂອລິມປິກພິເສດປີ 2007, ພວມຕັ້ງໜ້າດຳເນີນວຽກງານກະກຽມທີ່ມີສ່ວນກ່ຽວຂ້ອງ, ອອກແຮງສະແດງ "ງານກິລາໂອລິມປິກສີຂຽວ, ງານກິລາໂອລິມປິກວິທະຍາສາດເຕັກນິກແລະງານກິລາໂອລິມປິກມະນຸດສະສາດ" ຕໍ່ຊາວໂລກ, ອຸທິດຕົນເພື່ອສັນຕິພາບແລະການພັດທະນາຂອງມວນມະນຸດ.





# ທະນາຄານໂລກຮຽກຮ້ອງໃຫ້ນຳໃຊ້ພະລັງງານທີ່ຟື້ນຄືນໄດ້ໃຫ້ຫລາຍ

ທະນາຄານໂລກຮຽກຮ້ອງຕໍ່ປະເທດທີ່ຈະເລີນແລະປະເທດກຳລັງພັດທະນາໃຫ້ນຳໃຊ້ພະລັງງານທີ່ຟື້ນຄືນໄດ້ໃຫ້ຫຼາຍເພື່ອຜ່ອນຄາຍຜົນກະທົບບໍ່ດີຊຶ່ງນຳມາຈາກປະກົດການຫ້ອງອຸ່ນແລະຮັບມືຕໍ່ການຂາດແຄນພະລັງງານໃນໂລກອະນາຄົດພາຍໜ້າ.

ທ່ານນາງ Kathleen • ເຊລາ ຮອງຜູ້ອຳນວຍການທະນາຄານໂລກໄດ້ກ່າວຄຳປາໄສໃນຂະນະ "ການປະຊຸມສຳມະນາພະລັງງານທີ່ຟື້ນຄືນໄດ້ສາກົນ" ຊຶ່ງຈັດຂຶ້ນທີ່ເມືອງເມັກຊິກໂກຊີ້ອອກວ່າ: ປະເທດກຳລັງພັດທະນາຍັງບໍ່ທັນນຳໃຊ້ພະລັງງານທີ່ຟື້ນຄືນໄດ້ຢ່າງເອົາໃຈໃສ່ເປັນຢ່າງດີເທື່ອ. ນອກຈາກນີ້, ອັດຕານຳໃຊ້ຊັບພະຍາກອນພະລັງໄຟຟ້າຂອງບາງປະເທດທີ່ເສດຖະກິດດ້ອຍພັດທະນາພຽງແຕ່ 20% ທໍ່ນັ້ນ, ມັນຕໍ່າກວ່າປະເທດທີ່ຈະເລີນ 80% ເປັນສ່ວນຫຼາຍ.

ທ່ານນາງເຊລາສັງເກດເຫັນວ່າ: ອະນາຄົດພັດທະນາພະລັງງານແສງອາທິດແລະລົມມີທ່າອ່ງທ່າດີທີ່ສຸດ. ທ່ານນາງຊີ້ອອກວ່າ: ແຕ່ລະປະເທດຄວນວາງນະໂຍບາຍທີ່ກ່ຽວຂ້ອງ, ອະນຸຍາດໃຫ້ວິສາຫະກິດພາກເອກະຊົນເຂົ້າຮ່ວມລົງທຶນໃນໂຄງການພະລັງງານທີ່ຟື້ນຄືນໄດ້. ປະເທດທີ່ຈະເລີນຄວນໂອນເຕັກໂນໂລຊີແກ່ປະເທດກຳລັງພັດທະນາພ້ອມທັງສະໜອງທຶນຮອນຊ່ວຍເຫຼືອເຂົາເຈົ້າ ເພື່ອພັດທະນາພະລັງງານທີ່ຟື້ນຄືນໄດ້ຕື່ມອີກ, ແລະບັນລຸໄປດ້ວຍຜົນປະໂຫຍດທັງສອງກໍ່າສອງຝ່າຍ.

## 世界银行呼吁更多地使用可再生能源

世界银行呼吁发达国家和发展中国家更多地使用可再生能源，以减少温室效应带来的不良影响和应对未来世界能源的短缺。

ແປໂດຍ:
ທອງຂຽນ



# ໂຮງຮຽນຫລໍ່ຫລອມໂລຫະວິຊາສະເພາະຊັ້ນສູງຄຸນໝິງຮ່ວມມືສ້າງໂຮງຮຽນກັບລາວ

## 昆明冶专与老挝合作办学

昆明冶金高等专科学校与老挝教育部占巴塞大学、老挝百细中华理事会（华侨公学）共同签署教育合作备忘录，将充分利用各自资源，优势互补，采用股份制形式，在老挝占巴塞省百细市合办一所高等技术学校，招收老挝籍学生，为老挝的经济建设和当地华侨企业培养急需的人才。

ໂຮງຮຽນຫລໍ່ຫລອມໂລຫະວິຊາສະເພາະຊັ້ນສູງຄຸນໝິງແຂວງຢູນນານ ສປ ຈີນໄດ້ເຊັນບົດບັນທຶກຊ່ວງຈຳຮ່ວມມືດ້ານການສຶກສາກັບມະຫາວິທະຍາໄລແຫ່ງຊາດ ຈຳປາສັກຂອງລາວແລະສະມາຄົມຈີນປາກເຊ(ໂຮງຮຽນຈີນ),ທັງສາມຝ່າຍຈະນຳໃຊ້ຊັບພະຍາກອນຂອງໃຜລາວຢ່າງເຕັມທີ່,ຊຶ່ງຕ່າງຝ່າຍຕ່າງສ້າງທ່າແຮງຊ່ວຍເຫລືອຊຶ່ງກັນແລະກັນ,ນຳໃຊ້ຮູບການລະບົບຫຸ້ນສ່ວນຮ່ວມກັນສ້າງໂຮງຮຽນເຕັກນິກຊັ້ນສູງ 1 ຫລັງຂຶ້ນທີ່ເມືອງປາກເຊ ແຂວງຈຳປາສັກຂອງລາວ,ຈາກນັ້ນກໍ່ຈະເປີດຮັບສະໝັກເອົານັກສຶກສາທີ່ເປັນຄົນລາວເຂົ້າຮຽນ,ເພື່ອບຳລຸງສ້າງຊັບພະຍາກອນມະນຸດທີ່ຕ້ອງການອັນຮີບດ່ວນໃຫ້ແກ່ການສ້າງສາພັດທະນາເສດຖະກິດຂອງລາວແລະວິສາຫະກິດສ້າງສາເສດຖະກິດຂອງຊາວຈີນຕ່າງດ້າວປະຈຳທ້ອງຖິ່ນດັ່ງກ່າວ.

ເມື່ອບໍ່ດົນມານີ້,ຄະນະຜູ້ແທນມະຫາວິທະຍາໄລແຫ່ງຊາດຈຳປາສັກ ສປປລາວແລະສະມາຄົມຈີນປາກເຊໄດ້ສົ່ງຄະນະໄປຢ້ຽມຢາມໂຮງຮຽນຫລໍ່ຫລອມໂລຫະວິຊາສະເພາະຊັ້ນສູງຄຸນໝິງ.ໃນໂອກາດດຽວກັນໂຮງຮຽນຫລໍ່ຫລອມໂລຫະວິຊາສະເພາະຊັ້ນສູງຄຸນໝິງກໍ່ໄດ້ແຮກສ່ຽວຢ່າງເປັນທາງການກັບ"ໂຮງຮຽນຈີນ"ຂອງສະມາຄົມຈີນໃນລາວ.ໃນເດືອນ 7 ຂອງປີທີ່ຜ່ານມາ,ໂຮງຮຽນຫລໍ່ຫລອມໂລຫະວິຊາສະເພາະຊັ້ນສູງຄຸນໝິງໄດ້ຄັດເລືອກເອົາຄູອາຈານແລະນັກສຶກສາທີ່ຮຽນຈົບສົ່ງໄປຊ່ວຍສິດສອນນັກຮຽນຢູ່ທີ່ໂຮງຮຽນຈີນປາກເຊເປັນເວລາ 2 ປີ.

ໂຮງຮຽນຫລໍ່ຫລອມໂລຫະວິຊາສະເພາະຊັ້ນສູງຄຸນໝິງກັບມະຫາວິທະຍາໄລແຫ່ງຊາດຈຳປາສັກ ກໍ່ໄດ້ເຊັນສັນຍາແລກປ່ຽນແລະຮ່ວມມືວິຊາການຄືະສອງຝ່າຍແຕ່ລະປີຢ່າງໜ້ອຍກໍ່ແຕ່ງຕັ້ງສາດສະດາຈານ,ອາຈານຫລືພະນັກງານຄົ້ນຄວ້າ1-2ທ່ານດຳເນີນການແລກປ່ຽນຢ້ຽມຢາມຊຶ່ງກັນແລະກັນ,ເຮັດວຽກຢູ່ຝ່າຍກົງກັນຂ້າມ 1 ປີຫລື 1 ປີຂຶ້ນໄປແລະຕ່າງຝ່າຍຕ່າງຈັດສົ່ງນັກສຶກສາຊຶ່ງກັນແລະກັນ;ດຳເນີນການຮ່ວມມືເປັນຕົ້ນຄືະແລກປ່ຽນວິຊາການ,ຂໍ້ມູນຂ່າວສານ,ຂໍ້ມູນເອກະສານແລະແລກປ່ຽນວິທີການສິດສອນຊຶ່ງທັງສອງຝ່າຍມີຄວາມສົນໃຈນຳກັນ.

ຄະນະຜູ້ແທນການໄປສະນີຂອງຈີນກັບຄະນະຜູ້ແທນການໄປສະນີແຫ່ງຊາດລາວໄດ້ເຊັນ "ບົດບັນທຶກຄວາມເຂົ້າໃຈການຮ່ວມມືພັດທະນາ", ສອງຝ່າຍມີແຜນການຜ່ານຊາຍແດນຈີນ--ລາວແລກປ່ຽນໄປສະນີພັນໂດຍກົງ, ຕ່າງສະໜອງການບໍລິການສົ່ງຜ່ານໄປສະນີພັນຂອງປະເທດທີ່ 3 ແລະດຳເນີນການຈໍລະຈອນວັດຖຸສາກົນ, ການສົ່ງໂອນເງິນຕາສາກົນ, ການແລກປ່ຽນວັດທະນະທຳສະສົມສະແຕມສາກົນເປັນຕົ້ນ. ຕາບນັ້ນ, ການໄປສະນີຢຸນນານຈະກາຍເປັນຊ່ອງທາງຜ່ານທີ່ສຳຄັນຂອງປະເທດຈີນທີ່ສົ່ງຝາກໄປສະນີພັນ, ການແລກປ່ຽນຂໍ້ມູນຂ່າວສານ, ການຈໍລະຈອນໄປສະນີວັດຖຸສູ່ອາຊີອາຄະເນແລະອະນຸທະວີບອາຊີໃຕ້, ທັງເຮັດໃຫ້ກຳນົດເວລານຳສົ່ງໄປສະນີພັນສັ້ນເຂົ້າ.

ໃນການເຈລະຈາວຽກງານຢ່າງເປັນທາງການນັ້ນ, ທ່ານລີຢົງລັ່ງຫົວໜ້າພະແນກໄປສະນີແຂວງຢູນນານ ຫົວໜ້າຄະນະຜູ້ຕາງໜ້າໄປສະນີຂອງຈີນກັບທ່ານກ້ຽງ ຄຳເກດ ຫົວໜ້າກົມໄປສະນີຂອງສ ປ ປ ລາວ, ໄດ້ສົນທະນາຄົ້ນຄວ້າກ່ຽວກັບການຍົກສູງປະສິດທິຜົນການບໍລິການໄປສະນີ, ເພື່ອກ້າວເຂົ້າເປັນການຊຸກຍູ້ການຄ້າແລະການຄົບຫາກັນທາງດ້ານວັດທະນະທຳລະຫວ່າງສອງຝ່າຍໃຕ້ສະພາບແວດລ້ອມສາກົນໃນການຮ່ວມມືອະນຸພາກພື້ນແມ່ນ້ຳຂອງ.

ການແລກປ່ຽນໄປສະນີພັນໂດຍກົງຂອງສອງປະເທດ, ເຮັດໃຫ້ໄລຍະທາງໄປສະນີຫຍໍ້ສັ້ນເຂົ້າ 5500 ກວ່າກິໂລແມັດ, ກ່ອນໜ້ານີ້ຈົດໝາຍຝາກຈາກຄຸນໝິງໄປວຽງຈັນ, ລ້ວນແຕ່ຕ້ອງສົ່ງຜ່ານໄປເສັ້ນທາງປັກກິ່ງແລະຊ່ອງແຄບມາລະກາ, ບໍ່ພຽງແຕ່ສິ້ນເປືອງເວລາ, ປະສິດທິຜົນກໍ່ຕ່ຳ.

ປະຈຸບັນ, ຈົດໝາຍທຳມະດາຝາກໄປ ທາງບົກຕ້ອງກິນເວລາ 2 ເດືອນຈຶ່ງໄດ້ຮັບ, ຖ້າແລກປ່ຽນຊຶ່ງກັນແລະກັນໂດຍກົງປະກົດເປັນຈິງແລ້ວ, ເວລາດັ່ງກ່າວຈະຫຍໍ້ສັ້ນເປັນ 2 ວັນ, ທໍ່ກັບການສົ່ງຈົດໝາຍທາງອາກາດບໍ່ຫລຸດຢ່ອນກັນ. ສອງຝ່າຍພວມ ດຳເນີນການປຶກສາຫາລືກັນກ່ຽວກັບລາຍລະອຽດທີ່ເປັນຮູປະທຳຈຳນວນໜຶ່ງ, ພ້ອມທັງກະແຜນການຈັດການປະຊຸມສອງຝ່າຍທີ່ນະຄອນຫລວງວຽງຈັນສ ປ ປ ລາວໃນຄັ້ງຕໍ່ໄປ, ເພື່ອຕົກລົງຮູບແບບແລະເນື້ອໃນການດຳເນີນງານທີ່ເປັນຕົວຈິງຢ່າງແນ່ວແນ່.

ພາຍຫລັງດຳເນີນການຮ່ວມມືທາງໄປສະນີແລ້ວ, ຢູນນານຈະກາຍເປັນຊ່ອງທາງສຳຄັນຂອງປະເທດຈີນໃນການນຳສົ່ງໄປສະນີພັນ, ແລກປ່ຽນຂໍ້ມູນຂ່າວສານແລະການຈໍລະຈອນໄປສະນີວັດຖຸສູ່ອາຊີອາຄະເນແລະເຊື່ອມໂຍງອະນຸທະວີບອາຊີໃຕ້, ເຮັດໃຫ້ເວລາຂອງການຝາກສົ່ງໄປສະນີພັນລະຫວ່າງຈີນກັບປະເທດແລະເຂດແຄວ້ນດັ່ງກ່າວຫຍໍ້ສັ້ນເຂົ້າ.

(ແປໂດຍ: ທອງຂຽນ) (ກວດແກ້ໂດຍ:ສີສຸວັນ)



## 中国与老挝实现直邮

中国邮政代表团与老挝国家邮政代表团签署了《发展合作谅解备忘录》，双方计划通过中老边境直接互换邮件，互为提供第三国邮件经转服务以及开展国际物流、国际汇兑、国际集邮文化交流等。届时，云南邮政将成为中国邮政邮件寄递、信息交流、邮政物流通往东南亚、南亚次大陆的主要通道，并相应缩短邮件传递时限。

# ການຕິດຕໍ່ໄປສະນີໂດຍກົງລະຫວ່າງຈີນກັບລາວໄດ້ປະກົດເປັນຈິງ



## 桂林山水甲天下

位于中国广西壮族自治区东北部的桂林，是一个山水秀丽的风景区，也是一座历史悠久的文化名城。一提到桂林，人们脑子里就出现挺拔峻峭的孤峰、精彩出奇的岩洞和倒影清翠的漓江，出现刘三姐的歌声，一切都像神话故事那样奇特，令人神往！

# ພູຜາແມ່ນ້ຳລຳເຊກຸ່ຍຫຼິນເປັນເອກໃຕ້ລຸ່ມຟ້າ

ກຸ່ຍຫຼິນມີທີ່ຕັ້ງຢູ່ພາກຕາເວັນອອກສຽງເໜືອເຂດປົກຄອງຕົນເອງຂອງຊົນເຜົ່າຈວງກວາງຊີປະເທດຈີນ, ເປັນເຂດທິວທັດທີ່ສວຍສົດງົດງາມໄປດ້ວຍພູຜາແມ່ນ້ຳລຳທານແຫ່ງໜຶ່ງ, ທັງເປັນໂຕເມືອງຊ່າລືທາງວັດທະນະທຳທີ່ມີປະຫວັດສາດຍາວນານແຫ່ງໜຶ່ງ.

ເມື່ອເວົ້າຮອດກຸ່ຍຫຼິນ, ຫ້ວງນຶກຂອງຄົນທັງຫຼາຍຄົງຈະປາກົດຈອມຜາປ່ຽວສູງຊັນຕັ້ງຊ້ອງຊໍ່ຢູ່, ມີຖ້ຳຜາຫີນທີ່ມະຫັດສະຈັນແລະແມ່ນ້ຳລີຈຽງທີ່ໃສຕິ້ງຫລິ້ງສ່ອງເຫັນເງົາ, ທຸກສິ່ງທຸກຢ່າງກໍ່ເໝືອນດັ່ງເທບນິຍາຍທີ່ງຶດງໍ້ອັດສະຈັນຊວນໃຫ້ຄົນໃຝ່ຫາແທ້!

ຕັ້ງແຕ່ບູຮານະການມາ, ນັກວັນນະຄະດີມັກຈະແຕ່ງກາບແຕ່ງກອນລຳເຍີ້ນສັນລະເສີນມັນໄວ້, ນັກແຕ້ມວາດແຕ້ມພັນລະນາມັນໄວ້, ນັກຖ່າຍຮູບຈາລຶກມັນໄວ້ດ້ວຍແກ້ວເລັນ(ກ້ອງຖ່າຍຮູບ). ຄຳກອນຂອງນັກວັນນະຄະດີ ຫານຢີ ຄົນສະໄໝລາຊະວົງຖັງຂຽນໄວ້ວ່າ: "ແມ່ນ້ຳປຽບແຖບຜ້າໄໝສີຄາມ, ພູເຂົາເໝືອນປັກປິ່ນເກົ້າຢົກຂຽວ" ຊຶ່ງໄດ້ພັນລະນາພາບພົດສີສັນພູຜາແມ່ນ້ຳກຸ່ຍຫຼິນ ໂດຍສັງເຂບ. ຄຳກອນເອົາປັກປິ່ນເກົ້າຢົກຂຽວອຸປະມາພູຜາຈອມດອຍຕັ້ງຊ້ອງຊໍ່ດຸດຈະດັ່ງໜໍ່ໄມ້ພຸ່ງພົ້ນຈາກໜ້າດິນ, ເອົາແຖບຜ້າໄໝສີຄາມອຸປະມາແມ່ນ້ຳໃສໄຫຼວົກວຽນກ້ຽວກອດ. ແຕ່ວ່າ ພູມພາບຫຼາຍຮູບແບບຂອງກຸ່ຍຫຼິນຫຼາຍລົ້ນອະເນກນອງ, ຈະພັນລະນາໃຫ້ໝົດດ້ວຍວາຈາຄຳເວົ້າສອງສາມຄຳບໍ່ແມ່ນຄ່ອຍເປັນອັນຂາດ. ພູຜາແມ່ນ້ຳລຳເຊກຸ່ຍຫຼິນຜ່ານການແກະສະຫຼັກຂອງທຳມະຊາດມາຫຼາຍຝ້າລາປີມີພາບແປກປະຫຼາດທີ່ຫາຍາກໃນແຫ່ງອື່ນ, ເຊັ່ນ: ຮູຖ້ຳເລິກວົກວຽນລະອິດລະອ້ຽວ, ນ້ຳຫ້ວຍໄຫຼລິນມາຫຼາຍບ່ອນຊຶ່ງຈະຫາຍອດຫ້ວຍໄດ້ຍາກ, ມັນໄດ້ມີເນື້ອ







ໃນພາບວິວອຸດົມຕື່ມ, ເຮັດໃຫ້ພູຜາແມ່ນ້ຳກູ່ຍຫຼີນຍິ່ງມີສະເໜ່ດູດດື່ມອີກ.

ພາບວິວທິວທັດກູ່ຍຫຼີນມີສີສັນພິເສດຂອງແຕ່ລະແຫ່ງໃຜມັນ, ໃນນັ້ນພາວວິວທິວທັດຢາງໂສແປກປະຫຼາດກວ່າໝູ່, ເຫດນັ້ນຈຶ່ງມີຊື່ງາມນາມວ່າ: "ພູຜາແມ່ນ້ຳລຳເຊກູ່ຍຫຼີນເປັນເອກໃຕ້ລຸ່ມຟ້າ" ແລະ "ພູມພາບຢາງໂສເປັນເອກໃນກູ່ຍຫຼີນ" ວ່າອັ້ນ. ລ່ອງຂຶ້ນທິດເໜືອຕາມລຳນ້ຳລີຈຽງໄປຮອດຊິງອານ, ບ່ອນນີ້ບໍ່ພຽງແຕ່ມີພາບໜ້າອັດສະຈັນຮູຖ້ຳນ້ອຍ ໆ ຊອດຜາຫີນເທົ່ານັ້ນ ຍັງມີຄອງລິງສີທີ່ຊ່າລືເປັນຄອງນ້ຳຄົນຂຸດສ້າງ. ພາບວິວທິວທັດອັນສວຍສົດງົດງາມໜ້າອັດສະຈັນໃນຖິ່ນຊິງອານ, ກູ່ຍຫຼີນແລະຢາງໂສໄດ້ປະກອບເປັນພູຜາແມ່ນ້ຳລຳເຊກູ່ຍຫຼີນສຸດທີ່ງາມສະຫງ່າ. ປະຫວັດການພັດທະນາກູ່ຍຫຼີນຄ່ອນຂ້າງດົນນານ, ບູຮານສະຖານວັດທະນະທຳທີ່ຕົກຄ້າງມາໃນແຕ່ລະສະໄໝແສນອຸດົມສົມບູນ. ແຕ່ລະສະໄໝຜ່ານມາ, ກູ່ຍຫຼີນໄດ້ມີການກໍ່ສ້າງຕໍ່ເຕີມຢ່າງບໍ່ຢຸດຢັ້ງເຊັ່ນ: ທະລຸເສັ້ນທາງຕາມເຫວຫີນອັນ; ຄວັດແກະຮູບພາບຕາມຮູຖ້ຳທີ່ແປກປະຫຼາດ; ປຸກສ້າງສາລາຫໍຄອຍຢູ່ສະຖານທີ່ທິວທັດຊ່າລືສວຍງາມ. ການກໍ່ສ້າງແລະສິລະປະສິລາຈາລຶກກັບພູມພາບສົດສວຍທຳມະຊາດປະສານກົມກືນເປັນອັນໜຶ່ງອັນດຽວ, ເຮັດໃຫ້ພູຜາແມ່ນ້ຳລຳເຊກູ່ຍຫຼີນຍິ່ງເອີບອາບໄປດ້ວຍລົດຊາດການກອນຕື່ມອີກ.




# ທ່ຽວຈິນຕ້ຽນ(ຜາສາດຄຳ)ທີ່ມີລົດຊາດບູຮານອະມະຕະ




## 古韵长存游金殿

金殿风景区位于昆明市东郊的鸣凤山麓，占地 1773 亩，距市区 8 公里。金殿名胜区创建于明万历三十年(1602)。明崇祯十年(1637)铜殿迁宾川鸡足山，清康熙十年（1671）平西王吴三桂重建的重檐歇山式真武铜殿，重 250 吨，是中国现存最大的纯铜铸殿。

ເຂດທິວທັດຈິນຕ້ຽນຕັ້ງຢູ່ຕີນພູໝິງຝົງຊານເມືອງເບື້ອງຕາເວັນອອກຄຸນໝິງ, ກວມເນື້ອທີ່ຕາດິນ 1773 ມູ່(118.2 ເຮັກຕາ), ຫ່າງໄກຈາກໂຕເມືອງ 8 ກິໂລແມັດ.

ຍ່າງລຽບຕາມຕີນພູ, ແລ້ວຜ່ານຂົວຢີນຊຽນ, ເຂົ້າຜັກຕູໂຂງ "ພູມພາບງາມໝິງຝົງ", ຜ່ານກາຍ "ປະຕູຟ້າທີ 1" ແລະ "ປະຕູຟ້າທີ 3". ປີນຂຶ້ນປະຕູສູ່ຟ້າກໍ່ຈະມອງເຫັນປະຕູໃຫຍ່ "ຫໍທ່າຍເຫີ" ທີ່ເຄັ່ງຂຶມວາດເກົ່າແກ່ລຽບ ໆ. ເມື່ອເຂົ້າສູ່ປະຕູວັດ, ຜັດຜ່ານປະຕູລີນຊິນອີກກໍ່ເຫັນຝາກຳແພງກໍ່ດິນຈີ່ຕັ້ງຕະຫງ່ານຢູ່, ຍາວຫຼາຍສິບວາ, ປຽບເໝືອນໂຕເມືອງຫວງຫ້າມຂອງພະລາຊະວັງ.





ຢ່າງຕາມພັກເຂົ້າ "ໂຕເມືອງ", ປະເຊີນໜ້າແມ່ນພັກທີ່ຕໍ່ກັນຂຶ້ນໄປສູງ ໆ, ແລ້ວຈຶ່ງແມ່ນສິ່ງກໍ່ສ້າງໃຈກາງໄດ້ແກ່ຫໍທ່ານເທົ, ຊຶ່ງແມ່ນຈິນຕ້ຽນ(ພາສາດຄຳ)ທີ່ລືຊື່ນັ້ນແຫຼະ. ເຂດທິວທັດບູຮານສະຖານມີຫໍລະຄັງທີ່ສ້າງຂຶ້ນສາມຊັ້ນສູງ 29 ແມັດ, ແຂວນລະຄັງທູ່ທອງບັກໃຫຍ່ທີ່ຜະລິດສະໄໝລາຊະວົງໝິງ ຄ.ສ.1432, ລະຄັງສູງ 3.5 ແມັດ, ຂະໜາດວົງມົນຂອບຍາວ 6.7 ແມັດ, ມີນ້ຳໜັກ 14 ໂຕນ, ເປັນລະຄັງໃຫຍ່ສຸດໃນແຂວງຢູນນານ.

"ອຸທິຍານນິທັດສະການຈິນຕ້ຽນຈີນ" ທີ່ສ້າງຂຶ້ນໃໝ່ນັ້ນ, ໄດ້ຮັບໂຮມເອົາສະຖາປັດຕະຍະກຳທອງເຫຼືອງວູຕັງຊານແຂວງຫູເປ, ວູໄຖຊານແຂວງຊານຊີ, ໄທຊານແຂວງຊານຕຸ້ງແລະທວານໂສວຊານປັກກິ່ງ. ໃນອຸທິຍານມີຮ່ອງນ້ອຍນ້ຳລອດກ້ອງ, ມີພະນັກມີເດີນທ່ຽວພ້ອມທັງປະຕູຫີນຮົ້ວຫ້ອຍທາງແລວແລະຕົ້ນໄມ້ດອກດວງຫຼາຍຊະນິດສະຫຼັບກັນເປັນພູມພາບກົມກືນ, ກາຍເປັນອຸທິຍານວັດທະນະທຳທອງເຫຼືອງທີ່ຈຳລອງຢ່າງຈຸ່ມຈື່ມງາມຕາ. ຈິນຕ້ຽນຍັງສ້າງສວນພຶກສາຊາດ 500 ມູ່(33.333ເຮັກຕາ), ມີພື້ນທີ່ສວນ 10 ແຫ່ງ ສ້າງເປັນສວນດອກຊາແລະສວນດອກທະກາງ, ນຳແນວພັນພືດອຸທິຍານ 2000 ກວ່າແນວເຂົ້າມາ.

ເຂດທິວທັດບູຮານສະຖານຈິນຕ້ຽນເປັນຈຸດທ່ອງທ່ຽວທິວທັດທີ່ມີສີສັນເອກະລັກສະເພາະ ຄືເອົາພູມພາບມະນຸດສາດບວກກັບພູມພາບທຳມະຊາດເປັນອັນໜຶ່ງອັນດຽວ. ໃນນັ້ນບ່ອນທີ່ດຶງດູດສາຍຕາແມ່ນພາສາດທອງທີ່ຫຼໍ່ດ້ວຍທອງກົ່ວລ້ວນ, ເມື່ອແສງແດດສ່ອງລົງມານັ້ນເປັ່ງແສງປະກາຍເຫຼືອມຍິບຍັບຈັບຕາ, ດ້ວຍເຫດນີ້ຈຶ່ງພາກັນເອີ້ນວ່າ ພາສາດຄຳນັ້ນເອງ. ຈິນຕ້ຽນເປັນບູຮານວັດຖຸທີ່ຄຸ້ມຄອງເປັນຈຸດສຸມຂອງຈີນ, ແລະກໍ່ແມ່ນພາສາດໃຫຍ່ສຸດທີ່ຫຼໍ່ດ້ວຍທອງລ້ວນຊຶ່ງຮັກສາໄວ້ໃນປະຈຸບັນຂອງຈີນ. ພັກຂັ້ນໄດ, ພື້ນແລະພະນັກລ້ວນແຕ່ກໍ່ດ້ວຍຫີນອ່ອນຢ່າງພິດສະດານ. ຫໍພາສາດມີອາດຊົງສະຫງ່າຜ່າເຜີຍງາມຕາ. ເບື້ອງຫຼັງພາສາດມີກົກດອກຊາກົກໜຶ່ງລຳໃຫຍ່ກາຍອ້ອມໜຶ່ງແລະຕົ້ນຄຳຮໍ່ສອງຕົ້ນ, ຕາມເລົ່າສືບກັນມາວ່າປູກແຕ່ສະໄໝລາຊະວົງໝິງ (ຄ.ສ.1368--1644)ພຸ້ນ, ຮອດຍາມບຸນກິນຈຽງທຸກ ໆ ປີ, ດອກຊາໃນເບື້ອງຫຼັງພາສາດນັບເປັນພັນ ໆດວງກໍ່ແຂ່ງກັນເບັ່ງບານງາມສະຫງ່າ, ເຮື່ອເຮືອງໄປທົ່ວແດນດິນ.



文：曾晓月

ແປໂດຍ: ທອງຂຽນ

# ເມືອງລາວ:



## 老挝，“撒拜迪”

离开老挝已经半年多时间了，一想起那段不平凡的经历，我总会说一声：“老挝，撒拜迪！”（老挝语：“您好！”）

ເດັກນ້ອຍໃນເມືອງລາວໜ້າຮັກທີ່ສຸດ, ບໍ່ວ່າຈະໄປຮອດແຫ່ງຫົນໃດ, ຈະແມ່ນຢູ່ໃນລົດເມທີ່ແລ່ນໄປຕາມທາງກໍ່ດີ, ທະແນມແຕ່ອອກປາກວ່າສະບາຍດີຄຳໜຶ່ງ, ກໍ່ຈະໄດ້ຍິນພວກຂະເຈົ້າຕອບວ່າສະບາຍດີ!ດ້ວຍສຽງດັງ ໆ ຢ່າງຊື່ນຊົມຍິນດີ.

ເມື່ອໄປເຖິງບ້ານບໍ່ເຕນຊຶ່ງເປັນບ້ານນ້ອຍແຫ່ງຫນຶ່ງຢູ່ຊາຍແດນພາກເຫນືອຂອງລາວ ຄະນະທ່ອງທ່ຽວຂອງພວກເຮົາໄດ້ນັ່ງຢູ່ກ້ອງຜາມບ່ອນຣົ່ມຄອຍຖ້າຄົນມາຮັບຕ້ອນ, ໄດ້ຍິນສຽງຄົນຮ້ອງຂຶ້ນ, ສຸດທ້າຍກໍແມ່ນເດັກນ້ອຍຫມູ່ຫນຶ່ງພວມຍ່າງກາຍແຄມທາງໄປ, ໄດ້ພາກັນຂານຕອບດ້ວຍສຽງຊັດແຈ້ງ, ມີບາງຄົນຍັງມີທ່າທາງເຕັ້ນແຮ້ງເຕັ້ນກາໄປນຳດ້ວຍ, ລ້ວນແຕ່ເວົ້າສັບຄືກັນຫລຽວຄືນຫລັງເບິ່ງອີກເຫັນເຂົາເຈົ້າແຕ່ລະຄົນລ້ວນແຕ່ມີໃບຫນ້າຍິ້ມແຍ້ມແຈ່ມໃສ, ເລີ່ມຕອດຫົວຖາມຂ່າວຊຶ່ງກັນແລະກັນ. ເມື່ອຖາມຄົນຢູ່ຂ້າງຄຽງແລ້ວ, ຈຶ່ງຮູ້ວ່າສັບດັ່ງກ່າວກໍ່ຄື "ສະບາຍດີ". ຕໍ່ມາຕາບໃດຕ້ອງການຖາມຫາແຕ່ລະມື້ໄດ້ຍິນແຕ່ສັບດັ່ງກ່າວກ້ອງກັງວານໃນແກ້ວຫູບໍ່ຂາດ, ຈົນຮອດມື້ຫນຶ່ງເຮົາກໍ່ໄດ້ເວົ້າສຽງອັນຊັດແຈ້ງຂອງຄຳສັບສະບາຍດີນີ້ເວົ້າກັບຄົນທີ່ໄດ້ພົບກັນ, ສິ່ງທີ່ຂານຕອບນັ້ນແມ່ນໃບຫນ້າຍິ້ມແຍ້ມແຈ່ມໃສປານດອກໄມ້ໃກ້ຈະບານແຍ້ມ, ສຽງຕອບນິ່ມນວນ



# "ສະບາຍດີ"





ອົບອຸ່ນນັ້ນເຮັດໃຫ້ເຮົາມີຄວາມຮູ້ສຶກຄືວ່າເຮົາໄດ້ຕະບອງເນລະມິດສຸກສັນໄວ້ໃນກຳມືຢ່າງແທ້ຈິງ, ເມື່ອເອົາຕະບອງດັ່ງກ່າວຊີ້ໄປບ່ອນໃດກໍ່ລ້ວນແຕ່ກາຍເປັນບັນຍາກາດອັນມ່ວນຊື່ນລື່ນເລີງ.

ບໍ່ວ່າຈະຢູ່ໃນຕົວເມືອງຫລືຊົນນະບົດ, ບໍ່ວ່າຈະແມ່ນ ຜູ້ຮັ່ງມີສີສຸກຫລືຜູ້ທຸກຍາກຂາດເຂີນ, ບັນຍາກາດຄວາມຮັກໄຄ່ໄມຕີແລະລະມຸນລະມ່ອມໄດ້ປົກຄຸ້ມຢູ່ຕະຫລອດ, ນີ້ຄົງເປັນພື້ນຖານຄວາມຮູ້ສຶກຂອງແຕ່ລະຄົນທີ່ໄດ້ມາຢ້ຽມແຜ່ນດິນຕອນນີ້. ຢູ່ເມືອງຫລວງພະບາງຊຶ່ງເປັນຕົວເມືອງໃຫຍ່ທີ່ 4 ຂອງລາວ, ພັນລະຍາຂອງຜູ້ອຳນວຍການ ໂຮງແຮມທີ່ມີນິດໄສນິ່ມນວນອ່ອນຫວານນັ້ນ, ແຕ່ລະມື້ໄດ້ແຕ່ງອາຫານຈີນ ທັງແຊບທັງລາຄາຖືກໃຫ້ເຮົາກິນ, ຍັງໄດ້ພາເຮົາໄປເລາະຕະຫລາດຂາຍຜັກ, ຢູ່ນະຄອນຫລວງວຽງຈັນນັກສຶກສາມະຫາວິທະຍາໄລທີ່ເປີດອົກເປີດໃຈກະຕືລືລົ້ນ ໄດ້ພາເຮົາຂີ່ລົດຈັກຢ່າງບໍ່ຫົວຊາກັບຄວາມຫຍຸ້ງຍາກ, ໄປເລາະຫາສະຖານທູດທີ່ເຮົາຕ້ອງການໄປເຊັນວີຊາ.

ການຢ້ຽມຢາມເມືອງລາວເປັນເວລາ 28 ວັນແລະຄືນ, ແຕ່ເໜືອຕະຫລອດໃຕ້, ຜ່ານແຜ່ນດິນອັນກວ້າງໃຫຍ່ແຫ່ງນີ້ໄດ້ສອນໃຫ້ເຮົາຮູ້ໃຊ້ຂອງວິເສດອັນໜຶ່ງຈົນຊົ່ວຊີວິດຂອງຕົນ, ນັ້ນກໍ່ຄື: ຖ້າເອົາຄວາມສະໜຸກສຸກສຳລານຂອງຕົນແຜ່ຜາຍໄປໃຫ້ຜູ້ອື່ນແລ້ວ, ຕົນກໍ່ຈະໄດ້ມີຄວາມສະໜຸກສຸກສຳລານຂຶ້ນອີກໄຊ້ຫລາຍເທົ່າຕົວ!

文/图：杨增俊



# ສິລະປະຫັດຖະກຳພັນປີພຸ່ງແສງປະກາຍສະຫງ່າງາມ

## --ທ່ຽວຊົມຜະລິດພັນຫັດຖະກຳເຄື່ອງເງິນບ້ານຊິນຮວາ



# 千年工艺放异彩

## ——新华村银器手工艺品巡礼

新华白族旅游村地处云南省大理白族自治州鹤庆县城以北，是一个典型的白族聚居村寨，有着悠久的银器民族手工艺品加工的历史。这些独具民族特色的手工艺品，已成为传承白族文化、沟通各民族友好往来的彩链。



ບ້ານທ່ອງທ່ຽວຊິນຮວາຊົນເຜົ່າປ່າຍ, ເດີມທີເອີ້ນວ່າບ້ານທົ່ນ, ພື້ນທີ່ຕັ້ງຢູ່ພາກຕາເວັນຕົກສຽງເໜືອແຂວງຢູນນານ, ຢູ່ທາງທິດເໜືອຂອງຕົວເມືອງເຫີສິນກິ່ງແຂວງປົກຄອງຕົນເອງຂອງຊົນເຜົ່າປ່າຍຕາລີ, ຖືກຂະໜານນາມວ່າ "ຖິ່ນຖານສິລະປະພື້ນເມືອງຂອງຈີນ".

ບ້ານຊິນຮວາເປັນຕົວແບບບ້ານໜຶ່ງໃນໝູ່ບ້ານຢູ່ຊຸມລຸມຂອງຊົນເຜົ່າປ່າຍ, ມີປະຫວັດປຸງແຕ່ງສິລະປະຫັດຖະກຳຊົນເຜົ່າທີ່ຍາວນານ. ກ່ອນນີ້ພັນກວ່າປີໃນສະໄໝເມືອງນ່ານເຈົ້າລາຊະວົງຖັງພຸ້ນ, ພວກຊ່າງຝີມືໃນບ້ານຊິນຮວາ ກໍ່ດຳລົງຊີບດ້ວຍວິຊາປຸງແຕ່ງຜະລິດພັນຫັດຖະກຳຊົນເຜົ່າປະເພດໂລຫະທອງເຊັ່ນ: ໄລອັດປະຕູ, ກ້ອງແຂນແລະໝໍ້ຊາມເປັນຕົ້ນ, ມາຮອດຕົ້ນປີຫົງອູ (ຄ.ສ 1368) ສະໄໝລາຊະວົງໝິງ, ມູນເຊື້ອຂອງການປຸງແຕ່ງໂລຫະແຫ່ງນີ້ກໍ່ໄດ້ເປັນຮູບເປັນຮ່າງຂຶ້ນ.

ປັດຈຸບັນ, ຜະລິດຕະພັນສິລະປະຫັດຖະກຳທອງແລະເງິນທີ່ພວກຊ່າງຝີມືໃນບ້ານຊິນຮວາປຸງແຕ່ງຜະລິດຂຶ້ນນັ້ນມີຮອດຮ້ອຍກວ່າລະບົບເກືອບພັນຊະນິດ. ມີທັງເຄື່ອງປະດັບ, ເຄື່ອງໃຊ້ຊີວິດປະຈຳວັນແບບຕີເບດ, ອຸປະກອນທາງສາສະໜາແລະຜະລິດພັນຫັດຖະກຳເປັນຕົ້ນ, ຜະລິດພັນສິລະປະຫັດຖະກຳເຫຼົ່ານີ້ໄດ້ສົ່ງອອກຈຳໜ່າຍຮອດເຂດແຂວງຕີເບດແລະເສຊວນຕະຫຼອດຮອດປະເທດໄທແລະມຽນມາ.

ເຄື່ອງເງິນຕົບແຕ່ງເປັນດອກດວງປະເສີດອັນໜຶ່ງໃນສິລະປະຫັດຖະກຳຊົນເຜົ່າຂອງຊິນຮວາ, ເຄື່ອງເງິນປະດັບ 12 ລູກມື້ (ນັກສັດ) ໃນໝວກເດັກນ້ອຍ ພຸດທະຮູບສີລິມຸງຄຸນແລະກຸນແຈອາຍຸຍືນ ເປັນຂອງປະເສີດຂະໜາດນ້ອຍທີ່ແກະສະຫຼັກຮູບມູນ. ນອກຈາກນີ້ແລ້ວ, ເຄື່ອງໃຊ້ຊີວິດປະຈຳວັນມາກຫຼາຍຊະນິດ, ສຳຄັນກໍ່ແມ່ນເຄື່ອງເງິນລ້ວນ. ນອກຈາກເຄື່ອງໃຊ້ສອຍຊີວິດປະຈຳວັນແບບຕີເບດແລ້ວ ຍັງມີເຄື່ອງດື່ມເຫຼົ້າແລະຊຸດນ້ຳຊາເປັນຕົ້ນຮ້ອຍກວ່າຊະນິດ, ໃນນັ້ນ ເຄື່ອງເງິນດື່ມເຫຼົ້າເກົ້າມັງກອນເປັນຜະລິດຕະພັນຕົວແທນ: ໂຕເຕົ້າໃສ່ເຫຼົ້າຈະດ້ວຍລວດລາຍເກົ້າມັງກອນກ້ຽວອ້ອມມີອາດຊົງຕ່າງກັນ, ມີຈອກແປດອັນປະກອບເປັນຊຸດຢູ່ອ້ອມຂ້າງ, ບໍລິມາດເຫຼົ້າເຕົ້າໜຶ່ງເທຍັ້ນເຕັມຈອກອ້ອມຂ້າງພໍດີພໍງາມ. ໝໍ້ເຕົາເກົ້າມັງກອນຄັນຕົ້ມນ້ຳຟົດແລ້ວ ອາຍຮ້ອນພົ່ນອອກຈາກປາກມັງກອນເປັນພາບປະຫຼາດງາມຕາ.

ຜະລິດຕະພັນອະນຸສອນຂະໜາດນ້ອຍຊະນິດຫຼາຍແບບທີ່ຊ່າງຝີມືຜະລິດຂຶ້ນນັ້ນຫລັງຈາກເອົາປ້ອນຕະຫຼາດກໍ່ໄດ້ຮັບຄວາມມັກຊອບຂອງແຂກທ່ອງທ່ຽວບໍ່ໜ້ອຍ, ຜະລິດຕະພັນອູບສິລະປະຫັດຖະກຳທີ່ສູນຫາຍໄປແລ້ວນັ້ນເມື່ອຜ່ານການປະດິດຄິດຄົ້ນອັນໃໝ່, ຜະລິດກະຖາງທູບ ປັກປິ່ນເກົ້າ ສາຍສ້ອຍຄໍ ແລະກິບເໜັບກະລາວັດຊຶ່ງເປັນຜະລິດພັນສິລະປະຫັດຖະກຳເຮັດຈາກເງິນປານິດປະດິດປະດອຍງົດງາມ ກໍ່ໄດ້ຮັບຄວາມນິຍົມຊົມຊອບເປັນອັນມາກ.

ຜະລິດຕະພັນສິລະປະຫັດຖະກຳທີ່ມີສີສັນເອກະລັກຂອງຊົນເຜົ່າເຫຼົ່ານີ້ໄດ້ກາຍເປັນວັດທະນະທຳຊົນເຜົ່າປ່າຍທີ່ສືບທອດຕະຫຼອດມາແລະເປັນຕົ່ອງໂສ້ສີສັນຕິດຕໍ່ລຸລ່ວງການໄປມາຫາສູ່ກັນດ້ວຍໄມຕີຂອງບັນດາຊົນຊາດຊົນເຜົ່າ.

ແປໂດຍ: ທອງຂຽນ





# ຢູນນານປ່ຽນລົ້ນໄປດ້ວຍຫຼາຍສີສັນ ເປັນແດນສະຫວັນທັດສະນາຈອນ

## 七彩云南　旅游天堂

2006 年中国昆明国际文化旅游节正式启动。本届旅游节的主题是“七彩云南，旅游天堂”，并提出“昆明文化旅游节，大家一起来狂欢”、“狂欢旅游节，相聚彩云南”，云南省各州市精心准备了节庆活动 68 项。突出参与性、民族性和国际性，旅游节的狂欢性。

ເທດສະການທ່ອງທ່ຽວວັດທະນະທຳສາກົນຄຸນໝິງຈີນ ຊ່ວງປີ 2006 ໄດ້ເປີດສາກຢ່າງເປັນທາງການແລ້ວ.ຫົວຂໍ້ຂອງເທດສະການທ່ອງທ່ຽວຊຸດນີ້ຄື: "ເທດສະການທ່ອງທ່ຽວວັດທະນະທຳຄຸນໝິງ,ພວກເຮົາທຸກຄົນມາຮ່ວມກັນມ່ວນຊື່ນລື່ນເລີງ", "ເທດສະການທ່ອງທ່ຽວກາກນີວານ,ເຕົ້າໂຮມກັນຢູ່ຢຸນນານທີ່ມີສີສັນ",ແຕ່ລະກິ່ງແຂວງ ແລະ ຕົວເມືອງຂອງແຂວງຢູນນານໄດ້ກຽມລາຍການເຄື່ອນໄຫວສະເຫລີມສະຫລອງຢ່າງເອົາຈິງເອົາຈັງໃນລັກສະນະມີສ່ວນຮ່ວມ,ລັກສະນະຊົນຊາດຊົນເຜົ່າ,ລັກສະນະສາກົນແລະລັກສະນະກາກນີວານຂອງເທດສະການທ່ອງທ່ຽວ,ຈຳນວນ 68 ລາຍການ.

ຢູນນານໄດ້ສວຍໃຊ້ເວທີໃຫຍ່ແຫ່ງເທດສະການທ່ອງທ່ຽວວັດທະນະທຳສາກົນຄຸນໝິງປີ 2006 ນີ້,ເປີດກວ້າງການແລກປ່ຽນວັດທະນະທຳກັບປະເທດອາຊຽນ,ເພີ່ມທະວີຣັດແໜ້ນການຮ່ວມມືພັດທະນາລະຫວ່າງຈີນກັບອາຊຽນ.ໃນງານເທດສະການທ່ອງທ່ຽວຊຸດນີ້ຍັງໄດ້ຈັດໃຫ້ມີການເຄື່ອນໄຫວສະເພາະແລະໄດ້ເຊື້ອເຊີນບັນດາປະເທດອາຊີອາຄະເນມີສ່ວນຮ່ວມຄື:ການແຂ່ງຂັນກຳນົດທິດສວນສາທາລະນະສາກົນ,ງານເຊື້ອເຊີນແຂ່ງຂັນລອຍນ້ຳຢູ່ນ່ານນ້ຳເປີດເຜີຍແມ່ນ້ຳລານຊາງຂອງອາຊີ,ງານແລກປ່ຽນຊື້--ຂາຍສິນຄ້າທ່ອງທ່ຽວອາຊີອາຄະເນຊຸດທຳອິດ,ເທດສະການກາກນີວານ ອາພອນ ປະດັບສີຊົນເຜົ່າອາຊີອາຄະເນ,ງານວາງສະແດງຊົມສີລາສາກົນຊຸດທີ່ 7 ເປັນຕົ້ນ.ການເຄື່ອນໄຫວເທດສະການທ່ອງທ່ຽວອຸດົມສົມບູນຫຼາຍຫຼາກ.ມີການປະກວດທູດພາບພົດການທ່ອງທ່ຽວ,ການກິນລ້ຽງຕາມຖະໜົນຍາວຢຽດ,ເທດສະການກາກນີວານສວມເຄື່ອງນຸ່ງແຟນຊີເປັນ








ຕົ້ນ,ການເຄື່ອນໄຫວສ່ວນໃຫຍ່ແມ່ນດຳເນີນຢູ່ບັນດາກິ່ງແຂວງ ແລະຕົວເມືອງຂອງຢູນນານ. ໃນການເຄື່ອນໄຫວນັ້ນມີຫລາຍລາຍການມີສີສັນຊົນເຜົ່າຢ່າງເຂັ້ມຂຸ້ນເຊັ່ນ:ເທດສະການທ່ອງທ່ຽວວັດທະນະທຳໝາກເຊີລີ(cherry)ຂອງຈ້າວທົ່ງ,ເທດສະການແກະສະຫຼັກດິນຊາຍສີສາກົນທີ່ຫລູລຽງເມືອງຊີຈິນ,ງານປະກວດດອກໄມ້ໂບຕັ໋ນທີ່ພູສີງ ໂຕຊູສົງ,ການເຄື່ອນໄຫວສະຫຼອງບຸນ "ຝັງຄູ່ຮັກຢູ່ດອນຊາຍ "ທີ່ໝູ້ຈຽງແລະເທດສະການກາກນີວານຊີ່ກັງລີ ຊົນເຜົ່າວາທີ່ລິນຊາງເປັນຕົ້ນ.

ເທດສະການທ່ອງທ່ຽວວັດທະນະທຳສາກົນຄຸນໝິງຂອງຈີນໄດ້ຈັດຂຶ້ນຢ່າງສຳເລັດຜົນເປັນ 6 ຊຸດແລ້ວ,ເທດສະການທ່ອງທ່ຽວວັດທະນະທຳປີ 2006 ຖ້າສົມທຽບກັບເທດສະການທ່ອງທ່ຽວທີ່ຜ່ານມາແລ້ວ ການປ່ຽນແປງໃຫຍ່ທີ່ສຸດກໍ່ຄືເອົາເວລາຂອງການຈັດງານສະຫລອງຂະຫຍາຍໄປເປັນໝົດທັງປີ,ເຮັດໃຫ້ຢູນນານກາຍເປັນບັນຍາກາດມ່ວນຊື່ນລື່ນເລີງຊູ່ມື້ແລະມີງານສະຫລອງຊູ່ເດືອນຢ່າງແທ້ຈິງ,ເຮັດໃຫ້ແຂກທ່ອງທ່ຽວທີ່ມາຢູນນານ ແຕ່ລະໄລຍະເວລາກໍ່ສາມາດສຳຜັດຄວາມມ່ວນຊື່ນຂອງເທດສະການທ່ອງທ່ຽວໂດຍຕົນເອງ. ການເອົາເທດສະການທ່ອງທ່ຽວຂະຫຍາຍກວ້າງໄປຕະຫຼອດປີນັ້ນ,ມັນຈະເພີ່ມຄວາມດູດດຶງແລະຊີວະພະລັງໃຫ້ແກ່ເທດສະການທ່ອງທ່ຽວກວ່າເກົ່າອີກ.






2006
昆明节庆活动开幕式暨花车巡游展演
ional Cultural and Tourism Festival 2006 & Festooned Vehicle Parade


红塔集团



## 感受云南风情　聚焦美丽盛典

2006年中国昆明国际文化旅游节云南省旅游形象大使评选活动经过紧张、激烈的比拼落下帷幕，来自大理的朱泽瑾脱颖而出，戴上闪亮的桂冠，成为2006云南旅游形象大使。



# ຕາກ້ອງສ່ອງເພິທິມະໂຫລານສະຫງ່າ ສຳຜັດຣິດຄອງເພື້ນແຜ່ນຢູນນານ






ການເຄື່ອນໄຫວປະກວດທູດພາບພົດທ່ອງທ່ຽວແຂວງຢູນນານໃນເທສະການທ່ອງທ່ຽວວັດທະນະທຳສາກົນຄຸນໝິງແຫ່ງປະເທດຈີນ ປະຈຳປີ 2006, ໄດ້ປິດລົງດ້ວຍການແຂ່ງຂັນຢ່າງດຸເດືອດເຄັ່ງຄຽດ, ນາງຈູເຈີຈິນທີ່ມາຈາກຕາລີໄດ້ປະກົດຕົວພົ້ນເດັ່ນອອກມາສວມແຂັມມົງກຸດທີ່ແວວວາວ, ເປັນທູດພາບພົດທ່ອງທ່ຽວຢູນນານຮອບປີ 2006.

ການເຄື່ອນໄຫວເທື່ອນີ້ແມ່ນຜ່ານການປະກວດເພດຍິງຜູ້ດີເດັ່ນຊຶ່ງມີພາບພົດຈົບງາມ, ຈັນຍາທຳສູງສົ່ງ, ອຸດົມໄປດ້ວຍວາຈາຄຳເວົ້າແລະສົມບູນໄປດ້ວຍທັງກາຍແລະໃຈເພື່ອເປັນຜູ້ຕາງໜ້າໂຄສົກພາບພົດທ່ອງທ່ຽວຂອງຢູນນານຕາມຫຼັກການປະກວດທີ່ເປີດເຜີຍທ່ຽງທຳ. ການແຂ່ງຂັນໝາຍຈະຜ່ານຈາກສະຕິປັນຍາ, ຄວາມງາມ, ຄວາມຮັກແພງແລະພະລັງຮັດແໜ້ນຂອງເຂົາເຈົ້າ ເພື່ອສະແດງຮີດຄອງພື້ນແຜ່ນປະຊາຊົນທີ່ມີເອກະລັກສະເພາະຂອງ 16 ກິ່ງແຂວງໃນແຂວງຢູນນານແລະຄວາມມີສະເໜຫາເອກະລັກຂອງ 26 ເຜົ່າແຂວງຢູນນານຕະຫຼອດຮອດສະແດງວາດສີສັນການທ່ອງທ່ຽວຢູນນານ, ສ້າງຕັ້ງພາບພົດທ່ອງທ່ຽວຢູນນານແລະເຊີດຊູຍີ່ຫໍ້ການທ່ອງທ່ຽວຢູນນານ.

ໃນການເຄື່ອນໄຫວປະກວດນັ້ນ, ນາງຈູເຈີຈິນສະແດງບົດບາດພົ້ນເດັ່ນ, ໄດ້ຮັບຄະແນນສູງນອນຢູ່ອັນດັບແຖວໜ້າໂດຍຕະຫຼອດ, ພາຍໃນ 30 ວິນາທີ ນາງໄດ້ໝູນໃຊ້ຄຳສຸພາສິດພົນລະນາພູມພາບຢູນນານຢ່າງແທດເໝາະ, ໃນ "ການແຂ່ງຂັນກ່າວສຸນທອນພົດ" ກໍ່ແຮ່ງມີສີປາກສະແດງເຖິງຈິດໃຈປາຖະໜາຂອງບັນດານັກປະກວດເຂົ້າແຂ່ງຂັນ, ໄດ້ຮັບສຽງຕົບມືຢ່າງຟົດຟື້ນຈາກຜູ້ຊົມໃນສະຖານທີ່. ໃນທີ່ສຸດ, ນາງຊົງຊະນະເລີດທູດພາບພົດທ່ອງທ່ຽວຢູນນານດ້ວຍຄະແນນສູງ, ໄດ້ຮັບກຽດເປັນທູດພາບພົດທ່ອງທ່ຽວຂອງຢູນນານປະຈຳປີ 2006.


48
50
16

(ແປໂດຍ: ທອງຂຽນ) (ກວດແກ້ໂດຍ:ສີສຸວັນ)





## 第四届世界云南同乡联谊大会在大理举行

第四届世界云南同乡联谊大会在云南大理白族自治州举行，有来自 17 个国家和地区、25 个侨团的 250 位海外同乡和嘉宾参加。大会的主题是“爱云南、促发展、兴中华”。此次同乡会旨在加强与海外华侨、华人的联系交往，以便更好地动员云南籍海外同乡以及海外华商关注并投身云南建设，实现家乡与海外华商的共同发展目标。

# ກອງປະຊຸມສະໝານໄມຕີໄທບ້ານດຽວກັນຂອງຊາວຢູນນານໃນທົ່ວໂລກຊຸດທີ 4 ໄດ້ຈັດຂຶ້ນທີ່ຕາລີ

ກອງປະຊຸມໃຫຍ່ສະໝານໄມຕີໄທບ້ານດຽວກັນຂອງຊາວຢູນນານໃນທົ່ວໂລກຊຸດທີ 4 ໄດ້ຈັດຂຶ້ນທີ່ກິ່ງແຂວງປົກຄອງຕົນເອງ ເຜົ່າປ່າຍຕາລີແຂວງຢູນນານ,ໄທບ້ານດຽວກັນຊາວຢູນນານທີ່ມາຈາກ 17 ປະເທດແລະເຂດແຄ້ວນ 25 ຄະນະຂອງຊາວຈີນຕ່າງດ້າວ 250 ທ່ານແລະແຂກມີກຽດທີ່ຖືກເຊື້ອເຊີນໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວ.

ຫົວຂໍ້ຂອງກອງປະຊຸມໃຫຍ່ສະໝານໄມຕີໄທບ້ານດຽວກັນຂອງຊາວຢູນນານໃນທົ່ວໂລກຊຸດທີ່ 4 ຄື: "ຮັກຫອມຢູນນານ, ຊຸກຍູ້ການພັດທະນາ,ສ້າງສັນປະເທດຈີນໃຫ້ຈະເລີນຮຸ່ງເຮືອງ", ໃນກອງປະຊຸມສະໝານໄມຕີ 4 ວັນນັ້ນ,ໄດ້ສະແດງໃຫ້ເຫັນແຂວງຢູນນານແລະກິ່ງແຂວງຕາລີຍາດໄດ້ໝາກຜົນທາງດ້ານການພັດທະນາເສດຖະກິດ--ສັງຄົມ,ແຜນຍຸດທະສາດການພັດທະນາສະຕະວັດໃໝ່ແລະໄລຍະໃໝ່, ໂຄສະນາທ່າແຮງແລະບົດບາດຂອງແຂວງຢູນນານແລະກິ່ງແຂວງຕາລີໃນຂະບວນວິວັດການສ້າງເຂດການຄ້າເສລີຈີນ--ອາຊຽນແລະການຮ່ວມມືອະນຸພາກພື້ນແມ່ນ້ຳຂອງ.ນັບແຕ່ມີການປະຕິຮູບໄຂປະຕູສູ່ພາຍນອກເປັນຕົ້ນມາ.ກອງປະຊຸມຍັງໄດ້ຈັດສັມການອອກຄຳເຫັນໃນກອງປະຊຸມເວທີປາຖະກະຖາ "ແຜນການປະຕິບັດງານຈັບມືຖືແຂນກັນລະຫວ່າງໄທບ້ານດຽວກັນຊາວຢູນນານ" ເປັນຕົ້ນ, ສະມາຄົມສົ່ງເສີມການຮ່ວມມືເສດຖະກິດກັບຕ່າງປະເທດຂອງກິ່ງແຂວງຕາລີກໍ່ໄດ້ສ້າງຕັ້ງຂຶ້ນໃນເວລາດຽວກັນ.

ກອງປະຊຸມໄດ້ແນະນຳສະພາບແວດລ້ອມການລົງທຶນແລະໂຄງການຊັກຊວນນັກທຸລະກິດມາລົງທຶນຕໍ່ໄທບ້ານດຽວກັນຊາວຢູນນານຢູ່ຕ່າງປະເທດ.ຜູ້ເຂົ້າຮ່ວມກອງປະຊຸມຍັງໄດ້ເຂົ້າຮ່ວມການເຄື່ອນໄຫວສະເຫລີມສະຫລອງເທດສະການຊົນເຜົ່າຂອງທ້ອງຖິ່ນດັ່ງກ່າວແລະໄດ້ສຳຫລວດວິສາຫະກິດທີ່ລືຊື່ຂອງທ້ອງຖິ່ນ.ແຂກຜູ້ມີກຽດທີ່ມີເຈດຈຳນົງຍັງໄດ້ມີການສຳຫລວດເຈລະຈາກັບທີ່ສຳລັບ ໂຄງການຈະດຳເນີນ ການລົງທຶນໃນຕາລີ.

ຊາວຈີນຕ່າງດ້າວຢູ່ຕ່າງປະເທດທີ່ສັງກັດແຂວງຢູນນານປະມານ 2 ລ້ານ 2 ແສນກວ່າຄົນຢັ້ງຢາຍຢູ່ 70 ກວ່າປະເທດແລະເຂດແຄ້ວນຈຸດໜັກຢູ່ປະເທດອາຊີອາຄະເນເຊັ່ນ: ມຽນມາ,ໄທແລະສິງກະໂປເປັນຕົ້ນ,ກໍ່ມີຈຳນວນສ່ວນໜ້ອຍຢັ້ງຢາຍຢູ່ເອີລົບ,ອາເມລິກາ,ຍີ່ປຸ່ນແລະອົດສະຕາລີ.ໃນບໍ່ເທົ່າໃດປີມານີ້ ການພັດທະນາຢ່າງວ່ອງໄວໃນຂົງເຂດພາກຕາເວັນຕົກຂອງຈີນ,ກຳລັງບົ່ມຊ້ອນອັນມະຫາສານທາງຕະຫລາດແລະຊັບພະຍາກອນທຳມະຊາດທີ່ອຸດົມສົມບູນໄດ້ເປັນກຳລັງດູດດຶງຕໍ່ໄທບ້ານດຽວກັນຂອງ ຊາວຢູນນານທີ່ຢູ່ຕ່າງປະເທດ.

ແປໂດຍ: ທອງຂຽນ
ກວດແກ້ໂດຍ: ສີສຸວັນ ຮວງປິນ





## 热带雨林生态高速公路在云南建成

云南思茅至西双版纳傣族自治州小勐养的高速公路正式通车。作为中国第一条经过热带雨林的生态高速路，它也是昆明至曼谷国际大通道的重要路段。它的开通对促进中国－东盟自由贸易区的建设及云南省对外开放将发挥积极作用。



# ທາງສາຍດ່
# ແຖບຮ້ອນໄ

ທ່າມກາງລົມອອຍ ໆ ທີ່ພັດໂຊຍມາຟາຍໃບໜ້າແລະຫລຽວເຫັນປ່າໄມ້ຂຽວງາມເຕັມຕາ, ຂະບວນລົດຍົນແຕ່ລະຄັນໄດ້ທະຍອຍກັນແລ່ນອອກຈາກບ້ານຕ່າວກອນເມືອງຊື່ມາວແຂວງຢູນນານ, ແລ່ນຜ່ານດົງຝົນເຂດຮ້ອນທີ່ດົກໜາມຸ່ງໜ້າໄປສູ່ສິບສອງພັນນາໂດຍກົງ. ຄົນທັງຫລາຍໄດ້ເວົ້າວ່າ: "ການແລ່ນລົດເທິງຖະໜົນແບບນີ້, ມີຄວາມຮູ້ສຶກປອດໂປ່ງເຢັນສະບາຍເພາະໄດ້ເອົາຊີວິດຈິດໃຈຕິດພັນກັບທຳມະຊາດ".

ເສັ້ນທາງທີ່ຖືກຄົນທັງຫລາຍສັນລະເສີນນີ້, ແມ່ນທາງສາຍດ່ວນແຕ່ຊື່ມາວຮອດເມືອງຍັງນ້ອຍຂອງກິ່ງແຂວງປົກຄອງຕົນເອງເຜົ່າລື້ສິບສອງພັນນາຊຶ່ງໄດ້ເປີດໃຫ້ລົດແລ່ນຢ່າງເປັນທາງການແລ້ວ. ມັນເປັນທາງສາຍດ່ວນນິເວດວິທະຍາເສັ້ນທຳອິດທີ່ແລ່ນຜ່ານດົງຝົນແຖບຮ້ອນຂອງຈີນແລະກໍເປັນເສັ້ນທາງຕອນສຳຄັນຂອງທາງຜ່ານສາກົນຈາກຄຸນໝິງເຖິງບາງກອກ. ການເປີດໃຫ້ລົດແລ່ນທາງສາຍດ່ວນເສັ້ນນີ້ ຈະເປັນການສົ່ງເສີມບົດບາດທາງບວກໃຫ້ແກ່ການຊຸກຍູ້ສ້າງເຂດການຄ້າເສລີຈີນ--






ອາຊຽນແລະເປີດກວ້າງຕໍ່ພາຍນອກຂອງແຂວງຢູນນານ.

ທາງສາຍດ່ວນຊືມາວ--ເມືອງຍັງນ້ອຍຂອງຢູນນານໄດ້ເລີ່ມລົງມືກໍ່ສ້າງແຕ່ວັນທີ 20 ເດືອນ 6 ປີ 2003,ຜ່ານໄລຍະການກໍ່ສ້າງ 34 ເດືອນຈຶ່ງສ້າງສຳເລັດເປີດໃຫ້ລົດທຽວ.ທາງສາຍດ່ວນດັ່ງກ່າວມີຄວາມຍາວທັງໝົດ97.7 ກິໂລແມັດ,ຖ້າທຽບກັບທາງເກົ່າແລ້ວໄລຍະທາງສັ້ນເຂົ້າ 24.6 ກິໂລແມັດ,ເວລາລົດແລ່ນຈາກ 4 ຊົ່ວໂມງໃນເມື່ອກ່ອນຫລຸດມາເປັນ 1.5 ຊົ່ວໂມງ.

ທັດສະນີຍະພາບຕາມແຄມທາງຂອງທາງສາຍດ່ວນຊືມາວຫາເມືອງຍັງນ້ອຍສ່ວນໃຫຍ່ໄດ້ປາກົດສີສັນເອກະລັກທາງວັດທະນະທຳຊົນເຜົ່າສ່ວນໜ້ອຍຂອງທ້ອງຖິ່ນເຊັ່ນ:ມີບາງປາກອຸມົງເບິ່ງທາງຮູບນອກມີທຳນອງວາດຊົງສິ່ງປຸກສ້າງເຜົ່າລື້;ຕົ້ນໄມ້ 49 ຊະນິດຂອງທ້ອງຖິ່ນທີ່ເລືອກເອົາມາປູກຕາມສອງຟາກທາງນັ້ນແມ່ນອີງຕາມຈຸດພິເສດຂອງພູມອາກາດແລະພູມສັນຖານຊີວະພາບບໍລິເວນ;ບ່ອນທີ່ມັກມີຊ້າງປ່າເຂົ້າອອກນັ້ນກໍ່ໄດ້ຍົກລະດັບສູງຂອງຂົວຂຶ້ນແຕ່ 8-15 ແມັດແລະສ້າງທາງຜ່ານສຳລັບໃຊ້ສະເພາະອີກ.

ຄຽງຄູ່ກັບເສັ້ນທາງຕອນຊືມາວ-ເມືອງຍັງນ້ອຍເຊື່ອມຕໍ່ເສັ້ນທາງຕອນບໍ່ຫານສິບສອງພັນນາຈະສ້າງສຳເລັດແລະເປີດໃຫ້ລົດແລ່ນໄດ້ໃນປີ 2007,ທາງຫຼວງຂອດກັນສາກົນຄຸນໝິງຫາບາງກອກທີ່ມີຄວາມຍາວທັງໝົດ 688 ກິໂລແມັດນັ້ນ,ສ່ວນໄລຍະເສັ້ນທາງດັ່ງກ່າວຕອນພາຍໃນປະເທດຈີນກໍ່ຈະຂອດຫາກັນໂດຍຕະຫຼອດ.ເມື່ອເຖິງເວລານັ້ນຄົນເດີນທາງແຕ່ຄຸນໝິງຫາບາງກອກປະເທດໄທໃຊ້ເວລາປະມານ 20 ຊົ່ວໂມງກໍໄປຮອດ.

# ວນນິເວດວິທະຍາດົງຝົນ ດ້ສ້າງຂຶ້ນຢູ່ຢູນນານ



# ແຂວງຢູນນານຍ້ອງຍໍບຸກຄະລາກອນສິລະປະວັນນະຄະດີ



## 云南省表彰文学艺术人才

云南省文艺界人才表彰座谈会和颁奖晚会在昆明举行。这是新中国成立以来云南省文艺界规模最大的一次表彰活动。表彰会对为云南文艺事业作出卓越贡献的老、中、青著名文艺家和新人，分别授予了奖项。同时对为繁荣云南文艺事业做出特别贡献的一批省外和国外文艺家，授予了“繁荣云南文学艺术特别贡献奖”荣誉称号。







ກອງປະຊຸມສຳມະນາຍ້ອງຍໍສັນລະເສີນບຸກຄະລາກອນວົງການສິລະປະວັນນະຄະດີແຂວງຢູນນານແລະງານລາຕີແຈກຣາງວັນໄດ້ຈັດຂຶ້ນທີ່ຄຸນໝິງ. ນີ້ເປັນການເຄື່ອນໄຫວຍ້ອງຍໍສັນລະເສີນຄັ້ງໃຫຍ່ທີ່ສຸດຂອງວົງການສິລະປະວັນນະຄະດີແຂວງຢູນນານນັບແຕ່ສ້າງຕັ້ງປະເທດຈີນໃໝ່ເປັນຕົ້ນມາ.

ກອງປະຊຸມຍ້ອງຍໍສັນລະເສີນໄດ້ແຈກຣາງວັນເປັນລຳດັບໃຫ້ແກ່ນັກສິລະປະວັນນະຄະດີຜູ້ມີຊື່ສຽງອາວຸໂສ, ໄວກາງຄົນແລະຊາວໜຸ່ມ ກໍ່ຄືຄົນຮຸ່ນໃໝ່ທີ່ໄດ້ອຸທິດອັນປະເສີດຕໍ່ພາລະກິດສິລະປະວັນນະຄະດີຢູນນານ. ພ້ອມກັນນັ້ນຍັງໄດ້ມອບນາມະກຽດ "ຣາງວັນອຸທິດພິເສດທີ່ພັດທະນາສິລະປະວັນນະຄະດີຢູນນານ" ໃຫ້ແກ່ນັກສິລະປະວັນນະຄະດີຕ່າງແຂວງແລະຕ່າງປະເທດຈຳນວນໜຶ່ງຊຶ່ງໄດ້ມີການປະກອບສ່ວນອັນພິເສດເພື່ອພາລະກິດພັດທະນາສິລະປະວັນນະຄະດີຢູນນານ.

ຊຸມປີມໍ່ ໆ ມານີ້, ແຂວງຢູນນານໄດ້ເສີມຂະຫຍາຍທ່າແຮງວັດທະນະທຳຊົນເຜົ່າ, ວັດທະນະທຳປະຫວັດສາດແລະຊັບພະຍາກອນທຳມະຊາດຢ່າງເຕັມສ່ວນ, "ພັດທະນາຊັບສິນວັດທະນະທຳພັດທະນາວັດທະນະທຳຊົນເຜົ່າແລະສ້າງສັນແຂວງໃຫຍ່ວັດທະນະທຳ", ຜ່ານການຕັ້ງໜ້າພະຍາຍາມມາບໍ່ເທົ່າໃດປີ, ວຽກງານຕ່າງ ໆກໍ່ມີການສືບໜ້າຢ່າງບຸກທະລຸ. ໄດ້ເສີມຂະຫຍາຍທ່າແຮງຢູນນານທີ່ຖືເປັນ "ບໍ່ລຳແຫ່ງວັດທະນະທຳຊົນເຜົ່າ, ສາຄອນແຫ່ງດົນຕີນາຕະສິນ, ແດນສະຫວັນແຫ່ງການຖ່າຍຮູບເງົາແລະໂທລະພາບ, ບໍ່ຮັ່ງມີແຮ່ແຫ່ງສິລະປະວັນນະຄະດີແລະທັດສະນີຍະພາບອັນສວຍງາມ", ວິຈິດສິນຖ່າຍຮູບ", ພະຍາຍາມລະດົມນ້ຳໃຈຈູບຈ້າວທ້າວທັນເປັນເຈົ້າການແລະສະຕິປະດິດຄິດແຕ່ງຂອງນັກສິລະປະວັນນະຄະດີຢ່າງກວ້າງຂວາງ, ສັງຮອມກຳລັງທຸກຝ່າຍ, ໄດ້ຮັກສາທ່ວງທ່າອັນແຂງແຮງໃນການພັດທະນາສິລະປະວັນນະຄະດີຈະເລີນວັດທະນາຢ່າງວ່ອງໄວຮອບດ້ານລຽນຕິດຫຼາຍປີ.

ພ້ອມກັນນັ້ນ, ຢູນນານໄດ້ເດີນຕາມເສັ້ນທາງສ້າງສະພາບແວດລ້ອມອັນດີເພື່ອຊຸກຍູ້ການກໍ່ສ້າງເຈົ້າກຳຕະຫຼາດວັດທະນະທຳ, ຂະຫຍາຍເຈົ້າກຳຕະຫຼາດໃຫ້ເຕີບໃຫຍ່ເພື່ອຊຸກຍູ້ການພັດທະນາຊັບສິນວັດທະນະທຳ, ເອົາການພັດທະນາຊັບສິນວັດທະນະທຳຊຸກຍູ້ການປະຕິຮູບລະບົບວັດທະນະທຳ. ພ້ອມທັງສະເໜີຈຶ່ງເຂດທີ່ດນຳ 7 ປະການແລະເປົ້າໝາຍພັດທະນາຕົວຈິງອອກຢ່າງຈະແຈ້ງສຳລັບພັດທະນາຊັບສິນວັດທະນະທຳຢູນນານ, ອອກແຮງຊຸກຍູ້ການສ້າງສາພື້ນຖານພັດທະນາຊັບສິນວັດທະນະທຳ, ປະຕິບັດຍຸດທະສາດເອົາໂຄງການຊັກຈູງການພັດທະນາ, ຕັ້ງໜ້າອູ້ມຊູການພັດທະນາຂອງວິສາຫະກິດວັດທະນະທຳພາກເອກະຊົນ, ເອົາໃຈໃສ່ການປະສານສົມທົບກັນລະຫວ່າງວັດທະນະທຳກັບການທ່ອງທ່ຽວ, ຕັ້ງໜ້າພັດທະນາວັດທະນະທຳແລະການທ່ອງທ່ຽວ, ອັນໄດ້ຢ່ວງບາດກ້າວອັນໜັກແໜ້ນເພື່ອການພັດທະນາຊັບສິນວັດທະນະທຳຂອງແຂວງຢູນນານ.

ແປໂດຍ: ທອງຂຽນ

# ການຮ່ວມສະແດງວັດທະນະທຳຈີນ

## --ອາຊຽນໄດ້ຈັດຂຶ້ນທີ່ອັງກໍວັດໃນກຳປູເຈຍ

### 中国和东盟文化汇演在柬埔寨吴哥举行

2006 年是中国—东盟建立对话关系 15 周年和中国—东盟友好合作年。作为庆祝中国 – 东盟建立对话关系 15 周年系列活动的一部分，东盟和中国文艺工作者在柬埔寨著名旅游胜地吴哥窟举行盛大联合文艺演出。

ປີ 2006 ເປັນປີສ້າງການພົວພັນຄູ່ເຈລະຈາລະຫວ່າງຈີນ--ອາຊຽນຄົບຮອບ 15 ປີ ແລະກໍ່ເປັນປີຮ່ວມມືມິດຕະພາບຈີນ--ອາຊຽນ,ເພື່ອເປັນພາກສ່ວນໜຶ່ງຂອງການເຄື່ອນໄຫວຢ່າງເປັນລະບົບຂອງການສະເຫລີມສະຫລອງການສ້າງສາຍພົວພັນຄູ່ເຈລະຈາລະຫວ່າງຈີນ--ອາຊຽນຄົບຮອບ 15 ປີ, ນັກສິລະປະວັນນະຄະດີອາຊຽນແລະຈີນໄດ້ຮ່ວມກັນສະແດງລາຍການສິລະປະວັນນະຄະດີຢ່າງຄຶກຄື້ນໃຫຍ່ ໂຕທີ່ອັງກໍວັດ,ຊຶ່ງເປັນບູຮານສະຖານແຫລ່ງທ່ອງທ່ຽວທີ່ລືຊື່ຂອງກຳປູເຈຍ.ແລະເປັນການເລີ່ມເປີດສາກຂອງການເຄື່ອນໄຫວຢ່າງເປັນລະບົບໃນງານສະເຫລີມສະຫລອງດັ່ງກ່າວ.ບັນດາໝຸ່ມນັກສິລະປິນ 150 ກວ່າທ່ານທີ່ມາຈາກຈີນແລະອາຊຽນ 10 ປະເທດນຳໃຊ້ຮູບການສິລະປະທີ່ແຕກຕ່າງກັນມາສະແດງວັດທະນະທຳທີ່ເປັນເອກະລັກແຫ່ງຊົນຊາດຊົນເຜົ່າທີ່ມີສະເໜຂອງຕົນ, ການສະແດງອັນພິດສະດານທີ່ມີສີສັນສະເພາະຂອງພວກເຂົາເຈົ້ານັ້ນໄດ້ຮັບສຽງຕົບມືອັນຄຶກຄື້ນຈາກຜູ້ຊົມຢ່າງອຶກກະທຶກນຶກນອງ.

ທ່ານອູຕ່ຳເວີຍ ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດຈີນ ໄດ້ກ່າວຄຳປາໄສໃນພິທີເປີດສາກສະແດງສິລະປະວັນນະຄະດີວ່າ: ການສ້າງການພົວພັນຄູ່ເຈລະຈາຈີນ--ອາຊຽນໄດ້ເປັນຫຼັກໝາຍອັນສຳຄັນອັນໜຶ່ງໃນປະຫວັດການພັດທະນາການພົວພັນລະຫວ່າງຈີນກັບປະເທດອາຊີອາຄະເນ.ພາກປະຕິບັດໃນ 15 ປີມານີ້ໄດ້ສະແດງຢ່າງຈະແຈ້ງເຖິງການກຳນົດນະໂຍບາຍທີ່ສຳ ຄັນດັ່ງກ່າວ, ມັນສອດຄ່ອງກັບຜົນປະໂຫຍດຮ່ວມກັນຂອງຈີນກັບບັນດາປະເທດອາຊຽນ,ສອດຄ່ອງກັບກະແສນິຍົມແຫ່ງການພັດທະນາຂອງຍຸກສະໄໝແລະມັນມີຊີວະພະລັງອັນແຮງກ້າ.

ທ່ານ ຮໍນຳຮົງ(Hor Namhong) ຮອງນາຍົກລັດຖະມົນຕີລັດຖະມົນຕີວ່າການກະຊວງຕ່າງປະເທດແລະການຮ່ວມມືສາກົນຂອງກຳປູເຈຍໄດ້ກ່າວສຸມທອນພົດວ່າ: 15 ປີຜ່ານມາ,ການຮ່ວມມືໃນຂົງເຂດການເມືອງ,ຄວາມປອດໄພ,ເສດຖະກິດແລະສັງຄົມເປັນຕົ້ນລະຫວ່າງອາຊຽນກັບຈີນ ໄດ້ພັດທະນາໄປຢ່າງວ່ອງໄວ.ພວກເຮົາເຊື່ອໝັ້ນວ່າ,ການພົວພັນຮ່ວມມືມິດຕະພາບຕ່າງຝ່າຍຕ່າງມີຜົນປະໂຫຍດດັ່ງກ່າວໃນສະຕະວັດນີ້ ຍິ່ງຈະໄດ້ຮັບການພັດທະນາຢ່າງເລິກເຊິ່ງແລະຮອບດ້ານ,ເພື່ອເປັນການປະກອບສ່ວນຍິ່ງຫລາຍກວ່າເກົ່າໃຫ້ແກ່ສັນຕິພາບ,ສະຖຽນລະພາບແລະ ການພັດທະນາຢ່າງຍາວນານລະຫວ່າງຈີນ--ອາຊຽນ.

ປີ 2006,ເປັນປີທີ່ມີຄວາມໝາຍໜັກແໜ້ນຂອງປະຫວັດການພົວພັນຈີນ--ອາຊຽນ.ກອງປະຊຸມຜູ້ນຳຈີນ--ອາຊຽນຄັ້ງທີ່ 9 ທີ່ຈັດຂຶ້ນເມື່ອເດືອນທັນວາປີ 2005 ໄດ້ຕົກລົງ,ໂດຍເອົາຂະນະທົວລ້ຽວທົວຕໍ່ຂອງການສ້າງການພົວພັນຄູ່ເຈລະຈາລະຫວ່າງຈີນ--ອາຊຽນຄົບຮອບ 15 ປີແລະ "ປີຮ່ວມມືມິດຕະພາບຈີນ--ອາຊຽນ",ດຳເນີນການເຄື່ອນໄຫວລະນຶກຢ່າງກວ້າງຂວາງແລະຊຸກຍູ້ບັນດາວົງການໃນສັງຄົມມີສ່ວນ ຮ່ວມຢ່າງຕັ້ງໜ້າ,ເພື່ອເປັນການສ້າງພື້ນຖານອັນແໜ້ນແກ່ນທາງສັງຄົມໃຫ້ແກ່ການພັດທະນາສາຍພົວພັນຈີນກັບອາຊຽນຢ່າງຍາວນານ.

# ກອງປະຊຸມຄະນະກຳມະການບໍລິຫານງານ ສະມາຄົມວັດແທກແລະວາດແຕ້ມຂອງອາຊີອາຄະເນສະໄໝທີ 25 ໄດ້ຈັດຂຶ້ນຢູ່ທີ່ຄຸນໝິງ



## 第 25 届东南亚测绘协会理事会在昆明举行

第 25 届东南亚测绘协会理 事会、东南亚测绘协会与云南省测绘界合作研讨会在昆明举行。东南亚测绘协会是由东盟 10 国共同组建的一个管理和协调东南亚国家土地和测绘行业发展的国际组织。自 2004 年东南亚测绘协会与云南省测绘界签订合作协议并实施合作项目以来，云南省测绘界与东南亚测绘界的友好合作关系进一步得到发展。

ກອງປະຊຸມຄະນະກຳມະການບໍລິຫານງານສະມາຄົມວັດແທກແລະວາດແຕ້ມອາຊີອາຄະເນສະໄໝທີ 25 ພ້ອມດ້ວຍກອງປະຊຸມສຳມະນາຮ່ວມມືລະຫວ່າງສະມາຄົມວັດແທກແລະວາດແຕ້ມອາຊີອາຄະເນກັບວົງການວັດແທກແລະວາດແຕ້ມແຂວງຢູນນານໄດ້ຈັດຂຶ້ນຢູ່ທີ່ຄຸນໝິງ.ທ່ານ ມາຕູຊິນ (Matusin) ຫົວໜ້າກົມວັດແທກແລະວາດແຕ້ມແຫ່ງຊາດບຣູໄນ ທັງເປັນປະທານສະມາຄົມວັດແທກແລະວາດແຕ້ມອາຊີອາຄະເນ ຕະຫຼອດຮອດຜູ້ຊ່ຽວຊານທີ່ກ່ຽວຂ້ອງກັບການວັດແທກແລະວາດ ແຕ້ມທີ່ມາຈາກບຣູໄນ, ສິງກະ ໂປ, ມາເລເຊຍ, ໄທ,ກຳປູເຈຍ, ອິນໂດເນເຊຍແລະເຂດບໍລິຫານພິເສດຮົງກົງສປຈີນໄດ້ເຂົ້າຮ່ວມກອງປະຊຸມດັ່ງກ່າວ.

ສະມາຄົມວັດແທກແລະວາດແຕ້ມອາຊີອາຄະເນເປັນອົງການຈັດຕັ້ງສາກົນເພື່ອພັດທະນາວິຊາການທາງທີ່ດິນແລະການວັດແທກແລະວາດແຕ້ມຂອງອາຊຽນ 10 ປະເທດຮ່ວມກັນສ້າງຕັ້ງຂຶ້ນ ເພື່ອຄຸ້ມຄອງແລະປະສານງານກິດຈະການທີ່ດິນ ແລະການວັດແທກແລະວາດແຕ້ມຂອງປະເທດອາຊີອາຄະເນ. ນັບແຕ່ປີ 2004 ສະມາຄົມວັດແທກແລະວາດແຕ້ມອາຊີອາຄະເນໄດ້ເຊັນສັນຍາຮ່ວມມືກັບວົງການວັດແທກແລະວາດແຕ້ມແຂວງຢູນນານແລະຈັດຕັ້ງປະຕິບັດໂຄງການຮ່ວມມືເປັນຕົ້ນມາ,ການພົວພັນ ຮ່ວມມືມິດຕະພາບລະຫວ່າງວົງການວັດແທກແລະວາດແຕ້ມແຂວງຢູນນານກັບວົງການວັດແທກແລະວາດແຕ້ມອາຊີອາຄະເນໄດ້ມີການຂະຫຍາຍຕົວຕື່ມອີກ.

ແປໂດຍ: ທອງຂຽນ

# ລັດຖະມົນຕີວ່າການຕ່າງປະເທດອາຊຽນຮ່ວມ ປຶກສາຫາລືເພື່ອຮັບມືກັບສິ່ງທ້າທາຍໃນອະນາຄົດ

## 东盟外长共商应对未来挑战

东盟外长非正式会议在印度尼西亚闭幕。与会外长在为期两天的会议中就东盟面临的挑战和未来发展以及东盟宪章的制定等问题进行了广泛和建设性讨论。

ກອງປະຊຸມບໍ່ເປັນທາງການຂອງລັດຖະມົນຕີຕ່າງປະເທດອາຊຽນໄດ້ອັດລົງທີ່ເກາະບາລີຂອງອິນໂດເນເຊຍ.ລັດຖະມົນຕີທີ່ເຂົ້າຮ່ວມກອງປະຊຸມເປັນເວລາ 2 ວັນດັ່ງກ່າວ,ໄດ້ດຳເນີນການອະພິປາຍແລກປ່ຽນຢ່າງກວ້າງຂວາງແລະມີລັກສະນະສ້າງສັນກ່ຽວກັບບັນຫາທີ່ອາຊຽນພວມປະເຊີນໜ້າກັບສິ່ງທ້າທາຍ,ການພັດທະນາໃນອະນາຄົດແລະການວາງຂໍ້ກຳນົດກົດບັດອາຊຽນເປັນຕົ້ນ.

ພາຍຫລັງກອງປະຊຸມສິ້ນສຸດລົງ ທ່ານ ດາຕຸກ ເຊີຣີຊີນ ຮາໝິດ ອານບາ (Datuk Seri Syed Hamid Albar) ລັດຖະມົນຕີວ່າການຕ່າງປະເທດມາເລເຊຍ, ປະທານກອງປະຊຸມບໍ່ເປັນທາງການຂອງລັດຖະມົນຕີຕ່າງປະເທດອາຊຽນໄດ້ກ່າວຄຳເຫັນໃນງານສຳພາດນັກສື່ຂ່າວວ່າ: ກອງປະຊຸມເທື່ອນີ້ເປັນ "ການອະພິປາຍທີ່ປະສົບຜົນສຳເລັດທີ່ສຸດ" ຄັ້ງໜຶ່ງ.

ທ່ານ ຊູຊີໂລ ບຳບັງ ຍູໂຮໂຍໂນ Susilo Bambang Yudhoyono ປະທານາທິບໍດີອິນໂດເນເຊຍໃນເວລາພົບປະລັດຖະມົນຕີຕ່າງປະເທດແລະສະມາຊິກອະນຸກຳມະການຜູ້ອາວຸໂສຂອງອາຊຽນທີ່ເຂົ້າຮ່ວມກອງປະຊຸມໄດ້ສະແດງວ່າ,ແຕ່ລະປະເທດມີຄວາມຕ້ອງການບັນລຸຄວາມເຂົ້າໃຈເປັນອັນໜຶ່ງອັນດຽວກັບການພັດທະນາໃນອະນາຄົດແລະຮັບມືກັບສິ່ງທ້າທາຍຂອງອາຊຽນ,ເພື່ອເປັນການເພີ່ມທະວີການຮ່ວມມືລະຫວ່າງອາຊຽນກັບປະເທດຄູ່ເຈລະຈາ,ຊຸກຍູ້ສັນຕິພາບແລະການພັດທະນາຂອງພາກພື້ນນີ້ ພ້ອມທັງຍົກສູງຄຸນະພາບຊີວິດການເປັນຢູ່ຂອງປະຊາຊົນ.

ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນໃນຄັ້ງນີ້ ແມ່ນຈັດຂຶ້ນຫລັງຈາກກອງປະຊຸມຄັ້ງທີ 3 ຂອງອະນຸກຳມະການ ຜູ້ອາວຸໂສອາຊຽນ.ກອງປະຊຸມອະນຸກຳມະການຜູ້ອາວຸໂສອາຊຽນໄດ້ອະພິປາຍບັນຫາວາງຂໍ້ກຳນົດກົດບັດອາຊຽນ,ພ້ອມທັງຈະໄຂກອງປະຊຸມຄັ້ງທີ 4 ຂຶ້ນທີ່ສິງກະໂປ,ສືບຕໍ່ດຳເນີນການປຶກສາຫາລືກັນກ່ຽວກັບບັນຫາກົດບັດອາຊຽນ,ເພື່ອຈະໄດ້ນຳຂໍ້ສະເໜີແນະກ່ຽວກັບການເຮັດກົດບັດອາຊຽນຕໍ່ກອງປະຊຸມປະມຸກອາຊຽນຊຶ່ງຈະໄດ້ຈັດຂຶ້ນໃນເດືອນຕຸລາທີ່ຈະມາເຖິງນີ້.

ກອງປະຊຸມປະມຸກອາຊຽນຄັ້ງທີ 11ທີ່ຈັດຂຶ້ນໃນປີທີ່ແລ້ວ ໄດ້ປະກາດສ້າງຕັ້ງອະນຸກຳມະການຜູ້ອາວຸໂສອາຊຽນ,ພາລະໜ້າທີ່ສຳຄັນແມ່ນອີງຕາມການຫັນປ່ຽນຂອງສະຖານະການໃນພາກພື້ນນີ້ແລະສາກົນ,ວາງທິດຊີ້ນຳທີ່ເໝາະສົມກັບການພັດທະນາຂອງອາຊຽນ.

ແປໂດຍ: ທອງຂຽນ

# ມາເລເຊຍຫວັງຢາກໃຫ້ອາຊຽນກັບຈີນເພີ່ມທະວີການຮ່ວມມືທາງໂທລະຄົມຕື່ມອີກ

## 马来西亚希望东盟与中国进一步加强电信合作

马来西亚副总理纳吉布表示，马来西亚希望东盟与中国共同采取措施，进一步加强电信领域合作。

ທ່ານ ນາຈິບ (NAJIB) ຮອງນາຍົກລັດຖະມົນຕີມາເລເຊຍໄດ້ສະແດງວ່າ,ມາເລເຊຍຫວັງຢາກໃຫ້ອາຊຽນກັບຈີນ ພ້ອມກັນໃຊ້ມາດຕາການເພື່ອເພີ່ມທະວີການຮ່ວມມືໃນຂົງເຂດໂທລະຄົມຕື່ມອີກ.

ໃນພິທີເປີດສາກເວທີປາຖະກະຖາລັດຖະມົນຕີຂໍ້ມູນຂ່າວສານແລະສື່ສານຂອງສັບປະດາໂທລະຄົມຈີນ--ອາຊຽນສະໄໝທີ 2 ຈັດຂຶ້ນທີ່ປີນັງນັ້ນ,ທ່ານ ນາຈິບໄດ້ກ່າວວ່າ,ນັບແຕ່ເວທີປາຖະກະຖາລັດຖະມົນຕີຂອງສັບປະດາໂທລະຄົມອາຊຽນ--ຈີນຄັ້ງທໍາອິດຈັດຂຶ້ນທີ່ປະເທດຈີນໃນປີທີ່ແລ້ວ ພ້ອມທັງໄດ້ຜ່ານ《ຖະແຫລງການປັກກິ່ງ》, ອາຊຽນກັບຈີນໄດ້ສ້າງການພົວພັນເປັນຫມູ່ຄູ່ໃນຂົງເຂດຂໍ້ມູນຂ່າວສານແລະການສື່ສານຢ່າງຫມັ້ນຄົງເປັນຕົ້ນມາ,ການຮ່ວມມື 2 ຝ່າຍໃນຂົງເຂດດັ່ງກ່າວໄດ້ມີການຄືບຫນ້າຢ່າງຕັ້ງຫນ້າ,ໄດ້ມີແຜນກໍານົດການຄາດຄິດແລະຂໍ້ສະເໜີຂອງການເພີ່ມທະວີການຮ່ວມມື. ປະຈຸບັນ ສອງຝ່າຍຕ້ອງພ້ອມກັນພະຍາຍາມສ້າງກົນໄກ ປະຕິບັດສືບຕໍ່ຕາມຫຼັງ,ເຮັດໃຫ້ການຄາດຄິດແລະຂໍ້ສະເຫນີດັ່ງກ່າວປະກົດຜົນເປັນຈິງ.ການຄາດຄິດສ້າງທາງສາຍດ່ວນຂໍ້ມູນຂ່າວສານອາຊຽນ--ຈີນເປັນການແລກປ່ຽນຂໍ້ມູນຂ່າວສານລະຫວ່າງອາຊຽນ--ຈີນທີ່ມີຄວາມສໍາຄັນທີ່ສຸດ, ມັນສາມາດຊຸກຍູ້ການພັດທະນາການຮ່ວມມືໃນຂົງເຂດທີ່ມີສ່ວນກ່ຽວຂ້ອງຂອງພາກພື້ນນີ້.

ທ່ານ ນາຈິບໃຫ້ທັດສະນະວ່າ,ຂໍ້ສະເໜີສອງຝ່າຍຮ່ວມມືເຜີຍແຜ່ເຕັກນິກປະຍຸກທີ່ມີຜົນອໍານວຍແກ່ການພັດທະນາຂໍ້ມູນຂ່າວສານແລະສື່ສານໃນຊົນນະບົດແລະເຂດຫ່າງໄກສອກຫຼີກກໍ່ມີຄວາມໝາຍສໍາຄັນຄືກັນ.ອາຊຽນແລະຈີນຕ້ອງພິຈາລະນາເຖິງເງື່ອນໄຂຕົວຈິງຂອງແຕ່ລະຝ່າຍມີອັນແຕກຕ່າງກັນ, ນັບທັງການແຕກຕ່າງກັນດ້ານເຕັກນິກແລະວັດທະນະທໍາ,ຕ້ອງພະຍາຍາມຊຸກຍູ້ການຮ່ວມມືໃນດ້ານນີ້.

ຂະນະດຽວກັນ ທ່ານ ນາຈິບໄດ້ຊີ້ອອກວ່າ,ການຮ່ວມມືໃນຂົງເຂດຄວາມປອດໄພທາງດ້ານເຄືອຂ່າຍອິນເຕີເນັດແລະຂໍ້ມູນຂ່າວສານລະຫວ່າງອາຊຽນກັບຈີນກໍ່ສໍາຄັນທີ່ສຸດ.ສອງຝ່າຍຈໍາເປັນຕ້ອງເພີ່ມທະວີການຮ່ວມມືໃນດ້ານນີ້ຕື່ມອີກ,ເພື່ອຍັບຍັ້ງຂີ້ເຫຍື້ອເຄືອຂ່າຍແລະເນື້ອໃນທີ່ມີຄວາມຫຍໍ້ທໍ້ແຜ່ລາມໄປທົ່ວທິບ. ຊຸກຊວນ ແລະ ຊີ້ນໍາຄົນທັງຫລາຍນໍາໃຊ້ເຄືອຂ່າຍອິນເຕີເນັດຢ່າງຕັ້ງຫນ້າແລະຖືກຕ້ອງ.ທ່ານຍັງກ່າວວ່າ ເພື່ອຊຸກຍູ້ການຮ່ວມມືໃນຂົງເຂດໂທລະຄົມແລະການສື່ສານລະຫວ່າງອາຊຽນກັບຈີນຕື່ມອີກ,ສອງຝ່າຍຕ້ອງພ້ອມກັນພະຍາຍາມສ້າງກົນໄກທີ່ມີສ່ວນກ່ຽວຂ້ອງ,ນັບທັງສ້າງຕັ້ງອະນຸກໍາມະການປະຕິບັດງານສ່ວນຫນຶ່ງຂຶ້ນ,ທັງຈັດການປະຊຸມອະນຸກໍາມະການດັ່ງກ່າວເປັນປະຈໍາ,ເລັ່ງລັດຈັດຕັ້ງປະຕິບັດຂໍ້ສະເຫນີທີ່ມີສ່ວນກ່ຽວຂ້ອງ.

ແປໂດຍ: ທອງຂຽນ



### 中国为东盟国家学生提供良好服务

近年来，中国突出自身优势，利用多种方式积极开展教育交流合作，为东盟国家学生留学提供了更多良好的学习条件。

# ຈີນໄດ້ສະໜອງການບໍລິການເປັນຢ່າງດີໃຫ້ແກ່ນັກສຶກສາປະເທດອາຊຽນ.

ຊຸມປີມໍ່ ໆ ມານີ້, ຈີນໄດ້ໃຊ້ທ່າແຮງອັນໂດດເດັ່ນຂອງຕົນນຳໃຊ້ຫລາຍຮູບການແລະຕັ້ງໜ້າດຳເນີນການຮ່ວມມືແລກປ່ຽນດ້ານການສຶກສາ, ໄດ້ສະໜອງໂອກາດອັນດີເລີດຫລາຍກວ່າເກົ່າໃຫ້ແກ່ນັກຮຽນນັກສຶກສາຂອງປະເທດອາຊຽນມາສຶກສາຢູ່ຈີນ.

ມະຫາວິທະຍາໄລຊິນເຜົ່າກວາງຊີ, ມະຫາວິທະຍາໄລສ້າງຄູຢູນນານຊຶ່ງເປັນສະຖາບັນການສຶກສາຊັ້ນສູງທີ່ມີບຸກຄະລາກອນ--ຄູອາຈານຢ່າງຫລວງຫລາຍແລະຢ່າງໜາແໜ້ນກວ່າໝູ່ໃນເຂດແຄ້ວນຕາເວັນຕົກສຽງໃຕ້ຂອງຈີນນັ້ນ, ໄດ້ເປີດປະຕູຕ້ອນຮັບນັກສຶກສາຂອງປະເທດອາຊຽນມາຮ່ຳຮຽນ. ທ່ານຢີຢີ່ຈົງ ຫົວໜ້າພະແນກການສຶກສາກວາງຊີໄດ້ກ່າວວ່າ: "ໃນບາດກ້າວການສ້າງສາເຂດການຄ້າເສລີຈີນ--ອາຊຽນນັ້ນ, ທັງສອງຝ່າຍຕ່າງກໍ່ມີຄວາມຕ້ອງການຢ່າງຮີບດ່ວນໃນການບຳລຸງກໍ່ສ້າງບຸກຄະລາກອນສາກົນທີ່ຍັງຄົງຄ້າງຢູ່, ການສຶກສາຊັ້ນສູງຈະມີບົດບາດເປັນອົງສະພານທີ່ສຳຄັນ".

ນັກສຶກສາທີ່ມາຈາກອາຊຽນໄດ້ຮັບນະໂຍບາຍບຸລິມະສິດ



ຢ່າງດີເລີດຈາກຈີນ. ທ່ານຢາງຕົງລິງ ປະທານສະມາຄົມນັກສຶກສາລາວຂອງວິທະຍາຄານເຕັກນິກອາຊີວະສຶກສາກິ່ງແຂວງປົກຄອງຕົນເອງເຜົ່າລື້ສິບສອງພັນນາໄດ້ເວົ້າວ່າ: "ຢູ່ທີ່ນີ້ນັກສຶກສາລາວກັບນັກສຶກສາຂອງທ້ອງຖິ່ນໄດ້ຊົມໃຊ້ 'ນະໂຍບາຍເປັນພົນລະເມືອງ' ຄືກັນກັບນັກຮຽນຂອງທ້ອງຖິ່ນດັ່ງກ່າວຈ່າຍຄ່າຮຽນຄືກັນ, ຜູ້ທີ່ມີຜົນການຮຽນດີເລີດກໍ່ຈະໄດ້ຮັບທຶນສົ່ງເສີມການສຶກສາຈາກວິທະຍາຄານ".

ຄຳນຶງເຖິງນັກສຶກສາລາວພາຍຫລັງມາຮຽນຢູ່ຈີນແລ້ວ, ອາດຈະເນື່ອງຈາກບໍ່ລື້ງເຄີຍກັບການດຳລົງຊີວິດຫລືມີແນວຄິດຫວັ່ນໄຫວຍ້ອນຄິດຮອດບ້ານຫຼາຍ, ທາງວິທະຍາຄານຈຶ່ງໄດ້ແຕ່ງອາຈານຍິງມາຮັບຜິດຊອບສະເພາະຕໍ່ພວກເຂົາເຈົ້າ, ເພື່ອດຳເນີນການບຳລຸງສຶກສາທາງດ້ານຈິດຕະວິທະຍາແລະໃຫ້ການຊ່ວຍເຫລືອທາງດ້ານຊີວິດການເປັນຢູ່.

ຜ່ານວິທີການສຶກສາດັ່ງກ່າວ, ນັກສຶກສາທີ່ມາຈາກປະເທດອາຊຽນກໍ່ຍິ່ງຊົມຊອບມາສຶກສາຢູ່ຈີນ. ວິຊາສະເພາະໃນການສຶກສາໄດ້ຂະຫຍາຍຈາກຂະແໜງວິຊາດັ້ງເດີມເຊັ່ນ:ພາສາຈີນ, ແພດພື້ນເມືອງຈີນມາເປັນວິຊາສະເພາະຫລາຍຂົງເຂດຂະແໜງວິຊາເຊັ່ນ:ວິທະຍາສາດ--ເຕັກນິກ, ນິເວດວິທະຍາ, ເສດຖະສາດ, ນິຕິສາດ, ການທ່ອງທ່ຽວ, ແພດສາດແລະການຄຸ້ມຄອງບໍລິຫານເປັນຕົ້ນ.

ໄປຄຽງຄູ່ກັບການຮ່ວມມືດ້ານການສຶກສາທີ່ຈີນຫັນໜ້າຫາອາຊຽນທີ່ "ເຊີນເຂົ້າມາ" ນັ້ນ, ກໍ່ຕັ້ງໜ້າ "ເດີນອອກໄປ", ຫຼາຍໂຮງຮຽນອີງຕາມມະໂນຄະຕິ "ສ້າງແກ່ວດອງດ້ານການສຶກສາ, ສ້າງຕັ້ງໂຮງຮຽນຂ້າມຊາດ" ໄດ້ເປັນເຈົ້າການໄປຮ່ວມມືສ້າງຕັ້ງໂຮງຮຽນຢູ່ປະເທດອາຊຽນ.

ທ່ານຈູ່ເຈີ້ນໝິງ ຮອງຫົວໜ້າຂະແໜງການຄົ້ນຄວ້າອາຊີອາຄະເນຂອງສະຖາບັນວິທະຍາສາດສັງຄົມແຂວງຢູນນານເຫັນວ່າ, ໃນສະເພາະໜ້ານີ້ການຮ່ວມມືແລະແລກປ່ຽນການສຶກສາຊັ້ນສູງລະຫວ່າງຈີນກັບບັນດາປະເທດອາຊຽນໄດ້ກ້າວໄປດ້ວຍບາດກ້າວທີ່ມີລັກສະນະແທດຈິງ, ອົງກອນການສຶກສາທີ່ພ້ອມກັນຈັດຕັ້ງຂຶ້ນ, ທາງດ້ານຮູບແບບການສ້າງໂຮງຮຽນ, ການຈັດວາງຫລັກສູດ, ການບຳລຸງສ້າງບຸກຄະລາກອນຄູອາຈານເປັນຕົ້ນໄດ້ມີການເພີ່ມຄວາມເຂັ້ມແຂງ.

ໄປຄຽງຄູ່ກັບການປະຕິຮູບລະບົບການສຶກສາຂອງຈີນ, ການຍົກສູງຄຸນນະພາບຂອງການສິດສອນ, ການປ່ຽນແປງສະພາບແວດລ້ອມການສິດສອນ, ນັກສຶກສາຂອງປະເທດອາຊຽນຈະໄດ້ຮັບການສຶກສາທີ່ເປັນແບບແຜນ, ແທດເຖິງຄວາມຈິງແລະໃຊ້ໄດ້ເປັນປະໂຫຍດ.












ຕ້ອງການຂໍ້ມູນລະອຽດ ເຊີນຕິດຕໍ່: ບໍລິສັດທ່ອງທ່ຽວ ຈຳປາລາວ

For more information, Please contact CHAMPA LAO TRAVEL

TEL:(856.21).216616. FAX:(++856.21)215260.

# ຈຳປາລາວ





ເຊີນທ່ານ ທ່ອງທ່ຽວ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.
ດິນແດນທີ່ສວຍງາມ ດ້ວຍທຳມະຊາດ,ອຸດົມຮັ່ງມີທາງ ດ້ານປະຫວັດສາດ,
ວັດທະນະທຳ ແລະຫລາຍຊົນຊາດ ຊົນເຜົ່າ,
ເປັນຕົ້ນ: ນະຄອນຫລວງວຽງຈັນ-ເມືອງມໍລະດົກໂລກຫລວງພະບາງ-
ວັດພູຈຳປາສັກ-ທົ່ງໄຫຫີນ-ນ້ຳຕົກຄອນພະເພັງ-ຫລີ່ຜີ ແລະອື່ນໆ .



主要有：
首都万象市
世界文化遗产——
　琅勃拉邦
　占芭色瓦普寺
　查尔平原（石缸平原）
　宽帕盆大瀑布
　里皮等名胜古迹

*Visit Laos P,D,R, one of the premier holiday destination, with its sunny, the beautiful nature, the rivers and the warm smiles of the local people, Rich tradition and culture and many ethnic groups. Visit Vientiane, the capitale, LuangPrabang, wat Phou temple, the plain of Jars: The world heritage sites and the big water falls KhonPhaPheng, LiPhi etc... Contact us today and you will be welcome.*

文：志平 图：叶思孔

# ໜຽນກາວ(ເຂົ້າໜົມຂຸນປີໃ
# --ອາຫານຊົນເຜົ່າຢູນນານ



## 云南民族特色食品之一年糕

云南饮食具有独特韵味，如果你去主人家做客，主人拿出年糕来招待你，那一定是好客的主人尊敬你的表现。

# ໃໝ່)







ໃນອາຫານຂອງຢູນນານ,ໝຽນກາວເປັນອາຫານປະເພດໜຶ່ງທີ່ມີລົດຊາດພິເສດ,ແລະກໍ່ແຊບຊ້ອຍອີກ.

ກິນເຂົ້າໜົມໝຽນກາວຢູ່ໄທເຮືອນຢູນນານມັນມີຄວາມໝາຍເປັນພິເສດ.ຄັນທ່ານຫາກໄປເປັນແຂກ,ເຈົ້າເຮືອນເອົາໝຽນກາວມາສູ່ແຂກ,ກໍ່ໝາຍວ່າເຈົ້າເຮືອນຮັກແຂກແພງຄືນສະແດງຄວາມເຄົາລົບນັບຖືຕໍ່ທ່ານ.ຕາມປົກກະຕິເວລາພົບລຶກງາມຍາມດີຫລືມີເລື່ອງດີສີສຸກຈຶ່ງເອົາເຂົ້າໜົມໝຽນກາວມາຊົມໃຊ້ກັບໝູ່ເພື່ອນ,ເຊັ່ນ:ງານດອງ,ສະຫຼອງວັນຄ້າຍວັນເກີດຜູ້ເຖົ້າຫລືແຂກຜູ້ມີກຽດມາຢື້ຢາມເປັນຕົ້ນ,ດັ່ງນັ້ນ,ເມື່ອໃດເຈົ້າເຮືອນຫາກເອົາເຂົ້າໜົມໝຽນກາວອອກມາສູ່ແຂກກໍ່ຖືວ່າເປັນສິ່ງທີ່ເຊີດໜ້າຊູຕາທີ່ສຸດ.

ເຂົ້າໜົມໝຽນກາວມີລັກສະນະອ່ອນນວນແລະໝຽວ,ປາກົດສີຂາວກະຈະເປັນຕາຢາກຊີມລົດຊາດເອົາແທ້.ການເຮັດເຂົ້າໜົມໝຽນກາວກໍ່ພິຖີພິຖັນເປັນພິເສດ,ຕ້ອງເອົາເຂົ້າສານໝຽວທີ່ເປັນເຂົ້າກົກມາຕຳໃຫ້ແຫຼກແຫຼວດີ, ໂດຍທົ່ວໄປຕ້ອງການໃຫ້ຜູ້ບ່າວຫັນມັງອອກແຮງຕຳຈົນແລ້ວ,ແຕ່ກໍ່ມີຊຸມໝູ່ຜູ້ສາວຕຳພ້ອມກັນ,ທັງຂັບຮ້ອງທັງຕຳເຂົ້າຕ່າງກັບອ້າຍຜູ້ບ່າວທີ່ງຽບເຫງົາເປົ່າປ່ຽວຢູ່ຜູ້ດຽວ,ຕາມມາເລີຍກາຍເປັນລັກສະນະສີສັນພິເສດເຊັ່ນ:ເພງຊາວເຂົາແລະຟ້ອນລຳທຳງານ,ການຟ້ອນລະບຳຕຳເຂົ້າທີ່ຊ່າລືທົ່ວແຂວງຢູນນານໃກ້ຫຼືໄກກໍ່ແມ່ນເກີດມາຕາມແຫຼ່ງດັ່ງກ່າວນັ້ນເອງ.ການຟ້ອນລະບຳດັ່ງກ່າວຄືນາງສາວນ້ອຍໆ 3 ຫາໆ 5 ຄົນຈັບສາກເຕັ້ນອ້ອມຄົກທັງເຕັ້ນທັງຂັບຮ້ອງຢ່າງອໍລະຊອນແວວວອນ.ຖ້າທ່ານໄດ້ຊົມພາບກັບທີ່ແລ້ວກໍ່ຄົງຈະຮູ້ສຶກກະຕຸ້ນຕັນໃຈ,ຊື່ນຊົມສະໜຸກສະໜານຫລາຍບໍ່ປອກ.



图：叶思孔



# ຊັບເຕັ້ນຊົນເຜົ່າຢີ່ປຽມລັ້ນ ໄປດ້ວຍອາລົມຮັກໄຄໄມຕີ





## 彝族跳歌情意浓

跳歌，是云南彝族人民古老的文艺活动，人人喜爱。他们在节庆、婚嫁、丧葬、祭祀、入宅 …… 无事不跳歌，无处不跳歌。甚至月圆时分也要拨动琴弦，翩翩起舞。

ອັບເຕັ້ນ,ເປັນການເຄື່ອນໄຫວສິລະປະວັນນະຄະດີທີ່ເກົ່າແກ່ຂອງຊົນເຜົ່າຢີ່ຢູນນານ,ໃຜ ໆກໍ່ນິຍົມຊົມຊອບ.ໃນງານດອງ,ງານຊາປະນະກິດສົບ,ພິທີບະບົນແລະການຍ້າຍເຂົ້າເຮືອນໃໝ່... ກໍ່ທະຍອຍກັນອັບເຕັ້ນຢູ່ທຸກ ໆແຫ່ງຕະຫຼອດຮອດເດືອນເພັງແຈ້ງທຸກເດືອນກໍ່ດີດກະຈັບປີ່ແອນອ່ອນຟ້ອນລຳຕາມໆກັນ.

ອັບເຕັ້ນເປັນກາລະເທສະຂອງຮຸ່ນໜຸ່ມຄົບຫາກັນແລະເລືອກຄູ່ເລືອກແຟນ.ງານອັບລຳຂອງຊົນເຜົ່າຢີ່ມີເປັນປະຈຳມາກຫຼາຍ,ພາຍໃນປີໜຶ່ງມີວັນທີ 5-9-15-29 ເດືອນຈຽງ,ວັນທີ 24 ເດືອນ 6 ຕາມທາງຈັນທະຄະຕິແລະວັນໄຫວ້ພະຈັນເປັນຕົ້ນ.ໃນງານອັບລຳທຳເພງ,ຊຸມຊົນພົບປະຍາດມິດແລະແຮກສ່ຽວ,ຟ້ອນລຳທຳເພງຈັ່ງແມ່ນມ່ວນຊື່ນລື່ນເລີງສຸດຂີດ.ອີງຕາມຮີດຄອງປະເພນີ,ບໍ່ວ່າຍິງຊາຍນ້ອຍໃຫຍ່ກໍ່ລ້ວນແຕ່ເຂົ້າຮ່ວມມ່ວນຊື່ນຕາມເສລີ.ສ່ວນຊາຍໜຸ່ມໄວ 15 ຫາ 16 ເຂົ້າຮ່ວມອັບເຕັ້ນ,ທຳມະດາຕົນເອງຈະຕ້ອງກຽມເຄື່ອງຂອງໄວ້ກ່ອນເປັນຕົ້ນຄືກະຈັບປີ່ຜູກແຖບຜ້າສີແດງໃສ່ເພື່ອດູດດຶງເອົາສາຍຕາຂອງໜຸ່ມ ໆ ສາວ ໆ.ສ່ວນຍິງສາວທີ່ມາຮ່ວມງານອັບລຳນັ້ນກໍ່ນຸ່ງເຄື່ອງໃໝ່ອ່ຽມ,ຮັດຜ້າອ້ຽງຮູບສາມແຈທີ່ຖັກແສ່ວປະດິດປະດອຍ,ພາຍຖົງລາຍດອກ,ມີກົ້ງຄັນຮົ່ມສີດຳ,ຫຼັ່ງໄຫຼມາເປັນຈຸເປັນໝູ່.ຜ່ານຈາກການອັບເຕັ້ນ,ໜຸ່ມຍິງຊາຍລຶ້ງເຄີຍຮູ້ຈັກກັນ,ເມື່ອຖືກຈິດຖືກໃຈກັນກໍ່ພາກັນໜີຈາກສະຖານທີ່ອັບລຳຍ່າງເຂົ້າປ່າດົງຮົ່ມເຢັນເພື່ອສະແດງຄວາມຮັກໄຄ່ໃຝ່ຫາກັນຢ່າງເຈາະຈົງ...

图：叶思孔



## 大理三月街

大理白族“三月街”是云南省遐迩闻名的物资交流大会和白族人民的传统盛大节日，每年农历三月十日至二十一日在大理古城举行。除了进行大规模的物资交流外，还举行赛马、民族歌舞等文娱体育活动。



# ຕາລີມີຕະຫລາດນັດເດືອນສາມ

"ຕະຫຼາດນັດເດືອນສາມ"ຂອງຊົນເຜົ່າປ່າຍຕາລີແມ່ນງານແລກປ່ຽນສິນຄ້າທີ່ຊ່າລືທົ່ວແຂວງຢູນນານແລະເປັນບຸນປະເພນີມະໂຫລານຂອງປະຊາຊົນຊົນເຜົ່າປ່າຍ,ເຊິ່ງຈັດຂຶ້ນຢູ່ທີ່ເມືອງເກົ່າແກ່ຕາລີຕັ້ງແຕ່ວັນທີ 10 ຫາວັນທີ 21 ເດືອນ 3 ຕາມຈັນທະຄະຕິທຸກປີ.

"ຕະຫຼາດນັດເດືອນສາມ"ຍັງເອີ້ນຊື່ວ່າຕະຫຼາດກວນອິມ,ຕາມເລົ່າສືບກັນມາວ່າຕົ້ນສະໄໝລາຊະວົງຖັງ,ໃນທ້ອງຖິ່ນຕາລີນີ້ມີມານຮ້າຍໂຕໜຶ່ງ,ແສນໂຫດຮ້າຍປ່າເຖື່ອນ,ປະຊາລາສະດອນແຫ່ງດັ່ງກ່າວຖືກມັນກົດຂີ່ມຈົນເງີຍຄໍບໍ່ຂຶ້ນມີແຕ່ນົບຟ້າໄຫວ້ແຜ່ນດິນ,ໄຫວ້ວອນອົງເທວະດາຟ້າແຖນຈົ່ງປົກປ້ອງເອົາ.ໃນລະຫວ່າງປີເຈັນກວານ(ຄ.ສ.627)ສະໄໝລາຊະວົງຖັງ,ພະກວນອິມ(ຫຼືພະອະວະໂລກິເຕສວນ)ໄດ້ອະວະຕານສູ່ເມືອງຄົນຈຶ່ງຂັບໄລ່ມານຮ້າຍໜີໄປ.ເພື່ອປ້ອງກັນມານຮ້າຍກັບຕ່າວທາວຄືນມາ,ເມື່ອຮອດວັນທີ 15 ຫາວັນທີ 21 ເດືອນສາມທຸກປີ,ພະກວນອິມກໍ່ລົງມາທຳມະເທສະໜາຢູ່ທີ່ຕາລີ,ຕາບນັ້ນຊູ່ປີ,ຊາວສາສະນິກກະຊົນທັງຍິງແລະຊາຍກໍ່ພາກັນຕັ້ງຕູບຕັ້ງຜາມສຳລັບເທສະໜາແລະທຳພິທີນົບໄຫວ້."ຕະຫຼາດນັດເດືອນສາມ"ໄດ້ກາຍເປັນງານຕະຫຼາດນັດຟັງທຳເທດພະເທດໃນວັດຫຼືຢູ່ບໍລິເວນວັດວາອາຮາມ.ໄປຄຽງຄູ່ກັບການພັດທະນາເສດຖະກິດ--ສັງຄົມ,ງານຕະຫຼາດນັດດັ່ງກ່າວໄດ້ຄ່ອຍ ໆຜັນປ່ຽນເປັນຕະຫຼາດນັດການຄ້າແລະບຸນປະເພນີປະຈຳທ້ອງຖິ່ນ.



ໄລຍະເວລາງັນບຸນ"ຕະຫຼາດນັດເດືອນສາມ"ຕາມປົກກະຕິແມ່ນ 3 ຫາ 5 ມື້,ຢ່າງຫຼາຍກໍ່ 10 ມື້.ເມື່ອເຖິງຍາມ"ຕະຫຼາດນັດເດືອນສາມ",ຂຸມຊົນພໍ່ຄ້າຊາວຂາຍທີ່ຢູ່ຖິ່ນອື່ນແດນໄກຫຼືຢູ່ເມືອງໃກ້ຄຽງ ຫຼັ່ງໄຫຼກັນມາຈາກທຸກແຫ່ງຫົນເພື່ອເຂົ້າຮ່ວມງານແລກປ່ຽນສິນຄ້າ.ທີ່ຕະຫຼາດເຕັມໄປແຕ່ສິນຄ້າປະເພດຕ່າງຕ່າງເຊັ່ນ: ຫວ້ານຢາທານົ້ງ,ອາຫານບໍລິໂພກ,ເຄື່ອງເຟີນີເຈີແລະສັດລ້ຽງໃຫຍ່,ອາດເວົ້າໄດ້ວ່າມີຄົບຊູ່ແນວ,ມັນເປັນບ່ອນລວມສູນການແລກປ່ຽນສິນຄ້າໃຫຍ່ທີ່ສຸດຂອງພາກຕາເວັນຕົກແຂວງຢູນນານ.ເພາະວ່ານອກຈາກດຳເນີນການແລກປ່ຽນສິນຄ້າງວດໃຫຍ່ແລ້ວ,ຍັງຈັດຕັ້ງທຳການເຄື່ອນໄຫວສິລະປະວັນນະຄະດີແລະກິລາກາຍະກຳຕ່າງ ໆ ເປັນຕົ້ນຄື: ການຊ່ວງມ້າແລະຟ້ອນລຳຂັບຮ້ອງຂອງຊົນເຜົ່າ. ໂດຍສະເພາະແມ່ນນັກຂີ່ມ້າສີມືເກັ່ງບັນດາຊົນເຜົ່າຜູ້ເຂົ້າຮ່ວມການຊ່ວງມ້າ ເຕົ້າໂຮມກັນຢູ່ຕີນພູຊ້າງ,ກວັດແກວ່ງໄມ້ແສ້ຟາດກົ້ນມ້າສັກຄະໂຍງຫອບໄປຍັງແຄມໜອງແສຢ່າງເລັວໄວປານເຫາະທະຍານ,ຈັ່ງແມ່ນເປັນພາບສະດຸດຕາແສນສະຫງ່າຜ່າເຜີຍເອົາແທ້.



ແປໂດຍ: ທອງຂຽນ
ກວດແກ້ໂດຍ: ສີສຸວັນ



# ກິນພືດຜັກໝາກໄມ້ດິບຄວນ

ກິນອາຫານດິບສາມາດຮັກສາທາດບຳລຸງຂອງອາຫານຕາມລົດຊາດທາດເດີມຂອງອາຫານດິບ, ໂດຍສະເພາະວິຕາມິນຂອງອາຫານບໍ່ໄດ້ຖືກທຳລາຍ. ຂໍແຕ່ວ່າປະເພດຜັກທີ່ກິນດິບໄດ້ດີທີ່ສຸດໃຫ້ກິນດິບ, ປະເພດຜັກທີ່ກິນດິບບໍ່ໄດ້ກໍ່ຢ່າຂື້ອສຸກໂພດ, ພະຍາຍາມຫລຸດຜ່ອນການເສຍຫາຍຂອງວິຕາມິນໃນອາຫານເທົ່າທີ່ຄວນ.

ແຕ່ວ່າໃນຂະນະກິນພືດຜັກໝາກໄມ້ດິບນັ້ນຄວນລະມັດລະວັງບັນຫາດັ່ງຕໍ່ໄປນີ້:

1. ຕ້ອງເອົາໃຈໃສ່ປະເພດຂອງພືດຜັກໝາກໄມ້ະມີບາງປະເພດພືດຜັກໝາກໄມ້ແມ່ນບໍ່ເໝາະສົມໃນການກິນດິບເລີຍ, ມີບາງຊະນິດໃນຂັ້ນຕອນທີ່ຍັງດິບຫຼືຍັງສົດນັ້ນມີທາດເບື່ອເຈືອປົນ, ເຊັ່ນ:ໝາກຖົ່ວເຫຼືອງ, ຖົ່ວລັນເຕົາ, ໝາກແປບແລະໝາກຖົ່ວນາງເປັນຕົ້ນຊຶ່ງເປັນອາຫານປະເພດໝາກຖົ່ວທີ່ມີສານສະໂປນິນເຈືອປົນ, ດອກກາງຂອງດິບມີສານໂກນຊີຊິນເຈືອປົນ, ມັນຕົ້ນດິບມີສານຊີອານິດທຳມະຊາດເຈືອປົນ, ອາຫານທີ່ມີສານພິດເຈືອ

## 生吃蔬菜、水果三注意

生吃蔬果，可以原汁原味地保留食品的营养，尤其使食品的维生素免遭破坏。凡是能生吃的蔬果，最好生吃。但是生吃蔬果时，也要注意一些问题，以有利于身体健康。



# ລະມັດລະວັງ 3 ປະການ

ປົນດັ່ງກ່າວລ້ວນແຕ່ຕ້ອງຜ່ານການຕົ້ມໃຫ້ສຸກເພື່ອທຳລາຍສານພິດທີ່ກ່າວມານັ້ນຈຶ່ງຮັບປະທານໄດ້,ຖ້າບໍ່ດັ່ງນັ້ນ,ຈະເຮັດໃຫ້ກະເພາະລຳໄສ້ອັກເສບ,ຖອກທ້ອງ;ມີພືດຜັກໝາກໄມ້ບາງຊະນິດເຈືອປົນສານພິດເຊັ່ນ:ຜັກປໍ່ເລັ່ງ,ຜັກແມງແຄງມີອາຊິດ ໂອຊາລິດເຈືອປົນໃນປະລິມານສູງ,ຖ້າຫາກກິນດິບຈະເຮັດໃຫ້ເກີດອາການໝາກໄຂ່ຫລັງວາຍຢ່າງກະທັນຫັນ,ນອກນັ້ນອາຊິດໂອຊາລິດຍັງມີບົດບາດກີດກັ້ນການຮັບເອົາການໂຊມພາໃຫ້ເກີດພະຍາດການໂຊມໃນເລືອດຕ່ຳ,ຍັງເປັນອັນຕະລາຍຢ່າງຮ້າຍແຮງເຖິງສະມັດຖະພາບຂອງໝາກໄຂ່ຫລັງແລະຕັບ.ປະເພດທັນຍາຫານທັງ 5 ຫ້າມບໍ່ໃຫ້ກິນດິບຢ່າງເດັດຂາດ,ເພາະວ່າເມັດພັນຂອງທັນຍາຫານ 5 ຊະນິດນັ້ນ,ເຈືອປົນທາດແຮ່ທີ່ມີສານຟີທິນ (Phytin),ເວັ້ນເສຍແຕ່ຕ້ອງຕົ້ມໃຫ້ສຸກແລ້ວ,ຖ້າເປັນຂອງດິບລະບົບຍ່ອຍອາຫານຂອງຄົນເຮົາຈະບໍ່ສາມາດຮັບເອົາໄດ້. ນອກນັ້ນ,ໝາກຖົ່ວແລະຜັກກາດຫົວດິບຊຶ່ງເປັນປະເພດພືດຜັກທີ່ມີທາດບຳລຸງຫລາຍດັ່ງກ່າວ,ກໍ່ລ້ວນແຕ່ເຈືອປົນທາດທີ່ພາໃຫ້ເກີດຕ່ອມໄທລອຍໃຄ່ພອງ,ຖ້າກິນດິບເປັນເວລາຍາວນານຈະເຮັດໃຫ້ຕ່ອມໄທລອຍໃຄ່(ຄໍຫນຽງ).ມີແຕ່ຜ່ານການປຸງແຕ່ງໃຫ້ສຸກແລ້ວຈຶ່ງສາມາດຫລຸດຜ່ອນສານປະເພດດັ່ງກ່າວໃນລະດັບສູງ.ຫົວກາລົດກິນດິບບໍ່ທໍ່ກິນສຸກ,ເພາະວ່າວິຕາມິນ Aທີ່ປົນຢູ່ໃນຫົວກາລົດນັ້ນຕ້ອງຕົ້ມສຸກແລ້ວຮ່າງກາຍຂອງຄົນຈຶ່ງຮັບເອົາໄດ້.

2 .ຄວນລະມັດລະວັງອະນາໄມການກິນດື່ມ:ການກິນອາຫານດິບຈຸດໜັກແມ່ນຕ້ອງຄຳນຶງເຖິງການຊຶມເຊື້ອຂອງເຊື້ອໂລກແລະບັນຫາຄວາມປອດໄພຂອງອາຫານ.ເວົ້າສຳລັບຄົນຜູ້ທີ່ມີພູມຕ້ານທານອ່ອນແອນັ້ນແລ້ວ,ຈຸລິນຊີ,ເຊື້ອແມ່ທ້ອງກາຝາກຍິ່ງເປັນການຂົ່ມຂູ່ຕໍ່ສຸຂະພາບ.ຜູ້ທີ່ມັກກິນອາຫານດິບສ່ວນຫລາຍໄວ້ໃຈນຳແຕ່ພືດຜັກໝາກໄມ້ມີອົງຄະທາດ,ເຫັນວ່າຢູ່ໃຕ້ກໍລະນີທີ່ໃຊ້ຫນ້ອຍຫລືບໍ່ໃຊ້ຢາຂ້າສັດຕູພືດນັ້ນ,ການກິນດິບບໍ່ເປັນພິດເປັນໄພຫຍັງ,ຊ້ຳພັດເບິ່ງຂ້າມພືດຜັກໝາກໄມ້ປະເພດດັ່ງກ່າວອາດຈະຜ່ານການນຳໃຊ້ຝຸ່ນຄອກ ຫລື ປັດໄຈ ອື່ນໆເຮັດໃຫ້ມີເຊື້ອພະຍາດກາຝາກຫຼືໄຂ່ຂອງມັນຕົກຄ້າງກໍ່ເປັນໄດ້,ຍັງຕ້ອງລະມັດລະວັງກຳຈັດເສດຕົກຄ້າງຈາກຢາປາບສັດຕູພືດໂດຍສິ້ນເຊີງ.

3 .ຜູ້ທີ່ມີອາການແພ້ຕ້ອງໃຫ້ລະມັດລະວັງ:ຖ້າສົມທຽບກັບການກິນອາຫານດິບແລ້ວ ອາຫານທີ່ຕົ້ມສຸກແລ້ວຂ້ອນຂ້າງບໍ່ອາດຈະເກີດການກະທົບອາການແພ້,ເພາະວ່າຜ່ານການປຸງແຕ່ງໃຫ້ສຸກແລ້ວ ສາມາດປ່ຽນແປງມູນສ່ວນປະກອບໂປຣຕີນຂອງອາຫານທີ່ມາຈາກພາຍນອກ.ກິນປະເພດໝາກແກ່ນເຂົ້າປົ້,ໝາກຖົ່ວດິນດິບມັກເກີດອາການແພ້ໄດ້ງ່າຍ ໆ;ປະເພດພືດຜັກໃຊ້ສຳລັບກິນຮາກແລະກ້ານມັກເກີດອາການແພ້ງ່າຍກວ່າພືດຜັກປະເພດກິນໃບ.

文：陆 蕊
ແປໂດຍ: ທອງຂຽນ

# ກິນເຂົ້າເຊົ້າ

chī zǎo cān
吃 早 餐

zǎo shang hǎo ! huān yíng guāng lín。
——早 上 好 欢 迎 光 临
-- ອະລຸນສະຫວັດ! ຍິນດີຕ້ອນຮັບທ່ານທີ່ມາອຸດໜູນ.

zǎo shang hǎo
——早 上 好!
-- ອະລຸນສະຫວັດ! (ສະບາຍດີ!)

xū yào diǎn shén me
——需 要 点 什 么?
-- ທ່ານຕ້ອງການອາຫານຊະນິດໃດ!

qǐng gěi wǒ yī bēi dòu jiāng yī gè
——请 给 我 一 杯 豆 浆，一 个
nǎi yóu miàn bāo yī gè jiān jī dàn
奶 油 面 包，一 个 煎 鸡 蛋，
xiè xiè
谢 谢。
-- ເອົານົມຖົ່ວຈອກໜຶ່ງ, ເຂົ້າຈີ່ເນີຍ 1 ກ້ອນ, ໄຂ່ດາວ 1 ໜ່ວຍໃຫ້ເຮົາແດ່, ຂອບໃຈ.

wǒ men tuī chū le yī zhǒng xīn kǒu
——我 们 推 出 了 一 种 新 口
wèi de miàn bāo nín yào shì shì ma
味 的 面 包，您 要 试 试 吗?
-- ພວກເຮົາໄດ້ຜະລິດເຂົ້າຈີ່ຊະນິດລົດຊາດໃໝ່ອອກມາ, ທ່ານຢາກລອງຊີມເບິ່ງບໍ່?

lái yī gè ba
——来 一 个 吧!
-- ຄັນຊັ້ນກໍ່ເອົາກ້ອນໜຶ່ງມາລອງເບິ່ງ.

dòu jiāng yào fàng táng ma
——豆 浆 要 放 糖 吗?
-- ນົມຖົ່ວເຫຼືອງຊິໃສ່ນ້ຳຕານບໍ່?

bú xiè xiè wǒ bú xǐ huan hē tián de
——不，谢 谢，我 不 喜 欢 喝 甜 的。
-- ບໍ່ຕ້ອງດອກ,ຂອບໃຈລະເຮົາບໍ່ມັກກິນຫວານ.

nín de jiān jī dàn yào jǐ chéng shú
——您 的 煎 鸡 蛋 要 几 成 熟。
-- ໄຂ່ດາວຂອງທ່ານຕ້ອງການໃຫ້ສຸກສ່ຳໃດ?

wǔ chéng
——五 成。
-- ສຸກ 50 ເປີເຊັນ.

qǐng shāo děng nín de zǎo cān mǎ shàng
——请 稍 等，您 的 早 餐 马 上
hǎo
好。
-- ກະລຸນາລໍຖ້າຈັກໜ່ອຍ,ອາຫານເຊົ້າຂອງທ່ານກໍ່ຈະແຕ່ງແລ້ວໂລດດອກ.

hǎo de xiè xiè
——好 的，谢 谢。
-- ເອີ,ຂອບໃຈລະເດີ້!















《占芭》杂志老挝发行、销售代理处：　电话：00856-21-213191

ຈຳປາ ຮ້ານ ແສງດາວຂາຍປຶ້ມ　Tel:00856-21-213191


Welcome to Laos... Land of Timeless Beauty
ການບິນລາວ
Lao Airlines
The Beauty of Lao Hospitality